# ຊີວິດຂອງສາວົກ

## ບົດຮຽນທີ 1

## ເຊື່ອສນິດໃນພຣະຄຣິດ ( ໂຢຮັນ 15:1-17 )

ບົດຮຽນພຣະຄັມພີນີ້ຈະຊ່ວຍທ່ານໃຫ້ເຂົ້າໃຈວ່າການເຊື່ອສນິດໃນອົງພຣະຄຣິດມີຄວາມຫມາຍຢ່າງໃດ, ແລະຈະຊ່ວຍໃຫ້ທ່ານມີໂອກາດໄດ້ໂອ້ລົມໃນສິ່ງທີ່ທ່ານຈະກະທຳ ເພື່ອຊ່ວຍໃຫ້ທ່ານເພັ່ງເລັງໃສ່ ການເຊື່ອສນິດໃນພຣະຄຣິດ.

1. ອ່ານພຣະທັມ ໂຢຮັນ 15:1-17
2. ຕອບຄຳຖາມຕໍ່ໄປນີ້ ຕາມທີ່ໄດ້ອ່ານໃນພຣະຄັມພີຕອນນີ້ (ໂຢຮັນ 15:1-17 ).
3. ຕໍ່ໄປທ່ານຈະແບ່ງປັນ ຂັ້ນທີ 1 ກັບເພື່ອນຄົນນຶ່ງ, ຂັ້ນທີ2 ກັບເພື່ອນສາມຄົນ, ແລະຂັ້ນທີ່ສາມກັບເພື່ອນເຈັດຄົນ.

## ຂັ້ນທີ່ 1

1. ໂດຍສ່ວນຕົວຂອງຂ້າພະເຈົ້າ ຂ້າພະເຈົ້າພົບວ່າພຣະທັມ ໂຢຮັນ 15:1-17 ( ຈົ່ງຫມາຍຕົນກາໃສ່ຂໍ້ດຽວ )

   [ ] ໄດ້ທ້າທາຍຂ້າພະເຈົ້າ

   [ ] ເຮັດໃຫ້ຂ້າພະເຈົ້າສັບສົນບໍ່ເຂົ້າໃຈ

   [ ] ປະເລົ້າປະໂລມໃຈຂ້າພະເຈົ້າ

   [ ] ເຮັດໃຫ້ຂ້າພະເຈົ້າ ຢ້ານກົວ

   [ ] ຟື້ນຟູຈິດໃຈຂ້າພະເຈົ້າໃຫມ່ອີກ

   [ ] ເຄັ່ງຄັດຫຼາຍໂພດ

   [ ] ອື່ນໆ

2. ໃນເວລາທ່ານອ່ານພຣະທັມໂຢຮັນ 15:1-17 ນັ້ນ ຂໍໃຫ້ທ່ານຄິດວ່າພຣະເຢຊູຊົງເວົ້າກັບທ່ານ ພຣະອົງຊົງກ່າວວ່າ:

   __ ເຮົາຮັກທ່ານ (ຂໍ້ທີ 9 )

   __ ທ່ານເປັນມິດສະຫາຍຂອງເຮົາ (ຂໍ່ທີ 15 )

   __ ເຮົາໄດ້ເລືອກເອົາທ່ານ( ຂໍ້ທີ 16 )

   __ ເຮົາໄດ້ເລືອກເອົາພວກທ່ານແລະໄດ້ແຕ່ງຕັ້ງທ່ານ ເພື່ອໃຫ້ເກີດຜົນ ( ຂໍ້ທີ 16 )

   __ ເຮົາໄດ້ເວົ້າກັບທ່ານ ເພື່ອຄວາມຍິນດີຂອງທ່ານຈະຄົບບໍຣິບູນ ( ຂໍ້ທີ 11 )

3. ທ່ານມີຄວາມຮູ້ສຶກໃນໃຈຢ່າງໃດ ທີ່ອົງພຣະເຢຊູຊົງກ່າວກັບທ່ານໃນຂໍ້ພຣະຄັມພີນັ້ນ ( ຈົ່ງຫມາຍຕົນກາຂໍ້ດຽວ )

   [ ] ສັຣເສີນພຣະເຈົ້າ

   [ ] ອົງພຣະຜູ້ເປັນເຈົ້າ, ພຣະອົງບໍ່ໄດ້ແນໃສ່ຂ້າພຣະອົງດອກ

   [ ] ຂ້າພຣະອົງບໍ່ມີຄ່າສຳລັບພຣະອົງ

   [ ] ດີຫຼາຍ, ລົງມືເຮັດດຽວນີ້ເທາະ

   [ ] ອື່ນໆ

## <u>ຂັ້ນທີ</u> ໒

1. ພຣະເຢຊູຊົງກ່າວວ່າ ຖ້າຂ້າພະເຈົ້າເຂົ້າສນິດໃນຄວາມຮັກຂອງພຣະອົງ, ຂ້າພະເຈົ້າຕ້ອງຮັກສາພຣະບັນຍັດຂອງພຣະອົງ. ຊຶ່ງເຮັດໃຫ້ຂ້າພະເຈົ້າມີຄວາມຮູ້ສຶກວ່າ... ( ໝາຍຕີນກາໃສ່ຂໍ້ດຽວ )

   [ ] ພຣະອົງພະຍາຍາມຍົວະເຍົ້າໃຫ້ຂ້າພະເຈົ້າຍອມເຊື່ອຟັງ

   [ ] ພຣະອົງກຳລັງໄຂຄວາມລັບວ່າ ພຣະອົງເຂົ້າສນິດກັບພຣະບິດາຢ່າງໃດ

   [ ] ພຣະອົງຮຽກຮ້ອງຈາກຂ້າພະເຈົ້າຫຼາຍໂພດ

   [ ] ພຣະອົງບໍ່ໄດ້ຮັກຂ້າພະເຈົ້າ

   [ ] ພຣະອົງຢາກໃຫ້ຂ້າພະເຈົ້າເປັນມິດສະຫາຍຂອງພຣະອົງ

   [ ] ເປັນທາງທີ່ດີທີ່ສຸດ ເພາະຈະໄດ້ສະແດງຄວາມຮັກຕໍ່ພຣະອົງ

2. ຕາມທີ່ຂ້າພະເຈົ້າອ່ານໃນຂໍ້ພຣະຄັມພີນັ້ນ ພຣະຄຣິດຊົງແຕ່ງຕັ້ງຂ້າພະເຈົ້າ ເພື່ອໃຫ້ເກີດຜົນ ແລະຜົນຂອງຂ້າພະເຈົ້າຈະຕັ້ງຢູ່ຖາວອນ. ຂ້າພະເຈົ້າຮູ້ສຶກວ່າ ( ຈົ່ງໝາຍຕີນກາໃສ່ ສອງຂໍ້ )

   [ ] ຂອບພຣະຄຸນພຣະເຈົ້າຢ່າງສູງ

   [ ] ຍັງບໍ່ພຽງພໍ

   [ ] ມີຄວາມຍິນດີຢ່າງໃຫຍ່ຫຼວງ

   [ ] ມີຄວາມຢ້ານກົວ

   [ ] ໄດ້ຮັບການຊອ້ານຊູແຮງຂຶ້ນອີກ

   [ ] ເປັນຜູ້ພ່າຍແພ້

   [ ] ໝັ້ນໃຈເພີ້ມຂຶ້ນ

   [ ] ມີຄວາມຮ້ອນຮົນໃຈໃນວຽກງານພຣະເຈົ້າ

   [ ] ບໍ່ມີຄວາມແຕກຕ່າງແຕ່ຢ່າງໃດ

## <u>ຂັ້ນທີ</u> 3

1. ສຳລັບຂ້າພະເຈົ້າເອງ ການເຂົ້າສນິດໃນພຣະຄິດນັ້ນຂ້າພະເຈົ້າຈຳເປັນຕ້ອງ: <u>( ຂໍ້ທີ 7, 9, 10, 12 )</u>

   ______________________________________________________________________________

   ______________________________________________________________________________

2. ອົງພຣະເຢຊູຊົງກ່າວຕໍ່ຂ້າພະເຈົ້າຜ່ານພຣະທັມ ໂຢຮັນ 15:1-17 ຂ້າພະເຈົ້າຈະຕອບສນອງພຣະອົງພາຍໃນເຈັດວັນຂ້າງໜ້ານີ້ ຂ້າພະເຈົ້າຈະເອົາໃຈໃສ່ເພື່ອເຂົ້າສນິດໃນພຣະຄຣິດໂດຍກະທຳດັ່ງຕໍ່ໄປນີ້: ( ຢ່າງນ້ອຍ 3 ຢ່າງ )

   -_____________________________________________________________________________

______________________________________________________________________________

______________________________________________________________________________

# **ຄຳຕອບ**

## ຂັ້ນທີນຶ່ງ:

1. ພຣະອົງຊົງທ້າທາຍຂ້າພະເຈົ້າ
2. ເຮົາໄດ້ເລືອກເອົາພວກທ່ານ ແລະໄດ້ແຕ່ງຕັ້ງທ່ານ ເພື່ອໃຫ້ເກີດຜົນ ( ຂໍ້ທີ 16 )
3. ຂ້າພຣະອົງຊົງຕ່ຳຕ້ອຍ ( ແຕ່ພຣະອົງຊົງຍົກຂຶ້ນ )

## ຂັ້ນທີສອງ:

1. ພຣະອົງຊົງໃຫ້ຂ້າພຣະເຈົ້າເປັນມິດສະຫາຍຂອງພຣະອົງ
2. - ຂອບພຣະຄຸນພຣະເຈົ້າ
3 - ຂ້າພະເຈົ້າໄດ້ຮັບການຊ່ວຍຊູແຮງຂຶ້ນອີກ

## ຂັ້ນທີສາມ:

1. ຮັກສາພຣະບັນຍັດຂອງພຣະອົງ
2. - ອ່ານພຣະຄັມພີ
3 - ອະທິຖານ
4 - ບໍ່ຂາດການປະຊຸມ (ນະມັສການ, ສາມັກຄີທັມ )

( ຈົບບົດຮຽນທີ 1 )

# ຊີວິດຂອງສາວົກ

## ບົດຮຽນທີ 2

## <u>ຈົ່ງຕາມເຮົາມາ</u>

ຄໍາເຊື້ອເຊີນຂອງອົງພຣະເຢຊູເປັນຄໍາຮຽກເອີ້ນແບບງ່າຍໆ ທີ່ຊົງຮຽກເອີ້ນຄົນທັງຫຼາຍມາເປັນສາວົກຂອງພຣະອົງ ແລະຄໍາສັ່ງຂອງພຣະອົງກໍເປັນຄໍາສັ່ງແບບງ່າຍໆ ທີ່ຊົງສັ່ງບັນດາຜູ້ເປັນສາວົກຂອງພຣະອົງໃຫ້ສ້າງສາວົກຕໍ່ໆ ໄປ. ທ່ານເປັນສາວົກຂອງພຣະເຢຊູແລ້ວ ແລະກໍາລັງສ້າງຄົນອື່ນໃຫ້ເປັນສາວົກແມ່ນບໍ່? ການສຶກສາພຣະຄໍາພີຕໍ່ໄປນີ້ຈະເປີດເຜີຍໃຫ້ທ່ານເຫັນວ່າສາວົກຄືຜູ້ໃດ ແລະວຽກງານຂອງສາວົກນັ້ນມີຫຍັງແດ່. ເມື່ອທ່ານສຶກສາບົດຮຽນບົດນີ້ຈົບແລ້ວທ່ານຈະສາມາດ.....

- ຮູ້ເຖິງຄວາມໝາຍ 3 ຢ່າງຂອງຄໍາວ່າ "ສາວົກ" ຕາມທີ່ກ່າວໄວ້ໃນພຣະຄໍາພີໃໝ່.
- ບອກໄດ້ວ່າແມ່ນຫຍັງຄືພຣະປະສົງ 3 ປະການຂອງພຣະເຢຊູ ກ່ອນສິ່ງອື່ນທັງໝົດ.
- ອະທິບາຍບຸກຄະລິກ 3 ປະການຂອງສາວົກ ຕາມທີ່ອົງພຣະເຢຊູຊົງກ່າວໄວ້.
- ອະທິບາຍດ້ວຍຕົວທ່ານເອງໄດ້ວ່າ ການເປັນສາວົກມີຄວາມໝາຍຕໍ່ທ່ານເອງຢ່າງໃດ.

ຈົ່ງເຮັດບົດຮຽນດັ່ງຕໍ່ໄປນີ້ໃຫ້ສໍາເຣັດ ຫຼັງຈາກທ່ານຕອບຄໍາຖາມທຸກຂໍ້ແລ້ວກະຣຸນາໃຊ້ຄໍາຕອບຢູ່ຕອນທ້າຍບົດຮຽນນີ້ກວດໃສ່ກັບຄໍາຕອບຂອງທ່ານ.

1. ຄໍາວ່າ "ສາວົກ" ມີຄວາມໝາຍເຖິງ 3 ຢ່າງດ້ວຍກັນໃນພຣະຄໍາພີໃໝ່. ປະການທໍາອິດ, ເປັນຄໍາເວົ້າທົ່ວໄປທີ່ໝາຍເຖິງ ຄົນຜູ້ນຶ່ງ ຫຼືຄົນກຸ່ມນຶ່ງ ທີ່ເປັນ "ຜູ້ຕິດຕາມ" ຄຣູສອນຫຼືຜູ້ນໍາຂອງຄົນ. ກະຣຸນາອ່ານພຣະທັມມາຣະໂກ 2:18 ແລ້ວຂຽນຄໍາຕອບລົງຂ້າງລຸ່ມນີ້ ທັງຜູ້ຕິດຕາມແລະຜູ້ນໍາ ວ່າມີໃຜແດ່:

ກ. ________________________________________________________________________________

ຂ. ________________________________________________________________________________

ຄ. ________________________________________________________________________________

2. ຄໍາວ່າ "ສາວົກ" ໃນພຣະຄໍາພີໃໝ່ ໝາຍເຖິງ "ອັຄສາວົກ 12 ຄົນ." ອ່ານພຣະທັມມາຣະໂກ 3:14 ແລ້ວອ້າງເຖິງເຫດຜົນ 2 ປະການວ່າເປັນຫຍັງພຣະເຢຊູຈຶ່ງຊົງເລືອກເອົາພວກເພິ່ນ.

ກ. ________________________________________________________________________________

ຂ. ________________________________________________________________________________

3. ອົງພຣະເຢຊູກໍໄດ້ໃຊ້ຄໍາວ່າ "ສາວົກ" ເພື່ອຕີຄວາມໝາຍວ່າ "ບັນດາຜູ້ຕິດຕາມທີ່ເຮັດຕາມນໍ້າພຣະທັຍພຣະອົງ" ພຣະອົງຊົງກ່າວວ່າສາວົກຂອງພຣະອົງຕ້ອງປະຖິ້ມຄອບຄົວ, ຊັບສິ່ງຂອງ, ຫຼືສລະທຸກສິ່ງທີ່ເປັນອຸປສັກກີດຂວາງໃນການຕິດຕາມພຣະອົງ (ລູກາ 14:26-33). ເມື່ອຄົນໃດຄົນນຶ່ງເລີ້ມຕົ້ນຕິດຕາມພຣະເຢຊູ, ພຣະອົງຊົງກະທໍາຢ່າງໃດ?

(ກະຣຸນາອ່ານພຣະທັມ ລູກາ 9:57-62; ແລະພຣະທັມໂຢຮັນ 6:64-66 ເພື່ອໃຫ້ເຂົ້າໃຈເພີ້ມຂຶ້ນ)

4. ຈົ່ງຈັບຄູ່ຈາກທາງຂວາໄປໃສ່ທາງຊ້າຍໃຫ້ຖືກຕ້ອງ ຊຶ່ງເປັນຄໍາອະທິບາຍຂອງຄໍາວ່າ "ສາວົກ" ທີ່ມີຄວາມໝາຍຖືກຕ້ອງທີ່ສຸດ ໃນພຣະຄໍາພີໃໝ່.

_ ກ. ນະທານາເອນ (ໂຢຮັນ 1:45 ) (1 ) ເປັນຄຳທີ່ໃຊ້ສຳລັບຜູ້ທີ່ຕິດຕາມຜູ້ນຳຄົນໃດຄົນນຶ່ງ.

_ ຂ. ຊັກຂາຍ ( ລູກາ 19:8 ) (2 ) ເປັນຄົນນຶ່ງ ໃນຈຳນວນອັຄສາວົກ 12 ຄົນ.

_ ຄ. ສາວົກຂອງໂມເຊຄົນນຶ່ງ (ໂຢຮັນ 9:28) (3 ) ເປັນຄົນນຶ່ງໄດ້ກະທຳຕາມນ້ຳພຣະທັຍພຣະເຢຊູ

5. ຈົ່ງຂຽນຄວາມໝາຍຂອງຄຳວ່າ "ສາວົກ" 3 ຢ່າງ ຕາມທີ່ກ່າວໄວ້ໃນພຣະຄັມພີໃໝ່ ລົງຂ້າງລຸ່ມນີ້

ກ. ________________________________________

ຂ. ________________________________________

ຄ. ________________________________________

6. ຄຳວ່າ "ສາວົກ" ເປັນຄຳທີ່ໃຊ້ເປັນປະຈຳໃນພຣະທັມຂ່າວປະເສີດ 4 ເຫຼັ້ມ ແລະໃນພຣະທັມກິຈການ ເພື່ອຊີ້ໃຫ້ເຫັນເຖິງຜູ້ຕິດຕາມອົງພຣະເຢຊູຄຣິດ. ການເປັນສາວົກນັ້ນ ພວກເພິ່ນຕ້ອງປະຕິບັດຕາມຄຳຮຽກເອີ້ນຂອງອົງພຣະເຢຊູ. ພຣະເຢຊູຊົງສັ່ງສອນວ່າ ຜູ້ເປັນສາວົກຂອງພຣະອົງຕ້ອງຮັກພຣະອົງຫຼາຍກວ່າສິ່ງອື່ນໆ. ກະຣຸນາອ່ານພຣະທັມ ລູກາ 14:26-33 ແລ້ວຂີດເສັ້ນຈາກຂໍ້ຄວາມທາງຊ້າຍໄປໃສ່ຂໍ້ພຣະຄັມພີຢູ່ທາງຂວາໃຫ້ຖືກຄູ່ ບົດຮຽນນີ້ໄດ້ສັ່ງສອນພວກເຮົາວ່າ "ພຣະຄຣິດ" ຕ້ອງເປັນທີນຶ່ງ ແລະສຳຄັນກວ່າໝົດທຸກສິ່ງ ທີ່ກ່າວໄວ້ຂ້າງລຸ່ມນີ້.

ກ. ບຸກຄົນ 1. ລູກາ 14:33

ຂ. ຄວາມປະສົງ 2. ລູກາ 14:27

ຄ. ຊັບສົມບັດ 3. ລູກາ 14:26

7. ຈົ່ງອ່ານພຣະຄັມພີ ກິຈການ 4:18-37 ແລ້ວຂຽນຂໍ້ພຣະຄັມພີທີ່ເປັນຕົວຢ່າງວ່າສາວົກຂອງພຣະເຢຊູ ຮັກພຣະອົງຫຼາຍກວ່າສິ່ງອື່ນທັງໝົດ ໃສ່ຊ່ອງຫວ່າງຂ້າງລຸ່ມນີ້:

ກ. ບຸກຄົນ: ____________________________________

ຂ. ຄວາມປະສົງ: __________________________________

ຄ. ຊັບສົມບັດ: __________________________________

8. ສາວົກຂອງພຣະເຢຊູທຸກຄົນຕ້ອງຄິດໄລ່ຄ່າຄວາມເສັຽຫາຍໃນການຕິດຕາມພຣະອົງເບິ່ງວ່າ ເສັຽຫາຍເທົ່າໃດ. ຈົດຊື່ທຸກຄົນ, ທຸກສິ່ງ ທີ່ທ່ານເຫັນວ່າສຳຄັນກວ່າອົງພຣະເຢຊູ ໃນຊີວິດຂອງທ່ານ.

ກ. ຊື່ບຸກຄົນ: __________________________________

ຂ. ຄວາມປະສົງ: __________________________________

ຄ. ຊັບສົມບັດ: __________________________________

9. "ອົງພຣະຜູ້ເປັນເຈົ້າ" ຄືເຄັດລັບ ສຳລັບການເປັນສາວົກ. ຖ້າເຮົາທາກຍອມຮັບດ້ວຍຄວາມຈິງວ່າພຣະເຢຊູຊົງເປັນ "ອົງພຣະຜູ້ເປັນເຈົ້າ" ໃນທຸກແງ່ມຸມຂອງຊີວິດເຮົາ, ພຣະວິນຍານບໍຣິສຸດກໍຊົງສະຖິດໃນເຮົາຢ່າງສົມບູນ. ພຣະອົງຊົງປະທານສິ່ງຈຳເປັນໃຫ້ແກ່ເຮົາ ເພື່ອໃຫ້ພວກເຮົາເຮັດຕາມນ້ຳພຣະທັຍແລະເຮັດເຫມືອນພຣະອົງ. ຈົ່ງອ່ານພຣະທັມ ໂຢຮັນ 15:5 ແລະຕື່ມຂໍ້ຄວາມໃສ່ຊ່ອງຫວ່າງຕໍ່ໄປນີ້: ...ຜູ້ທີ່ເຂົ້າສນິດໃນເຮົາແລະເຮົາເຂົ້າສນິດໃນຜູ້ນັ້ນແມ່ນຜູ້ນັ້ນແຫຼະ, ຈະເກີດຜົນຫຼາຍ ເພາະຖ້າແຍກຈາກເຮົາແລ້ວພວກທ່ານ ___________ ສິ່ງໃດໄດ້.

10. ອົງພຣະເຢຊູຊົງກ່າວເຖິງລັກສະນະ 3 ຢ່າງຕໍ່ໄປນີ້ທີ່ຊີ້ໃຫ້ເຫັນວ່າພຣະອົງເຂົ້າສນິດໃນເຮົາ ແລະເຮົາເຂົ້າສນິດໃນ

ພຣະອົງ. ຈົ່ງເລືອກຂໍ້ພຣະຄັມພີຈາກທາງຂວາໄປໃສ່ຂໍ້ຄວາມທາງຊ້າຍໃຫ້ຖືກຕ້ອງ.

_ ກ. ຍອມເຊື່ອຟັງ 1. ລູກາ 6:46

_ ຂ. ຄວາມຮັກ 2. ໂຢຮັນ 15:8

_ ຄ. ເກີດຜົນ 3. ໂຢຮັນ 13:34-35

11. ການຍອມເຊື່ອຟັງເປັນກຸນແຈໄຂໄປສູ່ຄວາມຮັກ ແລະການເກີດຜົນ. ເຄັດລັບຂອງການເປັນສາວົກນັ້ນຄືການຍອມເຊື່ອຟັງ ພຣະ ________ ຂອງອົງພຣະເຢຊູ. ອ່ານຂໍ້ພຣະຄັມພີຕໍ່ໄປນີ້ ແລ້ວຂຽນເປັນຄຳເວົ້າຂອງທ່ານເອງໃສ່ຕາມຫົວຂໍ້ຂ້າງລຸ່ມນີ້ ວ່າທ່ານໄດ້ຮັບຜົນປໂຍດຫຽັງແດ່ຈາກການຍອມເຊື່ອຟັງພຣະບັນຍັດຂອງພຣະເຢຊູ.

ກ. ໂຢຮັນ 15:10 ______________________________________________

ຂ. ໂຢຮັນ 14:21 ______________________________________________

ຄ. ໂຢຮັນ 13:34-35 ___________________________________________

ງ. ໂຢຮັນ 13:17 ______________________________________________

12. ການຍອມເຊື່ອຟັງພຣະບັນຍັດພຣະເຢຊູ ຕ້ອງກະທຳ 2 ຢ່າງຄື ຕ້ອງຮູ້ຈັກພຣະບັນຍັດ ແລະ ໃຊ້ພຣະບັນຍັດໃນຊີວິດຂອງທ່ານ. ທ່ານຮູ້ຈັກພຣະບັນຍັດເຫຼົ່ານັ້ນບໍ່? ທ່ານຈຳເປັນຕ້ອງຮູ້ຈັກພຣະບັນຍັດເຫຼົ່ານັ້ນໃຫ້ດີຂື້ນດ້ວຍການສຶກສາພຣະຄຳຂອງພຣະເຈົ້າແມ່ນບໍ່? ທ່ານເຮັດຕາມຄຳສັ່ງຂອງອົງພຣະເຢຊູຊົງສັ່ງຫຼືບໍ່? ອ່ານຂໍ້ພຣະຄັມພີຕໍ່ໄປນີ້ ແລ້ວຂຽນເປັນຄຳເວົ້າຂອງທ່ານເອງໃສ່ຕາມຫົວຂໍ້ຂ້າງລຸ່ມນີ້ ວ່າພຣະເຢຊູຊົງເນັ້ນຫນັກບ່ອນໃດ:

ກ. ມັດທາຍ 5:19-20 ___________________________________________

ຂ. ມັດທາຍ 7:21, 24-27 _______________________________________

ຄ. ມັດທາຍ 28:19-20 __________________________________________

ງ. ຢາໂກໂບ 1:22 _____________________________________________

13. ເຮົາຈະໃຫ້ຄົນອື່ນເຫັນໄດ້ຢ່າງໃດວ່າເຮົາຮັກພຣະຄຣິດ?

______________________________________________________________

14. ສ່ວນຫຼາຍພວກເຮົາຍອມຮັບວ່າ ເຮົາບໍ່ຍອມເຊື່ອຟັງພຣະເຢຊູເທົ່າທີ່ຄວນ. ແຕ່ເຖິງຢ່າງໃດກໍຕາມ, ພຣະທັມຟີລິບປອຍ 2:13 ກ່າວໄວ້ວ່າ "ເພາະວ່າແມ່ນພຣະເຈົ້າເປັນຜູ້ຊົງກະທຳການຢູ່ພາຍໃນເຈົ້າທັງຫຼາຍ ໃຫ້ມີໃຈປາຖນາ ແລະໃຫ້ເຮັດໄປເພື່ອຊອບພຣະທັຍຂອງພຣະອົງ." ພຣະເຢຊູຊົງທຳງານພາຍໃນຊີວິດສາວົກຂອງພຣະອົງ ແລະເພີ້ມກຳລັງຄວາມສາມາດເພື່ອໃຫ້ພວກເພິ່ນຍອມເຊື່ອຟັງພຣະອົງ. ອັຄສາວົກກໍເປັນພຽງມະນຸດທັມມະດາ ແຕ່ວ່າພວກເພິ່ນໄດ້ຕັດສິນໃຈອັນເດັດດ່ຽວເປັນພິເສດ ເພື່ອຕິດຕາມພຣະຄຣິດ. ຈົ່ງພິຈາຣະນາໃນເຣື່ອງຕໍ່ໄປນີ້ເບິ່ງວ່າພຣະເຢຊູຊົງສັ່ງສອນສາວົກຂອງພຣະອົງຢ່າງໃດ. ພຣະອົງຊົງສັ່ງ-ພວກເພິ່ນຍອມເຊື່ອຟັງ. ພວກເພິ່ນໄດ້ຮຽນຈາກການປະຕິບັດ ຕາມທີ່ພຣະເຢຊູຊົງສັ່ງສອນເພິ່ນ. ຫຼັງຈາກນັ້ນ, ອົງພຣະເຢຊູຊົງໂອ້ລົມກັບພວກເພິ່ນເຖິງຄວາມຫມາຍໃນຄຳສັ່ງສອນຂອງພຣະອົງ. ຂໍໃຫ້ທ່ານຂຽນສິ່ງທີ່ທ່ານຄິດວ່າຈະເຮັດໄດ້ ຖ້າຫາກພຣະເຢຊູຊົງສັ່ງໃຫ້ທ່ານເຮັດດັ່ງຕໍ່ໄປນີ້:

ກ. ອົງພຣະເຢຊູຊົງຮຽກຮ້ອງໃຫ້ສາວົກຂອງພຣະອົງປະຖິ້ມສິ່ງທີ່ພວກເພິ່ນກຳລັງເຮັດຢູ່ ແລ້ວຕາມພຣະອົງ ໄປ. ອັນເດອາ, ເປໂຕ, ຢາໂກໂບ, ແລະໂຢຮັນ ໄດ້ປະວຽກງານຫາປາຂອງເພິ່ນແລ້ວຕິດຕາມອົງພຣະເຢຊູ ( ມັດທາຍ 4:18-22 ) ທ່ານມັດທາຍເປັນຜູ້ເກັບພາສີໄດ້ປະວຽກງານຂອງເພິ່ນ( ມັດທາຍ 9:9 ) ຖ້າພຣະເຢ

ຊູສັ່ງທ່ານໆ ຈະເຮັດຢ່າງໃດ?

______________________________________________________________________

ຂ. ອົງພຣະເຢຊູຊົງສັ່ງໃຫ້ທ່ານເປໂຕ ໄປຕຶກປາ, ເອົາເງິນນຶ່ງຫຼຽນຈາກປາກປາ ແລ້ວໄປເສັຽພາສີ ( ມັດທາຍ 17:27 ) ຖ້າພຣະເຢຊູສັ່ງທ່ານໆ ຈະເຮັດຢ່າງໃດ?

______________________________________________________________________

ຄ. ພຣະເຢຊູຊົງສັ່ງອັຄສາວົກໄປຈູງລໍນ້ອຍມາໃຫ້ພຣະອົງ ຖ້າເຈົ້າຂອງລໍຖາມກໍໃຫ້ຕອບວ່າ "ນາຍຕ້ອງການ" (ມາຣະໂກ 11:3 ) ຖ້າອົງພຣະເຢຊູຊົງສັ່ງທ່ານໃຫ້ໄປຂັບເອົາຣົດກະບະທີ່ຈອດຢູ່ຂ້າງທາງ ທ່ານຈະເຮັດຢ່າງໃດ ໂດຍສະເພາະແລ້ວ ທ່ານຕ້ອງຕອບຄຳຖາມເຈົ້າຂອງຣົດວ່າ "ນາຍຕ້ອງການ" ?

-____________________________________________________________________

ງ. ອົງພຣະເຢຊູຊົງສັ່ງໃຫ້ທ່ານຟີລິບລ້ຽງອາຫານ ຫ້າພັນຄົນ ທ່ານຟີລິບຄັດຄ້ານວ່າມັນເປັນໄປບໍ່ໄດ້. ແຕ່ເຖິງຢ່າງໃດກໍຕາມ, ທ່ານອັນເດອາຖວາຍອາຫານທີ່ໄດ້ຈາກເດັກນ້ອຍແກ່ອົງພຣະເຢຊູ ທັງໆ ທີ່ຮູ້ວ່າອາຫານບໍ່ພຽງພໍ ( ໂຢຮັນ 6:5-11 ) ຖ້າພຣະເຢຊູຊົງສັ່ງທ່ານໆ ຈະເຮັດຢ່າງໃດ?

______________________________________________________________________

ຈ. ອົງພຣະເຢຊູຊົງສັ່ງອັຄສາວົກໃຫ້ອະທິຖານທີ່ສວນເຄັດເຊມາເນ ເພື່ອພວກເພິ່ນຈະບໍ່ໄດ້ເຂົ້າໄປໃນການທົດລອງ ແຕ່ພວກເພິ່ນພາກັນນອນຫຼັບ. ຖ້າພຣະເຢຊູຊົງສັ່ງທ່ານໆ ຈະເຮັດຢ່າງໃດ?

______________________________________________________________________

ດົນໆ ຄັ້ງນຶ່ງ, ຈະເຫັນວ່າພວກອັຄສາວົກບໍ່ຍອມເຊື່ອຟັງພຣະບັນຍັດຂອງພຣະເຢຊູ ແຕ່ພຣະບັນຍັດອັນເປັນພື້ນຖານໃນຊີວິດຂອງພວກເພິ່ນນັ້ນຄື ພວກເພິ່ນມີຄວາມສັດຊື່ຕໍ່ພຣະອົງ.

15. ພຣະເຢຊູຊົງຈັດແຈ່ງສິ່ງຕ່າງໆ ເພື່ອສາວົກຂອງພຣະອົງ ດ້ວຍການ...
ກ. ອະທິຖານເພື່ອເຂົາເຈົ້າ
ຂ. ສົ່ງພຣະວິນຍານບໍຣິສຸດມາສະຖິດກັບເຂົາເຈົ້າ
ຄ. ປະທານພຣະຄຳຂອງພຣະອົງໃຫ້ທາງພຣະຄັມພີ

ທັງທ່ານແລະຂ້າພະເຈົ້າມີພຣະຄັມພີອ່ານເໝືອນກັນ. ຖ້າຫາກຊີວິດຂອງພວກເຮົາມີບຸກຄະລິກລັກສະນະດ້ວຍການ__________ ພວກເຮົາກໍຈະໄດ້ຮັບ__________ ຈາກພຣະອົງແລະ_________ ໃນພຣະອົງ.

16. ຈົ່ງສລູບບົດຮຽນຂ້າງລຸ່ມນີ້ໃຫ້ສຳເຣັດ.
ກ. ພວກເຮົາຄວນໃຫ້ພຣະເຢຊູ ເປັນທີນຶ່ງສຳຄັນກວ່າສິ່ງອື່ນ:
( 1 ) ____________________________________________________________
( 2 ) ____________________________________________________________
( 3 )_____________________________________________________________
ຂ. ພວກເຮົາຄວນໃຫ້ອົງພຣະເຢຊູຊົງນຳ, ແລະຊົງຊ່ວຍເຮົາຈົນວ່າຊີວິດຂອງເຮົາມີລັກສະນະດັ່ງຕໍ່ໄປນີ້:

(1)________________________________________________________________________

(2)________________________________________________________________________

(3) _______________________________________________________________________

17. ວຽກງານເບື້ອງຕົ້ນຂອງເຮົາຄື ເຂົ້າສນິດໃນພຣະຄຣິດ, ຜູ້ຊຶ່ງເປັນ<u>ເຄືອ</u>ອະງຸ່ນ. ພຣະອົງຈະຊົງໃຫ້ເຮົາຜູ້ເປັນ<u>ກິ່ງ</u> ເກີດຜົນ. ທ່ານຈະກະທຳສິ່ງເຫຼົ່ານີ້ໄດ້ບໍ່?

ກ. ຍອມໃຫ້ອົງພຣະຄຣິດເປັນທີ່ນຶ່ງ ສຳຄັນໃນຊີວິດຂອງທ່ານ?

ຂ. ຕິດຕາມອົງພຣະຄຣິດໂດຍຍອມເຊື່ອຟັງພຣະບັນຍັດຂອງພຣະອົງ?

ຄ. ເຂົ້າສນິດໃນພຣະຄຣິດ ເພື່ອໃຫ້ພຣະອົງທຳງານໃນຊີວິດຂອງທ່ານ ແລ້ວທ່ານຈະເກີດຜົນ?

## ຄໍາຕອບ:

1. ກ. ໂຢຮັນ ຂ. ພວກຟາຣີຊາຍ ຄ. ພຣະເຢຊູ
2. ກ. ໃຫ້ພວກເພິ່ນຢູ່ກັບພຣະອົງ ຂ. ເພື່ອຊົງໃຊ້ພວກເພິ່ນອອກໄປປະກາດ (ສັ່ງສອນ)
3. ຄໍາເວົ້າຂອງທ່ານເອງ. ທ່ານອາດຈະເວົ້າວ່າ, ພຣະອົງບໍ່ພໍພຣະທັຍກັບຄົນທີ່ບໍ່ຖວາຍຕົວແກ່ພຣະອົງຢ່າງແທ້ຈິງ ຕາມບຸກຄະລິກລັກສະນະຂອງຜູ້ເປັນສາວົກ.
4. ກ.= (2) ຂ.= (3) ຄ.= (1)
5. ກ. ເປັນຄໍາທີ່ໃຊ້ທົ່ວໄປສໍາລັບຜູ້ທີ່ຕິດຕາມຜູ້ນໍາ ຂ. ຄົນນຶ່ງໃນຈໍານວນອັຄສາວົກ 12 ຄົນ ຄ. ຜູ້ທີ່ມີຄຸນນະສົມບັດຂອງສາວົກ.
6. ກ. ລູກາ 14:26, ຂ. ລູກາ 14:27, ຄ. ລູກາ 14:33
7. ກ. ພວກເພິ່ນຍອມຖືກຂຮັ້ນຕີແທນພຣະເຢຊູ ຂ. ພວກເພິ່ນອະທິຖານຢ່າງກ້າຫານ ບໍ່ຢ້ານຕໍ່ການຖືກຂົ່ມເຫງ ຄ. ພວກເພິ່ນເອົາຊັບສິ່ງສອງມາໂຮມກັນ
8. ຄໍາເວົ້າຂອງທ່ານເອງ
9. ບໍ່ອາດເຮັດ
10. ກ.= (1) ຂ.= (3) ຄ.= (2)
11. ພຣະບັນຍັດ; ກ. ເຮົາຈະເຂົ້າສນິດໃນຄວາມຮັກຂອງພຣະອົງ ຂ. ພຣະບິດາຜູ້ຊົງຢູ່ໃນພຣະຄຣິດຈະຊົງຮັກເຮົາ ແລະຊົງເປີດເຜີຍພຣະອົງເອງແກ່ເຮົາ ຄ. ຄົນອື່ນຈະຮູ້ວ່າເຮົາເປັນສາວົກຂອງພຣະອົງ ງ. ພວກເຮົາຈະມີຄວາມຊົມຊື່ນຍິນດີ ແລະໄດ້ຮັບພຣະພອນ.
12. ຄໍາຕອບຂອງທ່ານ: ກ. ເຮັດຕາມແລະສັ່ງສອນພຣະບັນຍັດແກ່ຄົນອື່ນ ຂ. ເຮັດຕາມພຣະປະສົງຂອງພຣະອົງ ປະຕິບັດຕາມຄໍາສັ່ງສອນຂອງພຣະອົງ ຄ. ຖືຮັກສາພຣະບັນຍັດຂອງພຣະອົງ ງ. ອ່ານພຣະຄໍາພຣະອົງ.
13. ຍອມເຊື່ອຟັງ, ຖືຮັກສາພຣະບັນຍັດ, ປະຕິບັດຕາມພຣະບັນຍັດຂອງພຣະອົງ.
14. ຄໍາຕອບຂອງທ່ານເອງ
15. ຍອມເຊື່ອຟັງ, ຄວາມຮັກ, ເກີດຜົນ
16. ກ.= 1. ບຸກຄົນ, 2. ຄວາມປະສົງ, 3. ຊັບສົມບັດ
    ຂ.= 1. ຍອມເຊື່ອຟັງ, 2. ມີຄວາມຮັກ 3. ເກີດຜົນ
17. ຄໍາຕອບຂອງທ່ານເອງ.

( ຈົບບົດຮຽນທີ 2 )

# ຊີວິດຂອງສາວົກ

## ບົດຮຽນທີ 3

## ສຳຣວດຊີວິດຝ່າຍວິນຍານ

ຕາຕະລາງຕໍ່ໄປນີ້ຈະຊ່ວຍທ່ານປະເມີນເບິ່ງວ່າ ທ່ານມີຄວາມຮູ້ສຶກຢ່າງໃດຕໍ່ຊີວິດຄຣິສຕຽນຂອງທ່ານ. ນີ້ແມ່ນການສຳຣວດສ່ວນຕົວຂອງທ່ານ ຢ່າເອົາຄະແນນຂອງທ່ານປຽບທຽບກັບຂອງຄົນອື່ນ (2 ໂກຣິນໂທ 10:12) ການສຳຣວດນີ້ບໍ່ແມ່ນການສອບເສັງ, ຈະບໍ່ມີຜູ້ໃດໄດ້ຄະແນນສູງສຸດຄົບຖ້ວນສົມບູນ. ຄະແນນຂອງທ່ານຈະສະທ້ອນໃຫ້ທ່ານເຫັນວ່າ ທ່ານ <u>ຮູ້ສຶກ</u> ຢ່າງໃດຕໍ່ຊີວິດຂອງທ່ານໃນການເປັນສາວົກ ພ້ອມທັງ <u>ຄວາມປະພຶດ</u> ຂອງທ່ານດ້ວຍ. ທ່ານຈະສາມາດສັງເກດເຫັນການປະຕິບັດຂອງທ່ານເອງໃນແຕ່ລະຂໍ້ ເກືອບທຸກໆ ຂໍ້. ການຕີຄວາມໝາຍຄວາມປະພຶດຫຼືການກະທຳຂອງບາງຄົນຈະຂື້ນຢູ່ກັບວ່າລາວເບິ່ງໂລກໃນແງ່ດີຫຼືເບິ່ງໂລກໃນແງ່ຮ້າຍ. ເຖິງແມ່ນເຮົາຈະສາມາດຮູ້ຄົນໃດຄົນນຶ່ງໃດດ້ວຍຄວາມດີຂອງລາວ ຫຼືການເກີດຜົນຂອງລາວ ແຕ່ພຣະເຈົ້າຊົງເຫັນລາວເລິກກວ່າເຮົາອີກ. ທ່ານຄວນຈະທູນຂໍຕໍ່ພຣະເຈົ້າໃຫ້ພຣະອົງຊົງຊ່ວຍທ່ານໃຫ້ເບິ່ງເຫັນຕົນເອງວ່າ ເວລານີ້ຊີວິດຄຣິສຕຽນຂອງທ່ານຢູ່ໃນຂັ້ນໃດ ແລະທ່ານຢາກຈະກ້າວຂື້ນໄປສູ່ຂັ້ນໃດ.

ອ່ານຖ້ອຍຄຳແຕ່ລະຂໍ້ຕໍ່ໄປນີ້ ແລ້ວໝາຍຕົນກາໃສ່ໃນຊ່ອງຫວ່າງຕາມທີ່ທ່ານໄດ້ປະເມີນເບິ່ງວ່າທ່ານໄດ້ກະທຳສິ່ງເຫຼົ່ານັ້ນແທ້ ແລະກະທຳເລື້ອຍປານໃດ.

| ພາກປະຕິບັດໂຕຈິງຂອງທ່ານ | ທຸກວັນ | ເລື້ອຍໆ | ບາງຄັ້ງ | ດົນໆ | ບໍ່ເຄີຍ |
|---|---|---|---|---|---|
| <u>ເຂົ້າສນິດໃນພຣະຄຣິດ:</u> | | | | | |
| - ເຂົ້າເຝົ້າພຣະເຈົ້າທຸກວັນບໍ່ຂາດ. | | | | | |
| - ຍອມໃຫ້ພຣະຄຣິດເປັນພຣະເຈົ້າໃນຊີວິດຂອງຂ້າພະເຈົ້າ. | | | | | |
| - ຂ້າພະເຈົ້າຮູ້ສຶກໃກ້ຊິດກັບອົງພຣະຜູ້ເປັນເຈົ້າຕລອດວັນ . | | | | | |
| - ຂ້າພະເຈົ້າພະຍາຍາມສ້າງຕົນເອງເປັນສາວົກ . | | | | | |
| - ຂ້າພະເຈົ້າຮູ້ວ່າອົງພຣະຜູ້ເປັນເຈົ້າຊົງສັ່ງສອນຂ້າພະເຈົ້າ | | | | | |
| | | | | | |
| <u>ດຳເນີນຊີວິດໃນພຣະຄຳ:</u> | | | | | |
| - ຂ້າພະເຈົ້າອ່ານພຣະຄັມພີເປັນປະຈຳທຸກວັນ. | | | | | |
| - ຂ້າພະເຈົ້າສຶກສາພຣະຄັມພີທຸກອາທິດ. | | | | | |
| - ຂ້າພະເຈົ້າທ່ອງຈຳຂໍ້ພຣະຄັມພີທຸກອາທິດ. | | | | | |
| - ໄດ້ຈົດບັນທຶກ ເມື່ອຂ້າພະເຈົ້າໄດ້ຍິນ, ໄດ້ອ່ານ, ໄດ້ສຶກ | | | | | |
| ສາພຣະຄັມພີ ແຕ່ລະອາທິດ ເພື່ອນຳໄປໃຊ້ໃນຊີວິດຈິງ. | | | | | |
| | | | | | |
| <u>ອະທິຖານດ້ວຍຄວາມເຊື່ອ:</u> | | | | | |
| - ຈົດລາຍຊື່ຜູ້ທີ່ຈະອະທິຖານເພື່ອ ແລະໄດ້ອະທິຖານເພື່ອ | | | | | |
| - ເດືອນກ່ອນ ຂ້າພະເຈົ້າໄດ້ຮັບຄຳຕອບຈາກການອະທິຖານ | | | | | |
| - ຂ້າພະເຈົ້າໄດ້ ສັຣເສີນ, ຂອບພຣະຄຸນ, ສາລະພາບບາບ, | | | | | |
| ແລະທູນຂໍຈາກພຣະເຈົ້າທຸກວັນ ເມື່ອຂ້າພະເຈົ້າອະທິຖານ | | | | | |

| | | | | | |
|---|---|---|---|---|---|
| | | | | | |
| ຮ່ວມສາມັກຄີທຳກັບພີ່ນ້ອງຄຣິສຕຽນອື່ນໆ: | | | | | |
| - ຫາທາງດຳລົງຊີວິດກັບເພື່ອນຄຣິສຕຽນຢ່າງສງົບສຸກ. | | | | | |
| - ຫາທາງຄືນດີກັບຜູ້ເຮັດຜິດຕໍ່ຂ້າພະເຈົ້າ ຫຼືຜູ້ທີ່ຂ້າພະເຈົ້າ | | | | | |
| ເຮັດຜິດຕໍ່ລາວ. | | | | | |
| - ຜູ້ອື່ນຮູ້ຈັກວ່າຂ້າພະເຈົ້າເປັນຄຣິສຕຽນ ດ້ວຍເຫັນວ່າຂ້າ | | | | | |
| ພະເຈົ້າເປັນຄົນທີ່ຮັກໄພ່ພົນຂອງພຣະເຈົ້າ. | | | | | |
| - ດຳລົງຊີວິດຢ່າງສາມັກຄີປອງດອງກັບສະມາຊິກຄອບຄົວ | | | | | |
| | | | | | |
| ການເປັນພະຍານ: | | | | | |
| - ຂ້າພະເຈົ້າອະທິຖານເພື່ອຜູ້ຫຼົງຫາຍໂດຍອອກຊື່ເປັນປະຈຳ | | | | | |
| - ຖ້າໂອກາດອຳນວຍຂ້າພະເຈົ້າເປັນພະຍານແກ່ຄົນອື່ນສເມີ | | | | | |
| - ຂ້າພະເຈົ້າໄດ້ແບ່ງປັນເຣື່ອງຄວາມລອດພົ້ນແກ່ຜູ້ທີ່ເປີດ | | | | | |
| ຈິດໃຈຮັບຟັງສເມີ. | | | | | |
| - ຂ້າພະເຈົ້າເປັນພະຍານເພື່ອພຣະເຢຊູ ທຸກອາທິດ. | | | | | |
| - ຂ້າພະເຈົ້າໄດ້ຕິດຕາມແລະໜູນໃຈຜູ້ທີ່ຂ້າພະເຈົ້າໄດ້ນຳ | | | | | |
| ມາເຖິງພຣະຄຣິດແລ້ວ. | | | | | |
| | | | | | |
| ການບົວລະບັດຮັບໃຊ້ຊ່ວຍເຫຼືອຄົນອື່ນ: | | | | | |
| - ຂ້າພະເຈົ້າຮັບໃຊ້ພຣະຄຣິດຜ່ານວຽກງານຄຣິສຕະຈັກ. | | | | | |
| - ຂ້າພະເຈົ້າຖວາຍ ນຶ່ງສ່ວນສິບ ໃຫ້ແກ່ພຣະເຈົ້າ. | | | | | |
| - ຂ້າພະເຈົ້າໄດ້ຊ່ວຍເຫຼືອຄົນອື່ນຢ່າງນ້ອຍເດືອນລະຄັ້ງ. | | | | | |
| - ຂ້າພະເຈົ້າມີເປົ້າໝາຍຊີວິດຢ່າງແຈ່ມແຈ້ງ. | | | | | |
| | x4 | x3 | x2 | x1 | |
| ລວມຄະແນນແຕ່ລະຢ່າງ................ | | | | | |
| ລວມຄະແນນທັງໝົດ.................. | | | | | |

ຫຼັງຈາກທ່ານໝາຍຕົນກາໃສ່ຊ່ອງຫວ່າງແຕ່ລະຂໍ້ແລ້ວ ໃຫ້ບວກຕົນກາແຕ່ລະຊ່ອງຫວ່າງທາງຕັ້ງເຂົ້າກັນ, ຍົກເວັ້ນຊ່ອງຫວ່າງ "ບໍ່ເຄີຍ". ຄະແນນຕົນກາແຕ່ລະອັນກຳນົດໄວ້ດັ່ງນີ້ "ທຸກວັນ = 4 ຄະແນນ", "ເລື້ອຍໆ = 3 ຄະແນນ", "ບາງຄັ້ງ = 2 ຄະແນນ", "ດົນໆ = 1 ຄະແນນ". ລວມຄະແນນແຕ່ລະຢ່າງເຂົ້າກັນເປັນຄະແນນທັງໝົດຂອງທ່ານ.

ຈົ່ງຂຽນຄຳຄິດເຫັນຂອງທ່ານເອງໃສ່ຊ່ອງຫວ່າງດັ່ງຕໍ່ໄປນີ້:

1. ຂ້າພະເຈົ້າເຫັນວ່າຄະແນນຂອງຂ້າພະເຈົ້າ (ບໍ່ສະທ້ອນ/ສະທ້ອນ) ໃຫ້ເຫັນແຈ້ງເຖິງຊີວິດຂອງສາວົກ ຂອງຂ້າພະເຈົ້າ ເພາະວ່າ

:___________________________________________________________________________

໒. ສິ່ງອື່ນທີ່ບໍ່ໄດ້ກ່າວເຖິງຕາມການສຳຣວດຂ້າງເທິງນີ້ກໍຄວນນຳມາພິຈາຣະນາ, ຕາມຄວາມຮູ້ສຶກຂອງຂ້າພະເຈົ້າ
ສິ່ງທີ່ຄວນນຳມາກ່າວມີດັ່ງນີ້ ________________________________________________________

໓. ການປະເມີນເບິ່ງຊີວິດຂອງສາວົກ ຂອງຂ້າພະເຈົ້າທັງໝົດນີ້ເຫັນວ່າ :____________________________

________________________________________________________________________________

( ຣັກສາບົດຮຽນນີ້ໄວ້ ຫຼັງຈາກທ່ານໄດ້ສຶກສາທຸກບົດຮຽນແລ້ວ ທ່ານຈະເຫັນວ່າຊີວິດຂອງທ່ານໄດ້ປ່ຽນແປງ )

------ ຈົບບົດຮຽນທີ ໓ ------

# ຊີວິດຂອງສາວົກ

## ບົດຮຽນທີ 4

## ການເຂົ້າເຝົ້າພຣະເຈົ້າຄົນດຽວ

ພາກສ່ວນນຶ່ງຂອງການຈະເຣີນເຕີບໃຫຍ່ໃນຊີວິດຄຣິສຕຽນຄືມີນິສັຍໃນການອ່ານພຣະຄັມພີ, ຕຶກຕອງພຣະຄຳ, ແລະ ອະທິຖານ ເປັນປະຈຳທຸກວັນບໍ່ຂາດ. ບໍ່ມີສິ່ງອື່ນໃດຈະທົດແທນສິ່ງທີ່ກ່າວມານີ້ໄດ້. ຜູ້ຮັບໃຊ້ທີ່ເຂັ້ມແຂງທີ່ພຣະເຈົ້າຊົງໃຊ້ ສ່ວນຫລາຍແມ່ນຜູ້ທີ່ຖືກວາງຮາກຖານແຫ່ງຄວາມຈິງ ແລະໄດ້ຮັບຣິດອຳນາດຈາກພຣະເຈົ້າດ້ວຍການເຂົ້າເຝົ້າພຣະເຈົ້າ (ນະມັສການ) ຄົນດຽວ.

ບົດຮຽນຕໍ່ໄປນີ້ ຈະຊ່ວຍໃຫ້ທ່ານໄດ້ກຳໄລຊີວິດຈາກຄວາມສັມພັນອັນໃກ້ຊິດກັບພຣະເຈົ້າ. ບົດຮຽນນີ້ຈະສາມາດຊ່ວຍທ່ານໃຫ້.....

ກ. ບອກເຫດຜົນ 4 ປະການກ່ຽວກັບການເຂົ້າເຝົ້າພຣະເຈົ້າຄົນດຽວປະຈຳວັນ

ຂ. ອະທິບາຍຄຸນນະສົມບັດ 3 ຢ່າງໃນການເຂົ້າເຝົ້າພຣະເຈົ້າຄົນດຽວ ຢ່າງເກີດຜົນ

ຄ. ສະແດງອອກໃຫ້ເຫັນເຖິງພາກປະຕິບັດໂຕຈິງ ໃນການເຂົ້າເຝົ້າພຣະເຈົ້າຄົນດຽວ

ເຮັດບົດຮຽນຕໍ່ໄປນີ້ໃຫ້ສຳເຣັດ ຫລັງຈາກນັ້ນໃຫ້ທ່ານກວດໃສ່ກັບຄຳຕອບທີ່ຢູ່ຕອນທ້າຍຂອງບົດຮຽນນີ້

1. ການຢາກຕິດຕໍ່ພົວພັນກັບຄົນທີ່ທ່ານຮັກນັ້ນ ເປັນກົດຂອງທັມມະຊາດ. ໃນຖານະທີ່ທ່ານເປັນບຸດຂອງພຣະເຈົ້າ ທ່ານຄວນມີໃຈປາຖນາອັນແຮງກ້າ ທີ່ຢາກຈະສາມັກຄີທັມກັບພຣະບິດາຂອງທ່ານໃນສວັນ.

ກ. ເປັນຫຽັງທ່ານຈຶ່ງຮັກພຣະເຈົ້າ? ( 1 ໂຢຮັນ 4:19 )

_______________________________________________________________________________

ຂ. ທ່ານຮູ້ໄດ້ຢ່າງໃດວ່າພຣະເຈົ້າຊົງຮັກທ່ານ? ( 1 ໂຢຮັນ 4:10 )

_______________________________________________________________________________

2. ຄວາມຮັກຂອງພຣະເຈົ້າບໍ່ມີເງື່ອນໄຂຜູກມັດ ເຖິງແມ່ນວ່າເຮົາໄດ້ຜິດພາດຫລືລົ້ມເຫລວ. ແຕ່ຄວາມຮັກຂອງມະນຸດຈະຫລຸດນ້ອຍຖອຍລົງແລະຈືດຈາງໄປ ຖ້າຫາກບໍ່ໄດ້ຮັບການບຳລຸງລ້ຽງຈາກການສາມັກຄີທັມປະຈຳວັນ. ການເຂົ້າເຝົ້າພຣະເຈົ້າປະຈຳວັນຄົນດຽວມີຄວາມສຳຄັນຕໍ່ຜູ້ເຊື່ອຫລາຍ ເພາະວ່າລາວແລະອົງພຣະບິດາຈະມີຄວາມຊົມຊື່ນຍິນດີຕໍ່ຄວາມສັມພັນອັນໃກ້ຊິດຕໍ່ກັນ ຊຶ່ງເປັນຜົນມາຈາກການສິ້ນພຣະຊົນຂອງອົງພຣະເຢຊູເທິງໄມ້ກາງແຂນ.

   ອ່ານພຣະທັມຟີລິບປອຍ 3:10 ແລ້ວໝາຍຕີນກາໃສ່ໜ້າຂໍ້ທີ່ທ່ານພົບວ່າ ມີສິ່ງໃດແດ່ທີ່ອາຈານໂປໂລໄດ້ຮັບ ຊຶ່ງເປັນຜົນມາຈາກ ການມີຄວາມສັມພັນກັບພຣະເຈົ້າ.

[ ] ກ. ມີຄວາມຮູ້ເຣື່ອງພຣະຄຣິດ [ ] ຄ. ສາມັກຄີທັມດ້ວຍຄວາມຍາກລຳບາກ

[ ] ຂ. ຣິດອຳນາດແຫ່ງຄວາມລອດພົ້ນ [ ] ງ. ມີອິສລະພາບຈາກຄວາມຕາຍ

3. ເຫດຜົນປະການທຳອິດຂອງການເຂົ້າເຝົ້າພຣະເຈົ້າປະຈຳວັນຄົນດຽວຄື <u>ເພື່ອຮູ້ຈັກກັບພຣະເຈົ້າໂດຍຮ່ວມສາມັກຄີທັມກັບພຣະອົງ.</u> ພຣະທັມ 1 ໂຢຮັນ 1:3 ກ່າວວ່າ ເຮົາມີຄວາມສາມັກຄີທັມກັບເພື່ອນຄຣິສຕຽນອື່ນ ຍ້ອນວ່າເຮົາມີຄວາມສາມັກຄີທັມກັບຜູ້ໃດກ່ອນ?

4. ເຫດຜົນປະການທີສອງຂອງການເຂົ້າເຝົ້າພຣະເຈົ້າປະຈຳວັນຄືນດຽວຄື ເພື່ອຮັບການຊົງຊີ້ນຳ, ການຊົງນຳພາໃນການຕັດສິນໃຈຂອງເຮົາແຕ່ລະວັນ. ໃນຂະນະທີ່ເຮົາຕຶກຕອງພຣະຄຳຂອງພຣະເຈົ້າ ເຮົາກໍຮູ້ຈັກນໍ້າພຣະທັຍຂອງພຣະອົງ ແລະ ມີຄວາມສັມພັນກັບພຣະວິນຍານບໍຣິສຸດ.

ກ. ຜູ້ຂຽນພຣະທັມເພງສັຣເສີນໄດ້ທູນຂໍໃຫ້ພຣະເຈົ້າເຮັດຫຍັງແດ່ໃນພຣະທັມເພງສັຣເສີນ 143:8 ?

______________________________________________________________________________

ຂ. ຖ້າເຮົາຫາກອະທິຖານຕາມນໍ້າພຣະທັຍພຣະເຈົ້າ, ພຣະອົງຈະຊົງຕອບເຮົາວ່າຢ່າງໃດ? ( 1 ໂຢຮັນ 5:14 )

______________________________________________________________________________

5. ເຫດຜົນປະການທີສາມຂອງການເຂົ້າເຝົ້າພຣະເຈົ້າປະຈຳວັນຄືນດຽວຄື ທູນຂໍສິ່ງຈຳເປັນຈາກພຣະເຈົ້າ. ຄວາມຈຳເປັນຂາດເຂີນແລະບັນຫາຕ່າງໆ ໃນຊີວິດຂອງເຮົາເຮັດໃຫ້ເຮົາຍອມຮັບວ່າເຮົາຕ້ອງເພິ່ງພາໃນພຣະເຈົ້າ. ພຣະອົງມີພຣະປະສົງຢາກຈະປະທານສິ່ງຈຳເປັນຂາດເຂີນໃຫ້ແກ່ເຮົາ. ຈົ່ງເລືອກເອົາ ( 1,2,3,4 ) ຈາກຂໍ້ຄວາມທາງຂວາໄປໃສ່ຊ່ອງຫວ່າງ_ ຂ້າງໜ້າຂໍ້ພຣະຄັມພີຢູ່ທາງຊ້າຍ ທີ່ທ່ານເຫັນວ່າຖືກຕ້ອງ.

__ກ. ຟີລິບປອຍ 4:6-7 1. ພຣະເຈົ້າຊົງເພີ້ມເຫື່ອແຮງໃຫ້ເຮົາ ເມື່ອເຮົາລໍຄອຍພຣະອົງ

__ຂ. ເພງສັຣເສີນ 34:17 2. ໂດຍການອະທິຖານ ເຮົາຈະພົບກັບພຣະຄຸນແລະຄວາມຮັກຂອງພຣະເຈົ້າທີ່ຊ່ວຍເຮົາໃນຍາມຍາກລຳບາກ.

__ຄ. ເຮັບເຣີ 4:16 3. ພຣະເຈົ້າຊົງຊ່ວຍຄົນຊອບທັມໃຫ້ພົ້ນຈາກບັນຫາ.

__ງ. ເອຊາຢາ 40:3 4. ເມື່ອເຮົາທູນຂໍຕໍ່ພຣະເຈົ້າ ພຣະອົງຊົງປະທານສັນຕິສຸກໃຫ້ແກ່ເຮົາ.

6. ເຫດຜົນປະການທີສີ່ຂອງການເຂົ້າເຝົ້າພຣະເຈົ້າປະຈຳວັນຄືນດຽວຄື ເພື່ອໃຫ້ເຮົາສາມາດເກີດຜົນທາງຝ່າຍຈິດວິນຍານ. ໃນພຣະທັມ ໂຢຮັນ 15:4-5 ອົງພຣະເຢຊູຊົງກ່າວວ່າຢ່າງໃດແດ່ກ່ຽວກັບການເກີດຜົນ?

______________________________________________________________________________

7. ພຣະເຈົ້າບໍ່ມີພຣະປະສົງໃຫ້ເຮົາເຮັດວຽກໃຫ້ພຣະອົງ. ພຣະອົງມີພຣະປະສົງຢາກເຮັດວຽກຜ່ານທາງຊີວິດຂອງເຮົາ. ວຽກງານຂອງພຣະອົງຈະສຳເຣັດກໍຕໍ່ເມື່ອເຮົາຍອມໃຫ້ຄວາມຕັ້ງໃຈຂອງເຮົາແຕ່ລະວັນຂື້ນຢູ່ກັບພຣະອົງໂດຍການສຶກສາພຣະຄັມພີ, ຕຶກຕອງພຣະຄຳ, ແລະການອະທິຖານ. ຈົ່ງຂຽນເຫດຜົນ 4 ປະການຂອງການເຂົ້າເຝົ້າພຣະເຈົ້າປະຈຳວັນຄືນດຽວ ໃສ່ຫົວຂໍ້ຂ້າງລຸ່ມນີ້:

ກ. ______________________________________________________________________________

ຂ. ______________________________________________________________________________

ຄ. ______________________________________________________________________________

ງ. ______________________________________________________________________________

8. ອົງພຣະເຢຊູຊົງມີຄວາມຊົມຊື່ນກັບຄວາມສັມພັນພິເສດຣະຫວ່າງພຣະອົງກັບພຣະບິດາ. ເຖິງແມ່ນວ່າພຣະອົງຈະ

ເຕັມລົ້ນໄປດ້ວຍພຣະວິນຍານບໍຣິສຸດກໍຕາມ ແຕ່ພຣະອົງຊົງເຫັນວ່າເປັນສິ່ງຈໍາເປັນທີ່ຕ້ອງຕັ້ງໝັ້ນຄົງຢູ່ດ້ວຍການນະມັສການພຣະເຈົ້າຄົນດຽວ (ສ່ວນຕົວ) ເປັນປະຈໍາບໍ່ຂາດ. ຈົ່ງຕອບຄໍາຖາມຕໍ່ໄປນີ້ດ້ວຍການ ຂຽນຕົວ "ຖ" ຖ້າຫາກເຫັນວ່າຖືກ ຫຼືຂຽນຕົວ "ຜ" ຖ້າຫາກເຫັນວ່າຜິດ ໃສ່ຊ່ອງຫວ່າງ__ ຂ້າງໜ້າແຕ່ລະຂໍ້ຂ້າງລຸ່ມນີ້:

__ກ. ພຣະເຢຊູຊົມຊື່ນຍິນດີກັບການອະທິຖານໃນຕອນເຊົ້າມືດ ( ມາຣະໂກ 1:35 )

__ຂ. ບາງຄັ້ງອົງພຣະເຢຊູຊົງອະທິຖານຕລອດຄືນ, ບໍ່ນອນ ( ລູກາ 6:12 )

__ຄ. ອົງພຣະເຢຊູມັກອະທິຖານບ່ອນມີຄົນຫຼາຍ ເພື່ອອວດອ້າງຄົນອື່ນ ( ມັດທາຍ 14:23 )

__ງ. ພຣະເຢຊູຊົງອະທິຖານຄົນດຽວ ( ມາຣະໂກ 6:46 )

9. ແນ່ນອນ, ຖ້າອົງພຣະເຢຊູຍັງຊົງຕ້ອງການເຂົ້າເຝົ້າພຣະບິດາເປັນປະຈໍາ ພວກເຮົາກໍສົມຄວນເຂົ້າເຝົ້າພຣະເຈົ້າຫຼາຍກວ່ານັ້ນອີກ. ແຕ່ເຖິງຢ່າງໃດກໍຕາມ, ຖ້າຜູ້ໃດຢາກເຂົ້າເຝົ້າພຣະເຈົ້າຄົນດຽວຢ່າງໄດ້ຮັບຜົນດີ ລາວຕ້ອງກະທໍາຫຼາຍປະການດ້ວຍກັນ. ປະການທໍາອິດຂອງການເຂົ້າເຝົ້າພຣະເຈົ້າຄົນດຽວຢ່າງໄດ້ຮັບຜົນດີນັ້ນຄື ໃຫ້ຈັດເວລາໄວ້ວ່າຈະເຂົ້າເຝົ້າໃນໂມງໃດ. ກະຣຸນາອ່ານຂໍ້ພຣະຄັມພີແລ້ວຂີດເສັ້ນກ້ອງຂອງຍາມທີ່ເໝາະສົມ ທີ່ຈະເຂົ້າເຝົ້າພຣະເຈົ້າ: ເພງສັຣເສີນ 5:3; ເພງສັຣເສີນ 57:7-8; ປະຖົມການ 19:27.

ຍາມມື້ເຊົ້າ ຍາມທຽ່ງ ຍາມມື້ຄືນ ຍາມອື່ນໆ

10. ການເຂົ້າເຝົ້າພຣະເຈົ້າໃນຍາມມື້ເຊົ້າ ເປັນການເລີ້ມຕົ້ນວັນໃໝ່ເພື່ອຮັບຮູ້ວ່າທ່ານຍອມເພິ່ງພາໃນພຣະເຈົ້າ ແລະທຸກສິ່ງທີ່ພຣະອົງຊົງຈັດຕຽມໄວ້. ເປັນໂອກາດທີ່ທ່ານຈະຕ້ອງຖວາຍຄວາມຕັ້ງໃຈຂອງທ່ານໃຫ້ແກ່ພຣະເຈົ້າ ແລະຍອມເສັຽສລະອຸທິດຕົນໃນວັນນັ້ນເພື່ອເປັນກຽດແກ່ພຣະສະງ່າຣາສີຂອງພຣະອົງ.

ກ. ຕາມປົກກະຕິແລ້ວ ທ່ານຕື່ນເວລາຈັກໂມງໃນຍາມມື້ເຊົ້າ?

ຂ. ມື້ອື່ນເຊົ້າ ທ່ານຈະຕື່ນເວລາຈັກໂມງເພື່ອຖວາຍເວລາພຽງ 15 ນາທີໃຫ້ແກ່ພຣະເຈົ້າ?

11. ຄຣິສຕຽນບາງຄົນເຫັນວ່າ ການເຂົ້າເຝົ້າພຣະເຈົ້າກ່ອນຍາມນອນ ມີຄວາມສະດວກດີ, ເປັນການຫຼຸດຜ່ອນຄວາມເຄັ່ງຕຶງຫວຸ້ນວາຍໃນວັນນັ້ນ ແລະມີຄວາມສງົບໃຈກ່ອນເຂົ້ານອນ. ສິ່ງສໍາຄັນນັ້ນຕ້ອງແມ່ນເວລາດຽວກັນທຸກໆວັນເປັນປະຈໍາບໍ່ຂາດ ເພື່ອໃຫ້ກາຍເປັນນິສັຍຂອງເຮົາ.

ກ. ທ່ານໄດ້ຈັດເວລາໄວ້ບໍ່ແຕ່ລະວັນ ເມື່ອທ່ານອະທິຖານປະຈໍາວັນ? ____ໄດ້ຈັດໄວ້ ____ບໍ່ໄດ້ຈັດໄວ້

ຂ. ຖ້າບໍ່ໄດ້ຈັດ, ຂໍໃຫ້ທ່ານຈັດເວລາເຂົ້າເຝົ້າພຣະເຈົ້າໄວ້ໃນຕອນ _____ເຊົ້າ _____ແລງ

12. ການເຂົ້າເຝົ້າພຣະເຈົ້າຄົນດຽວຢ່າງໄດ້ຮັບຜົນດີປະການທີສອງໄດ້ແກ່ ສະຖານທີ່ໆ ທ່ານສາມາດເຂົ້າເຝົ້າພຣະເຈົ້າໂດຍບໍ່ຖືກລົບກວນ. ໃນພຣະທັມມັດທາຍ 6:6 ອົງພຣະເຢຊູຊົງໜູນໃຈໃຫ້ສາວົກຂອງພຣະອົງອະທິຖານຢູ່ບ່ອນໃດ?

________________________________________________________________________

13. ຄົນສ່ວນຫຼາຍກ່າວວ່າເຂົາເຈົ້າມີສະມາທິດີ ຖ້າບໍ່ມີສຽງລົບກວນ, ບໍ່ຫວຸ້ນວາຍໃຈ, ແລະຄົນອື່ນບໍ່ລົບກວນ. ຈົ່ງຂີດເສັ້ນກ້ອງຊື່ສະຖານທີ່ຂ້າງລຸ່ມນີ້ ບ່ອນທີ່ທ່ານເຫັນວ່າສາມາດເຂົ້າເຝົ້າພຣະເຈົ້າຢ່າງໄດ້ຮັບຜົນດີ.

ໃນຫ້ອງນອນຂອງທ່ານ ໃນຫ້ອງຮັບແຂກຂອງທ່ານ

ໃນຣົດຂອງທ່ານ ໃນບ່ອນເຮັດການຂອງທ່ານ

ໃນຍາມເບິ່ງທີວີ ຢູ່ເດີ່ນບ້ານ

ໃນຍາມຟັງເພງ ຫ້ອງສ່ວນຕົວ (ໃນການສຶກສາຮ່ຳຮຽນ)
ໃນຍາມເຮັດວຽກບ້ານ ອື່ນໆ

14. ການເຂົ້າເຝົ້າພຣະເຈົ້າຄົນດຽວຢ່າງໄດ້ຮັບຜົນດີ ປະການທີສາມໄດ້ແກ່ ເຮັດຕາມວິທີທີ່ກ່າວມານັ້ນ. ເວັ້ນເສັຽແຕ່

ວ່າທ່ານມີແບບແຜນທີ່ດີ ທີ່ສາມາດເຮັດໃຫ້ຈິດໃຈຕັ້ງຢູ່ໃນສະມາທິທາງຝ່າຍຈິດວິນຍານ ທ່ານອາດຈະພົບວ່າບາງຄັ້ງໃຈຂອງທ່ານລອຍໜີໄປທາງອື່ນ. ຈົ່ງອະທິບາຍໃສ່ຊ່ອງຫວ່າງຂ້າງລຸ່ມນີ້ ເຖິງຄວາມສຳຄັນຂອງການເຂົ້າເຝົ້າພຣະເຈົ້າຄົນດຽວຢ່າງໄດ້ຮັບຜົນດີວ່າ ແຕ່ລະປະການດີຢ່າງໃດ.

ກ. ຈັດເວລາ: ____________________________________________

ຂ. ສະຖານທີ່ງຽບສງັດ: ____________________________________________

ຄ. ປະຕິບັດຕາມແບບແຜນທີ່ດີ: ____________________________________________

15. ຫຼາຍຄົນເຫັນວ່າການເຂົ້າເຝົ້າພຣະເຈົ້າຄົນດຽວທີ່ເລີ້ມຕົ້ນດ້ວຍການສັຣເສີນແລະການຂອບພຣະຄຸນ ຈະຊ່ວຍໃຫ້ບັນຍາກາດການເຂົ້າເຝົ້າດີຂື້ນ. ຫຼັງຈາກນັ້ນແມ່ນການອະທິຖານສາລະພາບຄວາມຜິດບາບ. ການກັບໃຈໃໝ່ທີ່ເໝາະສົມ ຖ້າເປັນໄປໄດ້ໃຫ້ທ່ານອອກຊື່ຄວາມຜິດບາບທີ່ທ່ານໄດ້ກະທຳຕໍ່ອົງພຣະຜູ້ເປັນເຈົ້າ. ເປັນຫຽັງການສາລະພາບຈຶ່ງມີຄວາມຈຳເປັນທີ່ຕ້ອງກະທຳ? ( ເພງສັຣເສີນ 66:18 )

____________________________________________

16. ຫຼັງຈາກສາລະພາບຄວາມບາບຂອງເຮົາແລ້ວ, ຈົ່ງທູນຂໍສິ່ງທີ່ຈຳເປັນ ຕໍ່ພຣະເຈົ້າ. ຈົ່ງຈົດຄຳຕອບທີ່ທ່ານອະທິຖານໃສ່ຊ່ອງຫວ່າງຂ້າງລຸ່ມນີ້ ອີງຕາມຂໍ້ພຣະຄັມພີດັ່ງຕໍ່ໄປນີ້:

ກ. ມັດທາຍ 11:25 ______________________________

ຂ. ໂຢຮັນ 14:13 ______________________________

ຄ. 1 ໂຢຮັນ 3:22 ______________________________

17. ຈົ່ງອະທິຖານເພື່ອທູນຂໍແສງສວ່າງ (ຄວາມເຂົ້າໃຈ) ທຸກຄັ້ງ ກ່ອນເລີ້ມອ່ານພຣະຄັມພີ. ທ່ານອາດຈະໃຊ້ປື້ມການເຂົ້າເຝົ້າພຣະເຈົ້າ, ລາຍການອ່ານພຣະຄັມພີປະຈຳວັນ, ຫຼືຂໍ້ພຣະຄັມພີທີ່ທ່ານເລືອກເອງກໍໄດ້. ໃນພຣະທັມໂຢຮັນ 8:31 ອົງພຣະເຢຊູຊົງກ່າວວ່າ ສາວົກຂອງພຣະອົງມີບຸກຄະລິກຢ່າງໃດແດ່ຕໍ່ໄປນີ້ ( ໝາຍຕົນກາພຽງຂໍ້ດຽວ)

__ກ. ມີຄວາມຮູ້ພາສາກຣີກ ແລະ ພາສາເຮັບເຣີ

__ຂ. ສຶກສາພຣະຄຳເປັນປະຈຳ

__ຄ. ມີຮູບປາເປັນເຄື່ອງໝາຍ ( ວ່າເປັນຄຣິສຕຽນ )

18. ພຣະເຈົ້າຊົງຊີ້ທາງໃຫ້ແກ່ເຮົາໃນການດຳເນີນຊີວິດ (ນຳທາງຊີວິດ). ຖ້າເຮົາຫາກຫຼີກອອກຈາກທາງຂອງພຣະອົງກໍຖືວ່າເຮົາເປັນຄົນໂງ່. ເຮົາໄດ້ຮັບຜົນປໂຍດອັນໃດແດ່ຈາກການສຶກສາພຣະຄຳຂອງພຣະເຈົ້າ? ຈົ່ງເລືອກຂໍ້ຄວາມທາງຂວາ ( 1,2,3,4 ) ໄປໃສ່ຊ່ອງຫວ່າງຂ້າງໜ້າຂໍ້ພຣະຄັມພີທາງຊ້າຍ ຊຶ່ງເຫັນວ່າສອດຄ່ອງກັນ:

__ກ. ເພງສັດເສີນ 119:11 1. ບໍ່ໃຫ້ເຮົາເຮັດຜິດບາບ

__ຂ. ເພງສັດເສີນ 119:130 2. ໃຫ້ເຮົາສາມາດເຮັດຕາມນໍ້າພຣະທັຍພຣະເຈົ້າ

__ຄ. ເພງສັດເສີນ 40:8 3. ໃຫ້ແສງສວ່າງແກ່ເຮົາ ແລະມີຄວາມເຂົ້າໃຈແຈ້ງ

__ງ. ໂກໂລຊາຍ 3:16 4. ໃຫ້ເຮົາມີສະຕິປັນຍາ

19. ໃນພຣະທັມ 1 ເປໂຕ 2:5 ບັນດາຜູ້ເຊື່ອໝາຍເຖິງປະໂຣຫິດຜູ້ຊຶ່ງ "ຖວາຍເຄື່ອງບູຊາຝ່າຍວິນຍານ ຊຶ່ງຊອບພຣະທັຍຂອງພຣະເຈົ້າໂດຍທາງພຣະເຢຊູຄຣິດ" ໃນຖານະທີ່ເຮົາເປັນປະໂຣຫິດ, ເຮົາມີສິດພິເສດແລະມີໜ້າທີ່ຮັບຜິດຊອບຕໍ່ການນະມັສການພຣະເຈົ້າທຸກວັນ. ຈົ່ງປະເມີນເບິ່ງວ່າທ່ານໄດ້ກະທຳສິ່ງຕໍ່ໄປນີ້ເລື້ອຍປານໃດ ( ໝາຍຕີນກາໃສ່ຊ່ອງຫວ່າງທີ່ທ່ານໄດ້ກະທຳ )

| ການເຂົ້າເຝົ້າພຣະເຈົ້າພາກປະຕິບັດໂຕຈິງ | ທຸກວັນ | ເລື້ອຍໆ | ບາງຄັ້ງ | ດົນໆເທື່ອ | ບໍ່ເຄີຍ |
|---|---|---|---|---|---|
| ກ. ເຂົ້າເຝົ້າພຣະເຈົ້າຕາມເວລາທີ່ຈັດຕຽມໄວ້ | | | | | |
| ຂ. ເຂົ້າເຝົ້າພຣະເຈົ້າຕາມສະຖານທີ່ງ ຈັດຕຽມໄວ້ | | | | | |
| ຄ. ເຂົ້າເຝົ້າພຣະເຈົ້າຕາມແຜນການທີ່ວາງໄວ້ | | | | | |

20. ພຣະເຈົ້າຊົງຍອມເສັຽສລະພຣະບຸດອົງດຽວຂອງພຣະອົງ ເພື່ອໃຫ້ຄົນບາບສາມາດໃກ້ຊິດກັບພຣະອົງ, ພຣະເຈົ້າຊົງຍອມເສັຽສລະດັ່ງກ່າວນັ້ນກໍເພື່ອພຣະອົງຈະມີຄວາມໃກ້ຊິດກັບທ່ານ. ທ່ານໄດ້ເສັຽສລະສິ່ງໃດແດ່ເພື່ອສາມັກຄີທັມກັບພຣະອົງ? ທ່ານພ້ອມແລ້ວຫຼືຍັງທີ່ຈະຖວາຍເວລາໃຫ້ພຣະເຈົ້າວັນລະ 15 ນາທີ ເລີ້ມແຕ່ມື້ອື່ນເປັນຕົ້ນໄປ? ຖ້າທ່ານມີໃຈປາຖນາເຊັ່ນນັ້ນ ຂໍໃຫ້ທ່ານທູນຕໍ່ພຣະອົງດຽວນີ້ວ່າ

_______________________________________________________________________________

_______________________________________________________________________________

( ຈົບບົດຮຽນທີ 4 )

## ຄຳຕອບ:

1. ກ. ເພາະວ່າພຣະອົງຊົງຮັກຂ້ານ້ອຍກ່ອນ ຂ. ພຣະອົງຊົງສົ່ງພຣະບຸດລົງມາຊ່ວຍຂ້ານ້ອຍໃຫ້ລອດພົ້ນ

2. ກ. ຂ. ຄ.

3. ພຣະບິດາແລະພຣະບຸດ ຫຼື ອົງພຣະເຢຊູຄຣິດ.

4. ເຮັດໃຫ້ຂ້າພະເຈົ້າຮູ້ຈັກທາງທີ່ຄວນເດີນໄປ ຂ. ພຣະອົງຊົງໄດ້ຍິນຄຳອະທິຖານຂອງເຮົາ

5. ກ.=4, ຂ.=3, ຄ.=2, ງ.= 1

6. ເຂົ້າສນິດໃນພຣະອົງ

7. ກ. ເພື່ອຮູ້ຈັກກັບພຣະເຈົ້າດ້ວຍການສາມັກຄີທັມກັບພຣະອົງ ຂ. ເພື່ອຮັບການຊີ້ທາງແລະການຊົງນຳໃນການຕັດສິນໃຈແຕ່ລະວັນ ຄ. ເພື່ອທູນຂໍສິ່ງທີ່ຈຳເປັນຂາດເຂີນ ງ. ເພື່ອເກີດຜົນສຳລັບພຣະຄຣິດ

8. ກ.= ຖ, ຂ.=ຖ, ຄ.=ຜ, ງ.=ຖ

9. ຍາມມື້ເຊົ້າ

10. ຄຳຕອບຂອງທ່ານເອງ

11. ຄຳຕອບຂອງທ່ານເອງ

12. ໃນສະຖານທີ່ສງັດ ( ຫ້ອງສ່ວນຕົວ)

13. ຄຳຕອບຂອງທ່ານເອງ

14. ກ. ໃຫ້ກາຍເປັນນິສັຍ ຂ. ໃຫ້ມີສະມາທິ ຄ. ໃຫ້ມີໃຈຈົດຈໍ່ໃສ່ສິ່ງຝ່າຍວິນຍານ

15. ເພື່ອໃຫ້ພຣະເຈົ້າໄດ້ຍິນຄຳອະທິຖານຂອງເຮົາ

16. ກ. ມີວິນຍານທີ່ໃຫ້ອະພັຍ ຂ. ທູນຂໍໃນພຣະນາມພຣະເຢຊູ ຄ. ຍອມເຊື່ອຟັງ

17. ຂ

18. ກ.= 1, ຂ.=3, ຄ.=2, ງ.=4

19. ຄຳຕອບຂອງທ່ານເອງ 20. ຄຳຕອບຂອງທ່ານເອງ

# ຊີວິດຂອງສາວົກ

## ບົດຮຽນທີ 5

## <u>ຄຳສັນຍາຂອງສາວົກ</u>

ຂ້າພະເຈົ້າຊື່ ________________________________ ບັດນີ້ໄດ້ຖວາຍຕົວແກ່ອົງພຣະຜູ້ເປັນເຈົ້າແລ້ວ ແລະ ມີສ່ວນຮ່ວມໃນກຸ່ມສາວົກ (ລູກສິດຂອງພຣະເຢຊູ) ເພື່ອປະຕິບັດວຽກງານຂອງພຣະອົງໃຫ້ດີເທົ່າທີ່ຂ້າພະເຈົ້າມີຄວາມສາມາດ ( ອົບພະຍົບ 29:5-6, ເຢເຣມີຢາ 31:33 )

1. ຈະຍອມຮັບເອົາອົງພຣະເຢຊູຄຣິດໃຫ້ເປັນອົງພຣະຜູ້ເປັນເຈົ້າຂອງຂ້າພະເຈົ້າທຸກວັນ ( ລູກາ 6:46; ຟີລິບປອຍ 2:10-11 )

2. ຈະຮ່ວມຮຽນບົດຮຽນ "ຊີວິດຂອງສາວົກ" ທຸກບົດຮຽນ ເວັ້ນເສັຽແຕ່ເກີດການເຈັບໄຂ້ບໍ່ສະບາຍ. ໃນກໍຣະນີນີ້ ຂ້າພະເຈົ້າຈະຕິດຕໍ່ເອົາບົດຮຽນຈາກຜູ້ນຳເພື່ອຮຽນໃຫ້ທັນກັບເພື່ອນ ( ເຮັບເຣີ 10:25; ມັດທາຍ 18:20 )

3. ຈະໃຊ້ເວລາປະມານ 30 ນາທີ ຫາ 1 ຊົ່ວໂມງແຕ່ລະວັນ ເພື່ອເຮັດບົດຮຽນ ຫຼືວຽກບ້ານແຕ່ລະອາທິດໃຫ້ສຳເຣັດ ( 2 ຕີໂມທຽວ 2:15, 21; ລູກາ 6:40 )

4. ຈະໃຊ້ເວລາເຂົ້າເຝົ້າພຣະເຈົ້າແຕ່ລະວັນ ໂດຍການອະທິຖານ ແລະອ່ານພຣະຄັມພີ ( ເພງສັຣເສີນ 119:26-27 162, 164 )

5. ຈະສນັບສນູນຄຣິສຕະຈັກຂອງຂ້າພະເຈົ້າດ້ວຍການໄປນະມັສການບໍ່ຂາດ, ຖວາຍຊັບເຂົ້າພຣະຄັງ, ແລະອະທິຖານເພື່ອຄຣິສຕະຈັກ ( ກິຈການ 2:41-47; ເຮັບເຣີ 10:23-25 )

6. ຈະໃຊ້ເວລາແຕ່ລະອາທິດຮັບໃຊ້ຊ່ວຍເຫຼືອຄົນອື່ນຜ່ານທາງຄຣິສຕະຈັກ ແລະຕິດຕໍ່ພົວພັນກັບເຂົາເຈົ້າດ້ວຍຕົນເອງ ( ມັດທາຍ 25:34-40; ໂຢຮັນ 13:12-17 )

7. ຈະແບ່ງປັນເຣື່ອງພຣະເຢຊູຄຣິດເປັນປະຈຳ ກັບຄົນທີ່ຂ້າພະເຈົ້າຢາກນຳລາວມາເຖິງອົງພຣະເຢຊູ ( ມັດທາຍ 4:19; 28:19-20; ໂຢຮັນ 1:1-3 )

8. ຈະອະທິຖານເພື່ອສະມາຊິກໃນກຸ່ມທີ່ຮຽນດ້ວຍກັນ ( ໂກໂລຊາຍ 4:2; 1 ຊາມູເອນ 12:13 ) ດັ່ງມີຊື່ຂ້າງລຸ່ມນີ້

ການສຶກສາບົດຮຽນຊີວິດສາວົກນີ້ ເພື່ອຈັດຕຽມໃຫ້ທ່ານມີລະບຽບວິນັຍ ໃນການດຳເນີນຊີວິດປະຈຳວັນຂອງທ່ານ.

# ຊີວິດຂອງສາວົກ

## ບົດຮຽນທີ 6

## <u>ໄມ້ກາງແຂນສາວົກ</u>

ສາວົກຂອງພຣະເຢຊູ ຄືຜູ້ທີ່ຍອມໃຫ້ອົງພຣະຄຣິດເປັນພຣະຜູ້ເປັນເຈົ້າໃນຊີວິດຂອງລາວ. ພຣະທັມລູກາ 9:23 ກ່າວວ່າ "ແລ້ວພຣະອົງຊົງກ່າວກັບຄົນທັງຫຼາຍວ່າ, ຖ້າຜູ້ໃດຢາກຕາມເຮົາມາໃຫ້ຜູ້ນັ້ນຕັດສິດຂອງຕົນເອງເສັຽ ແລະ ຮັບແບກໄມ້ກາງແຂນຂອງຕົນທຸກວັນ ແລ້ວຕິດຕາມເຮົາມາ" ຈົ່ງສັງເກດເບິ່ງ ພຣະເຢຊູຊົງກ່າວວ່າເຮົາຕ້ອງກະທຳສາມຢ່າງຕໍ່ໄປນີ້:

ກ. ຕັດສິດຂອງຕົນເອງ ( ເອົາຊະນະຕົນເອງ )

ຂ. ແບກໄມ້ກາງແຂນຂອງຕົນທຸກວັນ

ຄ. ຕິດຕາມພຣະຄຣິດ

ການຕັດສິນໃຈຂັ້ນທຳອິດຂອງສາວົກນັ້ນຄືຕັດສິດຂອງຕົນເອງ. ທີ່ກ່າວມານີ້ບໍ່ໄດ້ຫມາຍເຖິງໃຫ້ປະຖິ້ມຄວາມເປັນໂຕຂອງຕົນເອງ ( ເອກລັກ ) ແຕ່ໃຫ້ປະຖິ້ມຊີວິດທີ່ເຫັນແກ່ໂຕ ຫຼືຄິດວ່າຕົນເອງດີກວ່າຄົນອື່ນ. ໃຫ້ທ່ານຂີດວົງມົນວົງນຶ່ງເພື່ອປຽບເຫມືອນຕົວຂອງທ່ານ ( ເລີ້ມຂີດວົງມົນ ). ວົງມົນນີ້ຫມາຍເຖິງການຕັດສິດຂອງຕົນເອງເພື່ອອົງພຣະຄຣິດ. ຜູ້ທີ່ບໍ່ສາມາດຕັດສິດຂອງຕົນໄດ້ ຈະເປັນສາວົກຂອງພຣະເຢຊູບໍ່ໄດ້. ພຣະທັມລູກາ 14:26 ກ່າວໄວ້ວ່າ "ຖ້າຜູ້ໃດມາຫາເຮົາແລະບໍ່ຊັງພໍ່ແມ່, ລູກເມັຽ, ອ້າຍນ້ອງຊາຍຍິງ ກັບທັງຊີວິດຂອງຕົນເອງ ຜູ້ນັ້ນຈະເປັນສິດຂອງເຮົາບໍ່ໄດ້" ຊຶ່ງມີຄວາມຫມາຍທີ່ເຂົ້າໃຈງ່າຍໆ ວ່າ <u>ບໍ່ມີສິ່ງໃດສຳຄັນລື່ນກວ່າອົງພຣະຄຣິດ.</u>

## <u>ວົງມົນ:</u> ເຂົ້າສນິດໃນພຣະຄຣິດ

ຖ້າຫາກວົງມົນນີ້ປຽບເຫມືອນຊີວິດຂອງທ່ານ, ກໍຄວນມີພຣະເຢຊູຢູ່ເຕັມວົງມົນນີ້ ( ຈົ່ງຂຽນຄຳວ່າ "ພຣະຄຣິດ" ໃສ່ໃນວົງມົນ.) ຊຶ່ງຫມາຍຄວາມວ່າພຣະອົງເປັນທີນຶ່ງ ລື່ນກວ່າທຸກໆ ສິ່ງ.

ຕັດສິດ: ລູກາ 9:23
ໄມ້ກາງແຂນ: ລູກາ 14:27
ຕິດຕາມ: ມັດທາຍ 4:19



ຊີວິດຄຣິສຕຽນໝາຍເຖິງພຣະເຢຊູຢູ່ໃນທ່ານ. ພຣະທັມໂຢຮັນ 5:15 ກ່າວວ່າ ( ຂຽນຂໍ້ພຣະທັມໂຢຮັນ 15:5 ໄວ້ກ້ອງຄຳວ່າ "ພຣະຄຣິດ" ໃນວົງມົນ), "ເຮົາເປັນເຄືອອະງຸ່ນ ທ່ານທັງຫຼາຍເປັນກິ່ງ ຜູ້ທີ່ເຂົ້າສນິດຢູ່ໃນເຮົາແລະເຮົາເຂົ້າສນິດຢູ່ໃນຜູ້ນັ້ນ ແມ່ນຜູ້ນັ້ນແຫຼະ, ຈະເກີດຜົນຫຼາຍ ເພາະຖ້າແຍກຈາກເຮົາແລ້ວພວກທ່ານບໍ່ອາດເຮັດສິ່ງໃດໄດ້." ທ່ານສາມາດເຮັດຫຍັງໄດ້ແດ່ ຖ້າບໍ່ເຂົ້າສນິດໃນພຣະຄຣິດ? ເຮັດຫຽັງບໍ່ໄດ້! ພຣະຄຣິດຊົງກ່າວວ່າພຣະອົງເປັນເຄືອພວກເຮົາເປັນກິ່ງ. ຖ້າກິ່ງເປັນພາກສ່ວນນຶ່ງຂອງເຄືອ ເຮົາກໍເປັນພາກສ່ວນນຶ່ງຂອງພຣະຄຣິດ. ພຣະອົງມີພຣະປະສົງຢາກດຳເນີນຊີວິດຂອງພຣະອົງຜ່ານທາງຊີວິດຂອງເຮົາ. ບໍ່ແມ່ນຊີວິດແບບນີ້ຫຼື ທີ່ທ່ານຕ້ອງການ?

ພຣະເຈົ້າຊົງຈັດແຈງທາງນຶ່ງໄວ້ເພື່ອໃຫ້ອົງພຣະຄຣິດເປັນສູນກາງແຫ່ງຊີວິດຂອງທ່ານ. ນີ້ແມ່ນການຕັດສິນໃຈຂັ້ນທີສອງທີ່ພວກເຮົາໄດ້ເວົ້າເຖິງຄື "ແບກໄມ້ກາງແຂນຂອງຕົນທຸກວັນ" . "ການຕັດສິດຂອງຕົນ" ເປັນຜົນ<u>ທາງເສັຍ</u> ເມື່ອເຮົາກາຍເປັນສາວົກຂອງພຣະເຢຊູ. "ແບກໄມ້ກາງແຂນຂອງທ່ານ" ເປັນຜົນ<u>ທາງໄດ້</u> ເມື່ອເຮົາກາຍເປັນສາວົກຂອງພຣະເຢຊູ. ການແບກໄມ້ກາງແຂນຂອງຕົນ ຄືການຍອມໃຫ້ພຣະເຢຊູເປັນສູນກາງໃນຊີວິດ. ອົງພຣະເຢຊູຊົງກ່າວໄວ້ໃນພຣະທັມລູກາ 14:27 ວ່າ "ຜູ້ໃດບໍ່ໄດ້ແບກໄມ້ກາງແຂນຂອງຕົນຕິດຕາມເຮົາມາ ຜູ້ນັ້ນຈະເປັນສິດຂອງເຮົາບໍ່ໄດ້" ໃຫ້ພວກເຮົາຍົກຕົວຢ່າງນີ້ໃຫ້ເຫັນແຈ້ງຂຶ້ນດ້ວຍການແຕ້ມຮູບໄມ້ກາງແຂນອ້ອມຮູບວົງມົນ. ( ຈົ່ງແຕ້ມຮູບໄມ້ກາງແຂນ ໂດຍໃຫ້ວົງມົນຢູ່ທາງກາງຮູບໄມ້ກາງແຂນ.)

ພຣະເຢຊູຊົງກ່າວວ່າຈົ່ງແບກໄມ້ກາງແຂນຂອງທ່ານທຸກວັນ. ມີຫຽັງແດ່ທີ່ກ່ຽວຂ້ອງກັບການແບກໄມ້ກາງແຂນ? ເມື່ອທ່ານໄດ້ຕັດສິດຂອງຕົນແລ້ວ ທ່ານກໍໄດ້ຮັບການຊົງໄຖ່ໄດ້ກາຍເປັນຜູ້ຮັບໃຊ້. ການແບກໄມ້ກາງແຂນຂອງຕົນແລະການຮັບໃຊ້ຄົນອື່ນ ຕ້ອງເປັນຄົນທີ່ຍອມຮັບຟັງຄຳສັ່ງສອນ. ຂໍໃຫ້ເຮົາຍົກຕົວຢ່າງໃນຮູບໄສ້ກາງແຂນເພື່ອໃຫ້ເຂົ້າໃຈແຈ້ງເຖິງຄຳສອນທີ່ພຣະເຢຊູຊົງກ່າວໄວ້.

## 1. <u>ທາງຕັ້ງດ້ານລຸ່ມຂອງໄມ້ກາງແຂນ:</u> ພຣະຄຳ

ຄຳສອນປະການທຳອິດທີ່ເຮົາຕ້ອງຍອມຮັບເອົາໃນຊີວິດຂອງເຮົາໄດ້ແກ່ "<u>ພຣະຄຳອັນມີຊີວິດ</u>" ( ຂໍໃຫ້ຂຽນຄຳວ່າ "ພຣະຄຳ" ໃສ່ທາງຕັ້ງດ້ານລຸ່ມຂອງໄມ້ກາງແຂນ ) ການຍອມໃຫ້ອົງພຣະເຢຊູຄຣິດຊົງສະຖິດຢູ່ໃນຊີວິດຂອງເຮົາຄືການຍອມຮັບເອົາພຣະຄຳຂອງພຣະອົງໄວ້ໃນຊີວິດເຮົາ. ອົງພຣະເຢຊູຊົງກ່າວໄວ້ໃນພຣະທັມໂຢຮັນ 8:31-32 ວ່າ "ຖ້າທ່ານທັງຫຼາຍຕັ້ງໝັ້ນຄົງຢູ່ໃນຖ້ອຍຄຳຂອງເຮົາ ພວກທ່ານກໍເປັນສາວົກແທ້ຂອງເຮົາ ແລ້ວພວກທ່ານຈະຮູ້ຈັກຄວາມຈິງ ແລະຄວາມຈິງນັ້ນຈະເຮັດໃຫ້ພວກທ່ານເປັນອິສຣະ" ( ຂຽນຂໍ້ພຣະທັມໂຢຮັນ 8:31-32 ໃສ່ທາງຕັ້ງດ້ານລຸ່ມຂອງຮູບໄມ້ກາງແຂນ.) ເຮົາຈະຮູ້ໄດ້ຢ່າງໃດວ່າເຮົາເປັນສາວົກແທ້ຂອງອົງພຣະເຢຊູ? ດ້ວຍການຕັ້ງໝັ້ນຄົງຢູ່ໃນພຣະຄຳ ພຣະຄຳນັ້ນກໍຈະເປັນອາຫານສຳລັບເຮົາ. ຊີວິດເຮົາຈະບໍ່ຈະເຣີນເຕີບໃຫຍ່ຂຶ້ນໄດ້ຖ້າຫາກບໍ່ໄດ້ຮັບພຣະຄຳເປັນອາຫານລ້ຽງເປັນປະຈຳ ເປັນຕົ້ນວ່າໄດ້ຮັບຟັງຄຳເທສນາ, ອ່ານພຣະຄັມພີ, ສຶກສາພຣະຄຳ, ທ່ອງຈຳພຣະຄຳ, ພິຈາຣະນາຕຶກຕອງພຣະຄຳ, ແລະນຳມາໃຊ້ໃນຊີວິດປະຈຳວັນຂອງເຮົາ. ການຍອມຮັບເອົາພຣະເຢຊູເປັນອົງພຣະຜູ້ເຈົ້າໝາຍຄວາມວ່າເຮົາຕ້ອງສຶກສາພຣະຄຳ ແລະພິຈາຣະນາຕຶກຕອງພຣະຄຳເປັນປະຈຳບໍ່ຂາດ. "ການຕັ້ງໝັ້ນຄົງຢູ່ໃນພຣະຄຳ" ຍັງໝາຍເຖິງການຍອມເຊື່ອຟັງພຣະເຢຊູອີກດ້ວຍ. ອົງພຣະເຢຊູຊົງກ່າວໄວ້ໃນພຣະທັມໂຢຮັນ 15:10 ( ຈົ່ງຂຽນຂໍ້ພຣະທັມ ໂຢຮັນ 15:10 ໃສ່ໃນວົງມົນຫຼັງຈາກອ່ານພຣະທັມຂໍ້ນີ້ແລ້ວ ) "ຖ້າພວກທ່ານຖືຮັກສາບັນຍັດຂອງເຮົາ ທ່ານກໍຈະຕັ້ງຢູ່ໃນຄວາມຮັກຂອງເຮົາ ເໝືອນດັ່ງເຮົາໄດ້ຖືຮັກສາບັນຍັດພຣະບິດາຂອງເຮົາ ເຮົາຈຶ່ງຕັ້ງຢູ່ໃນຄວາມຮັກຂອງພຣະອົງ" ການເຂົ້າສນິດໃນພຣະຄຣິດໝາຍຄວາມວ່າຍອມເຊື່ອຟັງພຣະອົງ.

## ໒. <u>ທາງຕັ້ງດ້ານເທິງຂອງຮູບໄມ້ກາງແຂນ:</u> ການອະທິຖານ

ຄຳສັ່ງສອນປະການທີສອງທີ່ສາວົກຕ້ອງຮັບເອົາໄວ້ໃນຊີວິດຂອງຕົນນັ້ນຄື "ການອະທິຖານດ້ວຍຄວາມເຊື່ອ" (ຈົ່ງຂຽນຄຳວ່າ "ອະທິຖານ" ໃສ່ທາງຕັ້ງດ້ານເທິງຂອງຮູບໄມ້ກາງແຂນ.) ສ່ວນປະກອບອີກຢ່າງນຶ່ງໃນການດຳເນີນຊີວິດໃນພຣະຄຣິດໄດ້ແກ່ການດຳເນີນຊີວິດດ້ວຍການອະທິຖານ. ອົງພຣະເຢຊູຊົງກ່າວໄວ້ໃນພຣະທັມໂຢຮັນ 15:7 ວ່າ (ຂຽນຂໍ້ພຣະທັມ ໂຢຮັນ 15:7 ໃສ່ທາງຕັ້ງດ້ານເທິງຂອງຮູບໄມ້ກາງແຂນ.) "ຖ້າທ່ານທັງຫຼາຍເຂົ້າສນິດຢູ່ໃນເຮົາ ແລະຖ້ອຍຄຳຂອງເຮົາຝັງຢູ່ໃນທ່ານແລ້ວ ພວກທ່ານຈະປາຖນາສິ່ງໃດຈົ່ງຂໍແລ້ວ ສິ່ງນັ້ນຈະເກີດມີແກ່ພວກທ່ານ" (ໃຫ້ຊີ້ໃສ່ຄຳວ່າ "ພຣະຄຣິດ" ແລະ "ພຣະຄຳ" ແລະ "ການອະທິຖານ" ໃນຂະນະທີ່ອ່ານໃນປະໂຍກຕໍ່ໄປນີ້) ຖ້າເຮົາເຂົ້າສນິດໃນ "<u>ພຣະຄຣິດ</u>", ແລະ "<u>ພຣະຄຳ</u>" ຂອງພຣະອົງຝັງຢູ່ໃນເຮົາ, ເຮົາ "<u>ອະທິຖານ</u>" ທູນຂໍສິ່ງໃດ ພຣະເຈົ້າຈະຊົງປະທານໃຫ້ແກ່ເຮົາ.

ຂໍ້ສັງເກດ: ທາງຕັ້ງຂອງໄມ້ກາງແຂນຊີ້ໃຫ້ເຫັນເຖິງຄວາມສັມພັນຂອງພຣະເຈົ້າແລະມະນຸດ (ຈາກເທິງລົງມາລຸ່ມ) ເປັນຫຼັກພື້ນຖານທີ່ເຮົາຕິດຕໍ່ສັມພັນກັບພຣະເຈົ້າ ແລະພຣະເຈົ້າຊົງຕິດຕໍ່ສັມພັນກັບພວກເຮົາ.

## 3. <u>ທາງນອນດ້ານຂວາຂອງຮູບໄມ້ກາງແຂນ:</u> ການສາມັກຄີທັມ

ຄຳສັ່ງສອນປະການທີສາມໃນຊີວິດຂອງສາວົກໄດ້ແກ່ "ການຮ່ວມສາມັກຄີທັມກັບຄຣິສຕຽນດ້ວຍກັນ" (ຈົ່ງຂຽນຄຳວ່າ "ສາມັກຄີທັມ" ໃສ່ທາງນອນດ້ານຂວາຂອງຮູບໄມ້ກາງແຂນ.) ການດຳເນີນຊີວິດໃນອົງພຣະຄຣິດໝາຍຄວາມວ່າເຮົາຕ້ອງພະຍາຍາມດຳເນີນຊີວິດໂດຍການຮ່ວມສາມັກຄີທັມກັນ ກັບບັນດາອ້າຍ, ເອື້ອຍ, ນ້ອງ ໃນອົງພຣະຄຣິດ. ພຣະເຢຊູຊົງກ່າວໄວ້ໃນພຣະທັມໂຢຮັນ 13:34-35 ວ່າ (ຂຽນຂໍ້ພຣະທັມໂຢຮັນ 13:34-45 ໃສ່ດ້ານຂວາຂອງຮູບໄມ້ກາງແຂນ.) "ເຮົາໃຫ້ບັນຍັດໃໝ່ໄວ້ແກ່ເຈົ້າທັງຫຼາຍ ຄືໃຫ້ພວກເຈົ້າຮັກກັນແລະກັນ ເຮົາຮັກເຈົ້າທັງຫຼາຍມາແລ້ວຢ່າງໃດ ພວກເຈົ້າຈົ່ງຮັກກັນແລະກັນດ້ວຍຢ່າງນັ້ນ. ຖ້າເຈົ້າທັງຫຼາຍມີຄວາມຮັກເຊິ່ງກັນແລະກັນ ດັ່ງນີ້ແຫຼະ, ຄົນທັງປວງກໍຈະໄດ້ຮູ້ວ່າເຈົ້າທັງຫຼາຍເປັນສາວົກຂອງເຮົາ." ອົງພຣະເຢຊູຊົງກ່າວວ່າ ການທີ່ຈະໃຫ້ຄົນອື່ນເຫັນວ່າເຮົາເປັນສາວົກຂອງພຣະອົງນັ້ນຄື ເຮົາຕ້ອງຮັກກັນແລະກັນ. ພຣະເຈົ້າຊົງຈັດແຈງສະຖານທີ່ແຫ່ງນຶ່ງເພື່ອໃຫ້ພວກເຮົາຈະເຣີນເຕີບໃຫຽ່ຂຶ້ນຄື "ຄຣິສຕະຈັກຂອງພຣະອົງ." ຄຣິສຕະຈັກບໍ່ແມ່ນຕຶກອາຄານ ຫຼືອົງການຈັດຕັ້ງ ເຖິງແມ່ນວ່າສອງຢ່າງນີ້ຈະໃຊ້ກັບຄຳວ່າຄຣິສຕະຈັກກໍຕາມ. ຄຣິສຕະຈັກໝາຍເຖິງຕົວຕົນຂອງບັນດາຜູ້ເຊື່ອ (ຄຣິສຕຽນ) ທັງຫຼາຍ ທີ່ໄດ້ຮັບຄຳສັນຍາດ້ວຍກັນເພື່ອນຳເອົາພາຣະກິດວຽກງານຂອງພຣະຄຣິດອອກໄປທົ່ວໂລກ. ທ່ານຈະພົບວ່າຄຣິສຕຽນທີ່ບໍ່ຄົບຄ້າສະມາຄົມ ຫຼືຮ່ວມສາມັກຄີທັມກັນກັບບັນດາຜູ້ເຊື່ອໃນທ້ອງຖິ່ນຂອງລາວ ລາວກໍເປັນຄົນທີ່ມີເຫດຜົນບໍ່ດີ, ແລະມີສະຕິທີ່ບໍ່ດີ. ຄຣິສຕະຈັກຄືພຣະກາຍຂອງພຣະຄຣິດ ຖ້າເຮົາດຳເນີນຊີວິດໃນພຣະຄຣິດ, ເຮົາຕ້ອງດຳເນີນຊີວິດໃນພຣະກາຍຂອງພຣະອົງ, ຄືຄຣິສຕະຈັກ ຫຼືບັນດາຜູ້ເຊື່ອດ້ວຍກັນ.

## 4. <u>ທາງນອນດ້ານຊ້າຍຂອງຮູບໄມ້ກາງແຂນ:</u> ເປັນພຍານ

ຄຳສັ່ງສອນປະການທີສີ່ໃນຊີວິດຂອງສາວົກໄດ້ແກ່ "ເປັນພຍານຕໍ່ໂລກ" (ຂຽນຄຳວ່າ "ພຍານ" ໃສ່ດ້ານຊ້າຍຂອງຮູບໄມ້ກາງແຂນ.) ການເປັນພຍານຄືການແບ່ງປັນເລົ່າເຣື່ອງພຣະຄຣິດສູ່ຄົນອື່ນຟັງ. ອົງພຣະເຢຊູຊົງກ່າວໄວ້ໃນພຣະທັມໂຢຮັນ 15:8 ວ່າ (ຈົ່ງຂຽນຂໍ້ພຣະທັມໂຢຮັນ 15:8 ໃສ່ດ້ານຊ້າຍຂອງຮູບໄມ້ກາງແຂນ.) "ໃນການນີ້ແຫຼະ, ພຣະບິດາຂອງເຮົາໄດ້ຊົງຮັບກຽດຕິຍົດ ຄືເມື່ອພວກທ່ານເກີດຜົນຫຼາຍ ພວກທ່ານຈຶ່ງເກີດເປັນສາວົກຂອງເຮົາ." ພຣະເຢຊູຊົງກ່າວວ່າການສະແດງອອກໃຫ້ຄົນອື່ນເຫັນວ່າເຮົາເປັນສາວົກຂອງພຣະອົງນັ້ນຄື ເຮົາຕ້ອງເກີດຜົນຫຼາຍ. ການເປັນພຍານເປັນທັມມະຊາດຂອງການຈະເຣີນເຕີບໃຫຽ່ຂຶ້ນຂອງຜູ້ດຳເນີນຊີວິດໃນພຣະຄຣິດ. ຖ້າເຮົາດຳເນີນຊີວິດໃນພຣະ

ຄຳທຸກວັນ, ອະທິຖານດ້ວຍຄວາມເຊື່ອ, ແລະຮ່ວມປະຊຸມສາມັກຄີທັມກັບໄພ່ພົນຂອງພຣະເຈົ້າ, ສິ່ງເຫຼົ່ານີ້ຈະກາຍເປັນທັມມະຊາດແລະຖືວ່າເປັນວຽກງານທີ່ເຮົາເຮັດເປັນປະຈຳ ໃນການແບ່ງປັນເຣື່ອງຂອງພຣະຄຣິດຜູ້ຊົງສະຖິດຢູ່ໃນ

ຊີວິດຂອງເຮົາ ແກ່ຄົນອື່ນ. ການເກີດຜົນ ບໍ່ພຽງແຕ່ເປັນພຍານເທົ່ານັ້ນ ເພາະວ່າການເປັນພຍານແລະການເກີດຜົນຈະຕ້ອງຄວບຄູ່ກັນໄປສເມີ. ອົງພຣະເຢຊູຊົງກ່າວໄວ້ໃນພຣະທັມມັດທາຍ 4:19 ວ່າ "ຈົ່ງຕາມເຮົາມາ ແລະເຮົາຈະບັນດານໃຫ້ເຈົ້າເປັນຜູ້ຫາຄົນ."

## <u>ຈາກການເຂົ້າສນິດໃນພຣະຄຣິດໄປສູ່ການເກີດຜົນ:</u>

ພຣະບັນຍັດທີສາມທີ່ກ່າວໄວ້ໃນພຣະທັມລູກາ 9:23 ຄືການຕິດຕາມພຣະຄຣິດ. ຖ້າເຮົາດຳເນີນຊີວິດໃນພຣະຄຣິດແລ້ວ ຕໍ່ຈາກນັ້ນເຮົາກໍຈະເກີດຜົນ. ໝາກຜົນນັ້ນບໍ່ຈຳເປັນຕ້ອງຈະເຣີ່ມເຕີບໃຫຽ່ຂຶ້ນຢ່າງໄວ ແຕ່ຈະເຣີ່ມເຕີບໃຫຽ່ຂຶ້ນໄປເລື້ອຍໆ ບໍ່ຢຸດ ແລະເກີດຜົນຕາມລະດູການ. ການເກີດຜົນຖືວ່າເປັນທັມມະດາແລະເປັນທັມມະຊາດ ຊຶ່ງເປັນຜົນມາຈາກການດຳເນີນຊີວິດທີ່ມີອົງພຣະເຢຊູຄຣິດເປັນສູນກາງ.

ຂໍໃຫ້ເບິ່ງວົງມົນທີ່ຢູ່ທາງກາງຮູບໄມ້ກາງແຂນອີກເທື່ອນຶ່ງ ທີ່ຂໍ້ພຣະທັມ ໂຢຮັນ 15:5. ຊີວິດຂອງເຮົາໃນອົງພຣະເຢຊູຄຣິດຄວນຈະເຣີ່ມຂຶ້ນແລະຈະເຣີ່ມອອກໄປເລື້ອຍໆ ຢ່າງບໍ່ສິ້ນສຸດ. ການເກີດຜົນມີສ່ວນກຽ່ວພັນກັບຝ່າຍຜົນຂອງພຣະວິນຍານຄື: ຄວາມຮັກ, ຄວາມຍິນດີ, ສັນຕິສຸກ, ຄວາມອົດກັ້ນໄວ້ນານ, ຄວາມປານີ, ຄວາມດີ, ຄວາມສັດຊື່, ຄວາມສຸພາບອ່ອນຫວານ, ການຮູ້ຈັກບັງຄັບຕົນ ( ຄາລາເຕັຽ 5:22-23 ) ເມື່ອຜົນຂອງຝ່າຍພຣະວິນຍານໄດ້ຈະເຣີ່ມເຕີບໃຫຽາຂຶ້ນໃນຊີວິດຂອງທ່ານ, ທ່ານກໍຈະອອກໄປບົວລະບັດຮັບໃຊ້ຄົນອື່ນໃນຫຼາຍຮູບຫຼາຍແບບ.

ໃຫ້ເຮົາແຕ້ມລູກສອນຊີ້ໃສ່ຮູບໄມ້ກາງແຂນ. ລູກສອນເຫຼົ່ານີ້ເປັນເຫມືອນສັນຍາລັກແຫ່ງຄວາມຈິງວ່າ ການເກີດຜົນຂອງເຮົາຄວນຈະເບິ່ງເຫັນຈາກການບົວລະບັດຮັບໃຊ້ຂອງເຮົາ. ການດຳເນີນຊີວິດໃນພຣະຄຳຈະນຳເຮົາໄປສູ່ການບົວລະບັດຮັບໃຊ້ດ້ານການສັ່ງສອນຫຼືການເທສນາ. ( ຈົ່ງຂຽນຄຳວ່າ "ການຮັບໃຊ້ດ້ານການສັ່ງສອນຫຼືການເທສນາໃສ່ດ້ານລຸ່ມຂອງຮູບໄມ້ກາງແຂນ.) ການອະທິຖານດ້ວຍຄວາມເຊື່ອຈະນຳເຮົາໄປສູ່ການບົວລະບັດຮັບໃຊ້ດ້ານການມະມັສການ ຫຼືການອະທິຖານເພື່ອ. ( ຈົ່ງຂຽນຄຳວ່າ "ການຮັບໃຊ້ດ້ານການມະມັສການ ຫຼືອະທິຖານເພື່ອ" ໃສ່ຂ້າງເທິງຂອງຮູບໄມ້ກາງແຂນ.) ການຮ່ວມສາມັກຄີທັມກັບພີ່ນ້ອງຄຣິສຕຽນຈະນຳເຮົາໄປສູ່ການບົວລະບັດຮັບໃຊ້ດ້ານການລ້ຽງດູສະມາຊິກໃນຄຣິສຕະຈັກ. ( ຈົ່ງຂຽນຄຳວ່າ "ການຮັບໃຊ້ດ້ານການລ້ຽງດູ" ໃສ່ຂ້າງຂວາຂອງຮູບໄມ້ກາງແຂນ.) ການເປັນພຍານຕໍ່ໂລກຈະນຳເຮົາໄປສູ່ການບົວລະບັດຮັບໃຊ້ດ້ານການປະກາດຂ່າວປະເສີດ. (ຈົ່ງຂຽນຄຳວ່າ "ການຮັບໃຊ້ດ້ານການປະກາດຂ່າວປະເສີດ" ໃສ່ຂ້າງຊ້າຍຂອງຮູບໄມ້ກາງແຂນ.) ຕາມທາງນອນທັງສອງຂ້າງຂອງຮູບໄມ້ກາງແຂນ ແມ່ນການບົວລະບັດຮັບໃຊ້ດ້ານການຊ່ວຍເຫຼືອ ( ຈົ່ງຂຽນຄຳວ່າ "ການຮັບໃຊ້ດ້ານການຊ່ວຍເຫຼືອ" ພ້ອມກັບຂໍ້ພຣະທັມໂຢຮັນ 15:13 ໃສ່ຂ້າງເທິງຂອງ ທາງນອນທັງສອງຂ້າງຂອງຮູບໄມ້ກາງແຂນ.) ພຣະທັມໂຢຮັນ 15:13 ກ່າວວ່າ "ບໍ່ມີຜູ້ໃດມີຄວາມຮັກໃຫຽ່ກວ່ານີ້ ຄືການທີ່ຜູ້ນຶ່ງຈະໄດ້ສລະຊີວິດຕາງມິດສະຫາຍຂອງຕົນ." ການບົວລະບັດຮັບໃຊ້ 5 ຢ່າງທີ່ກ່າວມານີ້ລວມຢູ່ໃນວຽກງານທັງຫມົດຂອງສາວົກ ແລະ ເປັນງານຂອງຄຣິສຕະຈັກຂອງອົງພຣະເຢຊູພຣະຄຣິດ.

ເປົ້າຫມາຍຂອງການເປັນສາວົກໄດ້ກ່າວໄວ້ໃນພຣະທັມ 2 ຕີໂມທຽວ 2:21 ຊຶ່ງກ່າວວ່າ "ເຫດສັນນັ້ນຖ້າຜູ້ໃດຊຳຣະຕົວໃຫ້ພົ້ນຈາກສິ່ງຊົ່ວເຫຼົ່ານັ້ນ ກໍຈະເປັນເຫມືອນພາຊະນະອັນມີກຽດ ຕັ້ງໄວ້ຕ່າງຫາກ ຊຶ່ງເປັນປໂຍດແກ່ເຈົ້າຂອງເຮືອນທີ່ຈັດໄວ້ພ້ອມແລ້ວສຳລັບການດີທຸກຢ່າງ." ເຮົາຈຳເປັນຕ້ອງຈະເຣີ່ມເຕີບໃຫຽ່ຂຶ້ນໃນຄຳສັ່ງສອນທັງ 5 ຢ່າງ

ນີ້ເພື່ອໃຫ້ເຮົາສາມາດຄວບຄຸມຊີວິດຂອງເຮົາ ແລະເພື່ອຈັດຕຽມໄວ້ໃຫ້ອົງພຣະຜູ້ເປັນເຈົ້າຊົງໃຊ້. ຖ້າເຮົາພັດທະນາ ຊີວິດດ້ວຍຄຳສັ່ງສອນທັງຫມົດນີ້ ຊີວິດຂອງເຮົາກໍຈະມີຄວາມດຸ່ນດ່ຽງແລະເກີດຜົນ.

## ຝຶກຫັດແຕ້ມຮູບໄມ້ກາງແຂນ

( ຫຼັງຈາກທ່ານສຶກສາບົດຮຽນນີ້ແລ້ວ ທ່ານອາດຈະເກັບບົດຮຽນນີ້ໄວ້ກັບບົດຮຽນ "ໃຊ້ເວລາກັບພຣະເຈົ້າ" )

( ຈົບບົດຮຽນທີ 6 )

# ຊີວິດຂອງສາວົກ

## ບົດຮຽນທີ 7

## ວິທີເຂົ້າເຝົ້າພຣະເຈົ້າສ່ວນຕົວ

ໃນຖານະທີ່ທ່ານເປັນຜູ້ທີ່ເຊື່ອແລ້ວ ທ່ານຕ້ອງຍອມຮັບວ່າອົງພຣະຄຣິດຕ້ອງເປັນສູນກາງໃນຊີວິດຂອງຄຣິສຕຽນ. ຄວາມຈິງດັ່ງກ່າວນີ້ ໄດ້ກ່າວເນັ້ນໜັກໃນການສຶກສາບົດຮຽນທີ່ຜ່ານມາ ( ອາທິດກ່ອນ). ການໃຊ້ເວລາກັບອົງພຣະຄຣິດຈະຊ່ວຍໃຫ້ທ່ານຮັບເອົາພຣະອົງເປັນສູນກາງໃນຊີວິດຂອງທ່ານ. ການໃຊ້ເວລາດັ່ງກ່າວນີ້ເອີ້ນວ່າ "ການໃຊ້ເວລາງຽບສງັດ" ຫຼື "ການເຂົ້າເຝົ້າພຣະເຈົ້າສ່ວນຕົວ". ຂ້າພະເຈົ້າເຫັນວ່າບໍ່ມີສິ່ງໃດສຳຄັນຕໍ່ຂ້າພະເຈົ້າຫຼາຍໄປກວ່າການເຂົ້າເຝົ້າພຣະເຈົ້າສ່ວນຕົວ ປະຈຳວັນ.

ຂ້າພະເຈົ້າເລີ່ມຕົ້ນດ້ວຍການພະຍາຍາມເຂົ້າເຝົ້າພຣະເຈົ້າສ່ວນຕົວ ໃນເວລາທີ່ຂ້າພະເຈົ້າຮຽນຢູ່ວິທະຍາລັຍ. ຂ້າພະເຈົ້າໄດ້ອ່ານເຣື່ອງຄຣິສຕຽນຄົນນຶ່ງທີ່ຕື່ນແຕ່ເວລາ 4:00 ໂມງເຊົ້າ ເພື່ອອ່ານພຣະຄັມພີນຶ່ງຊົ່ວໂມງ ແລະອະທິຖານອີກນຶ່ງຊົ່ວໂມງ ກ່ອນທີ່ລາວຈະຮັບປະທານອາຫານເຊົ້າ. ຂ້າພະເຈົ້າໄດ້ພະຍາຍາມເຮັດເຊັ່ນນັ້ນເໝືອນກັນ ແຕ່ເຮັດບໍ່ໄດ້ຕລອດໄປ. ຂ້າພະເຈົ້າເຮັດຕາມເວລາທີ່ກຳນົດໄວ້ໄດ້ປະມານພຽງສອງສາມວັນເທົ່ານັ້ນ ຫຼັງຈາກນັ້ນຂ້າພະເຈົ້າຮູ້ສຶກວ່າເມື່ອຍຫຼາຍແລະບໍ່ສາມາດຕື່ນຂຶ້ນຕາມເວລາ. ຂ້າພະເຈົ້າຮູ້ສຶກເສັຽໃຈທີ່ຂ້າພະເຈົ້າບໍ່ສາມາດເຮັດໄດ້ຢ່າງໝັ້ນຄົງ. ຕາມຄວາມຈິງແລ້ວ, ຂ້າພະເຈົ້າເກືອບໄດ້ຮັບອັນຕະລາຍທາງສຸຂພາບ ກ່ອນທີ່ຂ້າພະເຈົ້າຈະພົບວ່າ ເຣື່ອງຂອງຄຣິສຕຽນທີ່ຂ້າພະເຈົ້າໄດ້ອ່ານນັ້ນ ລາວເຂົ້ານອນແຕ່ເວລາປະມານ 8:00 ຫາ 9:00 ໂມງແລງ. ສ່ວນຂ້າພະເຈົ້າໄດ້ເຂົ້ານອນເດິກຫຼາຍເວລາປະມານ ບ່າຍ 1:00 ຫາ 2:00 ໂມງເຊົ້າ.

ໃນເວລານັ້ນຂ້າພະເຈົ້າໄດ້ອ່ານປຶ້ມບາງເຫຼັ້ມທີ່ເນັ້ນໜັກວ່າ ຄຣິສຕຽນທຸກຄົນຄວນໃຊ້ເວລາສັ້ນໆ ກັບອົງພຣະຜູ້ເປັນເຈົ້າທຸກໆ ຕອນເຊົ້າ. ມີຄຳແນະນຳໃນການວາງແຜນແບບງ່າຍໆ ເພື່ອໃຫ້ເຮົາບັນລຸເຖິງເປົ້າໝາຍດັ່ງກ່າວນັ້ນ. ດັ່ງນັ້ນ, ຂ້າພະເຈົ້າຈຶ່ງຕັດສິນໃຈວ່າ ບໍ່ວ່າຈະຕົກຢູ່ໃນສະພາບການໃດໆ ກໍຕາມ, ຂ້າພະເຈົ້າຕ້ອງສາມາດໃຊ້ເວລາກັບອົງພຣະຜູ້ເປັນເຈົ້າປະມານ 10 ນາທີໃຫ້ໄດ້ທຸກໆ ຕອນເຊົ້າ. ແນ່ນອນ, ອີກບໍ່ດົນຂ້າພະເຈົ້າກໍຍອມຮັບວ່າເວລາ 10 ນາທີນັ້ນຍັງບໍ່ພຽງພໍ. ຂ້າພະເຈົ້າຈຶ່ງເລີ່ມຕົ້ນໃໝ່ດ້ວຍການຕື່ນແຕ່ເຊົ້າກວ່າເກົ່າ ແລະໄດ້ຕັ້ງໂມງປຸກໄວ້ແຕ່ເຊົ້າເພື່ອໃຫ້ມີເວລາພຽງພໍໃນການເຂົ້າເຝົ້າພຣະເຈົ້າສ່ວນຕົວ ທຸກໆ ຕອນເຊົ້າ.

ບົດຮຽນຊີວິດຂອງສາວົກ ຂໍແນະນຳໃຫ້ທ່ານຈັດແຈ່ງເວລາປະມານ 15 ນາທີໄວ້ທຸກໆ ຕອນເຊົ້າເພື່ອເຂົ້າເຝົ້າພຣະເຈົ້າສ່ວນຕົວຂອງທ່ານ ຖ້າກວ່າທ່ານບໍ່ເຄີຍໄດ້ປະຕິບັດມາກ່ອນ ( ບໍ່ເຄີຍເຮັດຢ່າງນີ້ມາກ່ອນ )

ຂ້າພະເຈົ້າຕ້ອງຍອມຮັບວ່າ ການເຂົ້າເຝົ້າພຣະເຈົ້າສ່ວນຕົວ ບໍ່ພຽງແຕ່ເປັນວິນັຍທີ່ຕ້ອງປະຕິບັດ. ແຕ່ເປັນການນັດພົບກັບອົງພຣະເຢຊູຄຣິດເຈົ້າ ຜູ້ເປັນສູນກາງໃນຊີວິດຂອງທ່ານ ກ່ອນເລີ່ມຕົ້ນຂອງວັນໃໝ່ທຸກວັນ.

ເຄັດລັບດັ່ງຕໍ່ໄປນີ້ ເປັນສິ່ງທີ່ຂ້າພະເຈົ້າໄດ້ສຶກສາຮຽນຮູ້ ໃນການເຂົ້າເຝົ້າພຣະເຈົ້າສ່ວນຕົວຢ່າງໝັ້ນຄົງບໍ່ປ່ຽນແປງ.

1. ໃຫ້ການເຂົ້າເຝົ້າພຣະເຈົ້າສ່ວນຕົວ ເປັນທີ່ນຶ່ງກ່ອນສິ່ງອື່ນ ໃນແຕ່ລະວັນ.

- ເລືອກເອົາເວລາທີ່ຈະເຂົ້າເຝົ້າພຣະເຈົ້າ ໃຫ້ເໝາະສົມກັບຕາຕະລາງເວລາຂອງທ່ານ. ເລືອກເອົາເວລາເຊົ້າເປັນການດີທີ່ສຸດ, ແຕ່ທ່ານອາດຈະຈັດເວລາທີ່ຈະເຂົ້າເຝົ້າພຣະເຈົ້າສ່ວນຕົວ ໃນເວລາອື່ນກໍໄດ້.

## ຂ. ໃຫ້ຈັດຕຽມໄວ້ລ່ວງໜ້າໃນຍາມມື້ຄືນ.

- ຕັ້ງໂມງປຸກໄວ້ແຕ່ເຊົ້າພໍສົມຄວນ ເພື່ອໃຫ້ທ່ານມີເວລາພຽງພໍ. ການຕື່ນຂຶ້ນຍາມເຊົ້ານັ້ນເປັນສິ່ງທີ່ລໍາບາກ ແລະຍາກຫຼາຍ, ທ່ານອາດຈະວາງແຜນໄວ້ເພື່ອອອກກໍາລັງກາຍ, ແຖໜວດ/ຫຼືແຕ່ງໜ້າ ຫຼືນຸ່ງເຄື່ອງ ກ່ອນຈະເຂົ້າເຝົ້າພຣະເຈົ້າສ່ວນຕົວ.
- ເລືອກເອົາສະຖານທີ່ໆ ທ່ານສາມາດຈະໃຊ້ໄດ້ຢ່າງງຽບສງັດຕາມເວລາທີ່ຕຽມໄວ້. ຈັດຕຽມເຄື່ອງອຸປ ກອນໄວ້ແຕ່ຍາມມື້ຄືນເປັນຕົ້ນວ່າ: ພຣະຄັມພີ, ປຶ້ມຈົດບັນທຶກ, ປາກກາ, ຫຼືສໍຂຽນ. ນໍາສິ່ງເຫຼົ່ານີ້ໄປໄວ້ໃນ ສະຖານທີ່ໆ ທ່ານເລືອກໄວ້ແລ້ວນັ້ນ ດັ່ງນັ້ນທ່ານຈະບໍ່ເສັຽເວລາຊອກຫາໃນຕອນເຊົ້າ.

## 3. ພັດທະນາປັບປຸງແກ້ໄຂວາງແຜນເວລາອ່ານພຣະຄັມພີ ໃຫ້ດຸ່ນດ່ຽງກັນກັບເວລາອະທິຖານ.

- ອະທິຖານຂໍການຊົງນໍາໃນເວລາເຂົ້າເຝົ້າພຣະເຈົ້າສ່ວນຕົວຂອງທ່ານ.
- ເຮັດຕາມຣະບົບແລະແຜນການທີ່ວາງໄວ້ໃນການອ່ານພຣະຄັມພີ. ຕາມທັມມະດາແລ້ວ, ໝາຍເຖິງການ ອ່ານພຣະຄັມພີເຫຼັ້ມນຶ່ງໃຫ້ຈົບກ່ອນແລ້ວຈຶ່ງອ່ານເຫຼັ້ມຕໍ່ໄປ. ຈົ່ງເຮັດຕາມຄໍາແນະນໍາການວາງແຜນທີ່ກ່າວ ໄວ້ໃນ "ການໃຊ້ເວລາໂອ້ລົມກັບພຣະເຈົ້າປະຈໍາວັນ." ແຕ່ເຖິງຢ່າງໃດກໍຕາມ, ກໍຍັງມີແຜນການອື່ນໆ ອີກ ທີ່ດີ. ທ່ານອາດຈະເລືອກເອົາປຶ້ມການອ່ານພຣະຄັມພີປະຈໍາວັນເປັນຕົ້ນວ່າ ໂອເພັນ ວິນໂດວ໌, ການຝຶກອົບ ຮົມຂອງຄຣິສຕະຈັກ, ຫຼືບົດຮຽນໂຮງຮຽນວັນອາທິດ, ກໍໄດ້. ເລືອກເອົາແຜນການທີ່ເໝາະສົມທີ່ສຸດກັບ ຄວາມຕ້ອງການຂອງທ່ານ.
- ຈົດບັນທຶກໄວ້ວ່າພຣະເຈົ້າຊົງກ່າວຕໍ່ທ່ານຢ່າງໃດ ຜ່ານທາງພຣະຄໍາຂອງພຣະອົງ.
- ອະທິຖານໃຫ້ສອດຄ່ອງກັບຂໍ້ພຣະຄັມພີທີ່ທ່ານໄດ້ອ່ານ.
- ເມື່ອທ່ານອະທິຖານ, ໃຫ້ໃຊ້ພາກສ່ວນຕ່າງໆຂອງການອະທິຖານ. ມີແຜນການນຶ່ງທີ່ແນະນໍາໃຫ້ໃຊ້ຊຶ່ງເປັນ ພາສາອັງກິດຄື ACTS ຊຶ່ງສາມາດຊ່ວຍໃຫ້ທ່ານຈື່ຈໍາແຕ່ລະພາກສ່ວນຂອງການອະທິຖານ.

A = Adoration ສ= ສັຣເສີນ

C = Confession ສ= ສາລະພາບ

T = Thanksgiving ຂ= ຂອບພຣະຄຸນ

S = Supplication ຂ= ຂໍສິ່ງຂາດເຂີນ, ການຊ່ວຍເຫຼືອ

## 4. ຈົ່ງໃຊ້ຄວາມພາກພຽນອົດທົນ ຈົນກວ່າການປະຕິບັດມີຄວາມໝັ້ນຄົງ.

- ຈົ່ງແນໃສ່ການປະຕິບັດໃຫ້ໝັ້ນຄົງເປັນປະຈໍາ ຫຼາຍກວ່າແນໃສ່ຄວາມຍາວຂອງເວລາ. ການໃຊ້ເວລາ ສອງສາມນາທີເຂົ້າເຝົ້າພຣະເຈົ້າສ່ວນຕົວທຸກວັນ ດີກວ່າການໃຊ້ເວລາຫຼາຍໆ ນາທີ ແຕ່ດົນໆ ຈຶ່ງເຂົ້າເຝົ້າ ພຣະເຈົ້າເທື່ອນຶ່ງ. ນີ້ແມ່ນການວາງພື້ນຖານເພື່ອປະຕິບັດໃນຊ່ວງເວລາອັນຍາວນານໃນຊີວິດຂອງທ່ານ.
- ຕຽມໃຈໄວ້ເມື່ອຖືກລົບກວນ, ການເຂົ້າເຝົ້າພຣະເຈົ້າແຕກຕ່າງກັບການກະທໍາສິ່ງອື່ນໆ, ມານຊາຕານພະ ຍາຍາມກີດກັນເຮົາບໍ່ໃຫ້ມີເວລາກັບພຣະເຈົ້າ. ມານຈະເຮັດໃຫ້ຄຣິສຕຽນທີ່ອ່ອນແອຄຸເຂົ່າລົງຕໍ່ໜ້າມັນ. ຢ່າອ່ອນໃຈຫຼືທໍ້ຖອຍໃຈຕໍ່ບາງຄົນຫຼືບາງສະຖານະການທີ່ຂັດຂວາງຕໍ່ການເຂົ້າເຝົ້າພຣະເຈົ້າສ່ວນຕົວຂອງ ທ່ານ. ຈົ່ງວາງແຜນຕຽມໃຈຮັບຕໍ່ການກີດກັນທີ່ຈະເກີດຂຶ້ນໃນເວລາທີ່ທ່ານເຂົ້າເຝົ້າພຣະເຈົ້າ ແທນທີ່ຈະ ເກີດຄວາມອ່ອນໃຈ ແລະທໍ້ຖອຍໃຈ.

5. ຈົ່ງຕັ້ງໃຈວ່າຈະເຂົ້າໄປພົບບຸກຄົນນັ້ນ (ອົງພຣະຜູ້ເປັນເຈົ້າ) ແທນທີ່ຈະຄິດວ່າທ່ານຈໍາເປັນຕ້ອງກະທໍາຕາມພິທີ ເພາະເປັນໜ້າທີ່ຂອງຄຣິສຕຽນທີ່ຕ້ອງເຂົ້າເຝົ້າພຣະເຈົ້າປະຈໍາວັນ.

- ສົມສຸດວ່າທ່ານຈະໄປພົບກັບປະທານາທິບໍດີ ຜູ້ປົກຄອງປະເທດ ໃນເວລານັ້ນທ່ານຈະບໍ່ຍອມໃຫ້ສິ່ງໃດມາຂັດຂວາງການເດີນທາງຂອງທ່ານ. ຖ້າຫາກທ່ານຈະເຂົ້າພົບກັບອົງພຣະຜູ້ເປັນເຈົ້າເດ? ຄວາມສໍາພັນຂອງທ່ານກັບພຣະເຈົ້າມີຄວາມສໍາຄັນຕໍ່ພຣະອົງຫຼາຍ ແລະຄວາມສັມພັນຂອງພຣະອົງກັບທ່ານກໍມີຄວາມສໍາຄັນຫຼາຍຕໍ່ທ່ານເຫມືອນກັນ. ພຣະອົງຊົງສ້າງທ່ານເພື່ອໃຫ້ທ່ານມີໃຈຢາກຮ່ວມສາມັກຄີທັມກັບພຣະອົງ ແລະພຣະອົງຊົງຊ່ວຍເຫຼືອທ່ານ ເພື່ອໃຫ້ທ່ານມີຄວາມສັມພັນໃຫມ່ກັບພຣະອົງອີກ.

( ຫຼັງຈາກສຶກສາບົດຮຽນນີ້ແລ້ວ ທ່ານຄວນເກັບບົດຮຽນນີ້ໄວ້ກັບບົດຮຽນ "ການໃຊ້ເວລາກັບພຣະເຈົ້າ." )

( ຈົບບົດຮຽນທີ 7 )

# ຊີວິດຂອງສາວົກ

## ບົດຮຽນທີ 8

## <u>ແບກໄມ້ກາງແຂນຂອງທ່ານ</u>

ອົງພຣະເຢຊູຊົງສະເດັດເຂົ້າມາໃນໂລກ ຊົງບັງເກີດເປັນມະນຸດ ເພື່ອໃຫ້ມະນຸສໂລກໄດ້ເຫັນພຣະລັກສະນະຂອງພຣະເຈົ້າໃນຊີວິດຂອງພຣະອົງ. ພຣະອົງຊົງສຳເຣັດພາຣະກິດວຽກງານຂອງພຣະອົງ ຄືຊົງຈັດຕຽມທາງແຫ່ງຄວາມລອດພົ້ນໄວ້ສຳລັບມະນຸດທຸກຄົນ.

ດັ່ງນັ້ນ, ອົງພຣະເຢຊູຄຣິດຈຶ່ງຊົງຮຽກຮ້ອງບາງສິ່ງຈາກສາວົກຂອງພຣະອົງ. ການສຶກສາຕໍ່ໄປນີ້ ທ່ານຈະໄດ້ຄົ້ນຄວ້າເບິ່ງ ພື້ນຖານການຕັດສິນໃຈ 3 ຢ່າງຂອງຜູ້ເປັນສາວົກ.

ເມື່ອທ່ານສຶກສາບົດຮຽນນີ້ຈົບແລ້ວ ທ່ານຈະສາມາດ...
- ຮູ້ຈັກຫຼັກເບື້ອງຕົ້ນ 3 ປະການໃນການຕັດສິນໃຈຂອງສາວວົກ
- ອະທິບາຍເຖິງແຮງບັນດົນໃຈໃນການຕັດສິນໃຈແຕ່ລະຢ່າງ
- ປະເມີນເບິ່ງລຳດັບການເຕີບໃຫຍ່ຂອງທ່ານເອງ ຜູ້ເປັນສາວົກ

ຈົ່ງເຮັດບົດຮຽນຕໍ່ໄປນີ້ໃຫ້ສຳເຣັດ. ຫຼັງຈາກຕອບຄຳຖາມທຸກຂໍ້ແລ້ວ, ກວດເບິ່ງຄຳຕອບຂອງທ່ານໃສ່ກັບຄຳຕອບຢູ່ຕອນທ້າຍຂອງບົດຮຽນນີ້. ນຳເອົາບົດຮຽນນີ້ເພື່ອໄປແລກປ່ຽນຄວາມຄະດເຫັນກັນກັບຜູ້ທີ່ສຶກສາບົດຮຽນນີ້ດ້ວຍກັນ.

1. ໃນພຣະທັມລູກາ 9:23 ອົງພຣະເຢຊູຊົງກ່າວເຖິງພື້ນຖານເບື້ອງຕົ້ນໃນການຕັດສິນໃຈຂອງຜູ້ເປັນສາວົກ. ອ່ານພຣະຄັມພີຕອນນີ້ ແລ້ວຂຽນຄຳຕອບໃສ່ຊ່ອງຫວ່າງດັ່ງຕໍ່ໄປນີ້ "ຖ້າຜູ້ໃດຢາກຕາມເຮົາມາ, ໃຫ້ຜູ້ນັ້ນ _______ ແລະ ຮັບ ________________ ທຸກວັນ, ແລ້ວ__________ ເຮົາມາ.

2. ຫຼັກເບື້ອງຕົ້ນ 3 ປະການໃນການຕັດສິນໃຈໄດ້ແກ່...

__ຕັດສິດຂອງຕົນ ( ເອົາຊະນະຕົນເອງ )

__ແບກໄມ້ກາງແຂນຂອງຕົນ

__ຕິດຕາມ ອົງພຣະເຢຊູ

**ສຳຣວດເບິ່ງກ້ານຕັດສິນໃຈປະການທີນຶ່ງ:** ອົງພຣະເຢຊູຊົງເປັນແບບຢ່າງແກ່ເຮົາໃນການຕັດສິດຂອງຕົນ. ພຣະອົງຍອມເສັຽສລະຊີວິດອັນຜາສຸກໃນສວັນ ເພື່ອລົງມາຊ່ວຍຫຼືປະທານຊີວິດໃຫມ່ໃຫ້ແກ່ມະນຸສໂລກ.

1. ອ່ານພຣະທັມລູກາ 14:26-27 ເມື່ອອົງພຣະເຊູຊົງໃຊ້ຄຳວ່າ "ຊັງ" ພຣະອົງຫມາຍຄວາມວ່າຢ່າງໃດ? ກະຣຸນາຫມາຍຕົນກາໃສ່ຊ່ອງຫວ່າງຂ້າງຫນ້າຂໍ້ໃດຂໍ້ນຶ່ງພຽງຂໍ້ດຽວ.

[ ] ກ. ໃຫ້ຊັງຕົວທ່ານເອງ ແລະຄອບຄົວຂອງທ່ານດ້ວຍ

[ ] ຂ. ມີຄວາມຈົງຮັກພັກດີຕໍ່ພຣະເຢຊູ ຊຶ່ງເປັນຜູ້ສູງສຸດຕໍ່ການຕັດສິນໃຈໃນຊີວິດຂອງທ່ານ

[ ] ຄ. ເຫັນວ່າທັງຕົວທ່ານເອງ ແລະ ຄອບຄົວຂອງທ່ານເປັນສັດຕຣູຕໍ່ໄມ້ກາງແຂນ

2. ຄຳສອນຂອງພຣະເຢຊູແລະການເປັນແບບຢ່າງຂອງພຣະອົງທັງສອງຢ່າງນີ້ ສະແດງວ່າພຣະອົງເຫັນວ່າຄອບຄົວ

ມີຄວາມສຳຄັນຫຼາຍ. ພຣະເຢຊູບໍ່ມີພຣະປະສົງໃຫ້ການຕັດສິນໃຈຂອງເຮົາໃນຕິດຕາມພຣະອົງ ເປັນຂໍ້ແກ້ຕົວທີ່ບໍ່ຢາກຮັບຜິດຊອບເຊິ່ງກັນແລະກັບສະມາຊິກໃນຄອບຄົວ. ພຣະອົງຊົງຮຽກຮ້ອງວ່າການຕັດສິນໃຈທຸກຢ່າງ ແມ່ນແຕ່ລະຫວ່າງຄົນພາຍໃນຄອບຄົວ ຕ້ອງໃຫ້ພຣະອົງມີສ່ວນກ່ຽວຂ້ອງດ້ວຍ.

3. ອ່ານພຣະທັມລູກາ 9:23-24. ພຣະເຢຊູຊົງອະທິບາຍວ່າຜູ້ໃດຊ່ວຍຊີວິດຂອງຕົນໃຫ້ພົ້ນຜູ້ນັ້ນຈະເສັຽຊີວິດ. ຕາມຫຼັກຄຳສອນເບື້ອງຕົ້ນຂອງພຣະຄັມພີຂໍ້ນີ້ ຂໍໃຫ້ທ່ານຂຽນຄຳວ່າ "ຖືກ" ຫຼື "ຜິດ" ໃສ່ຊ່ອງຫວ່າງຂ້າງໜ້າຂໍ້ຄວາມຂ້າງລຸ່ມນີ້

___ກ. ການຮັບໃຊ້ເພື່ອອົງພຣະຄຣິດມີຄ່າຫຼາຍກວ່າຊີວິດຂອງຂ້າພະເຈົ້າເອງ.

___ຂ. ການຮັບໃຊ້ພຣະເຢຊູຄຣິດຈະຊ່ວຍໃຫ້ຂ້າພະເຈົ້າເອົາຊະນະຄວາມເຫັນແກ່ໂຕ.

4. ແມ່ນຫຍັງເປັນແຮງດົນໃຈໃຫ້ຄົນໃດຄົນນຶ່ງຕັດສິດຂອງຕົນ? ເປັນຍ້ອນວ່າລາວມີຊີວິດໃໝ່ ຄືພຣະຄຣິດ ເປັນສູນກາງໃນຊີວິດຂອງລາວ, ລາວມີຄວາມຈິງຮັກພັກດີໃໝ່ ລາວຈຶ່ງເລີ້ມຮັບໃຊ້ຄົນອື່ນແລະຮັກຄົນອື່ນ, ຄວາມເຫັນແກ່ໂຕກໍໝົດໄປ. ການຮັບໃຊ້ແລະຄວາມຮັກຂອງລາວຈະຈົດຈໍ່ແນໃສ່ອົງພຣະເຢຊູຄຣິດ ແລະຄົນອື່ນ.

ອ່ານພຣະທັມຄາລາເຕັຽ 2:20 ອາຈານໂປໂລກາຍເປັນ "ຜູ້ຮັບໃຊ້ຄົນອື່ນ" ກໍຍ້ອນວ່າພຣະຄຣິດຊົງສະຖິດຢູ່ນຳເພິ່ນ ຕັ້ງແຕ່ນັ້ນມາເພິ່ນຈຶ່ງມີຊີວິດໃໝ່ ຄືອົງພຣະເຢຊູຄຣິດ ຜູ້ຊົງເປັນສູນກາງໃນຊີວິດຂອງເພິ່ນ.

ອະທິບາຍເປັນຄຳເວົ້າຂອງທ່ານເອງວ່າ ແມ່ນຫຍັງເປັນສາຍເຫດພາໃຫ້ທ່ານຕັດສິດຂອງຕົນ

_______________________________________________________________________________

"ແບກໄມ້ກາງແຂນຂອງທ່ານ" ຄືການຕັດສິນໃຈປະການທີສອງຂອງສາວົກ: ອົງພຣະເຢຊູຊົງແບກໄມ້ກາງແຂນຂອງພຣະອົງໄປຍັງ ໂກລະໂກທາ. ໃນພຣະທັມໂຢຮັນ 12:24 ອົງພຣະເຢຊູຊົງອະທິບາຍເຖິງເຫດຜົນວ່າເປັນຫຍັງພຣະອົງຈຶ່ງຕ້ອງສິ້ນພຣະຊົນ. ພຣະອົງຊົງປຽບທຽບວ່າ ເຂົ້າເມັດນຶ່ງຈະຕ້ອງເປື່ອຍເໜົ່າຕາຍໄປ ເພື່ອໃຫ້ເຂົ້າໃໝ່ເກີດຂຶ້ນມາຢ່າງຫຼວງຫຼາຍ.

1. ອ່ານພຣະທັມໂຢຮັນ 12:24 ແລ້ວຂີດເສັ້ນກ້ອງຂໍ້ຄວາມຂ້າງລຸ່ມນີ້ ທີ່ທ່ານເຫັນວ່າສອດຄ່ອງກັບຄຳອະທິບາຍໃນການປຽບທຽບຂອງອົງພຣະເຢຊູຄຣິດ.

ກ. ຊີວິດເກົ່າຕ້ອງຕາຍໄປ ເພື່ອໃຫ້ຊີວິດໃໝ່ເກີດຂຶ້ນມາ

ຂ. ການຕາຍໝາຍຄວາມວ່າ ທ່ານອາດຈະຢູ່ໂດດດ່ຽວປ່ຽວພອຍ.

2. ການຕັດສິນຂອງຕົນ ເນັ້ນໜັກເຖິງການປິ່ນຫຼັງໃສ່ຄວາມເຫັນແກ່ໂຕຂອງຕົນ ແລ້ວປິ່ນໜ້າມາຫາອົງພຣະຄຣິດ. ແບກໄມ້ກາງແຂນຂອງຕົນ ຈະຕ້ອງຮ່ວມກັບພຣະຄຣິດເພື່ອຊ່ວຍເຫຼືອບັນດາຜູ້ທີ່ຕ້ອງການຄວາມຊ່ວຍເຫຼືອ. ຜົນຮັບປະການທີນຶ່ງເປັນ ນິມິດໃໝ່ <u>ຂອງຕົນເອງທີ່ຕ້ອງກະທຳ</u>; ສ່ວນຜົນຮັບປະການທີສອງເປັນ ນິມິດໃໝ່ ທີ່ທ່ານຈະຕ້ອງ <u>ຊ່ວຍເຫຼືອຄົນອື່ນທີ່ຂາດເຂີນ.</u>

ອ່ານພຣະທັມລູກາ 14:27 ແມ່ນຫຍັງຈະເກີດຂຶ້ນແກ່ຜູ້ທີ່ປະຕິເສດ ບໍ່ຍອມແບກໄມ້ກາງແຂນຂອງຕົນ?

---

3. ແບກໄມ້ກາງແຂນຂອງຕົນ ຕ້ອງລວມທັງການຍອມເສັຽສລະ, ມີໃຈຮັກຕໍ່ການຮັບໃຊ້ຊ່ວຍເຫຼືອຄົນອື່ນ. ຂີດເສັ້ນກ້ອງຂໍ້ຄວາມຕໍ່ໄປນີ້ ວ່າຄວາມປະພຶດອັນໃດທີ່ເປັນຜົນມາຈາກແບກໄມ້ກາງແຂນ.

ຮັກສັດຕຣູ ເວົ້າຕົວະ ເປັນພະຍານ

ອະພັຍໃຫ້ຄົນອື່ນ ຊ່ວຍຜູ້ຂາດເຂີນ ສ້າງຄວາມແຕກແຍກ

ຫາທາງແກ້ແຄ້ນ ເປັນເພື່ອນຄົນປຣ່ວພອຍ ທົນຕໍ່ຄວາມຍາກລຳບາກ

4. ໃນພຣະທັມຟີລິບປອຍ 2:8 ອາຈານໂປໂລໄດ້ອະທິບາຍວ່າ ເປັນຍ້ອນເຫດໃດພຣະເຢຊູຈຶ່ງເຕັມພຣະທັຍແບກໄມ້ກາງແຂນຂອງພຣະອົງ. ເຖິງແມ່ນວ່າການແບກໄມ້ກາງແຂນຂອງຕົນຈະໝາຍເຖິງການສິ້ນພຣະຊົນເທິງໄມ້ກາງແຂນ ແຕ່ຄວາມໝາຍອັນແທ້ຈິງນັ້ນຄື ອົງພຣະເຢຊູຊົງຍອມເຊື່ອຟັງຕາມນ້ຳພຣະທັຍຂອງພຣະບິດາໃນຊີວິດຂອງພຣະອົງ ເຮົາສາມາດຮຽນຮູ້ຈາກອົງພຣະເຢຊູ ເຖິງການແບກໄມ້ກາງແຂນ ຊຶ່ງໄມ້ກາງແຂນຂອງຄຣິສຕຽນມີບຸກຄະລິກຢູ່ສອງຢ່າງຄື (1) ເປັນການຕັດສິນໃຈແບບອາສາສມັກ (2) ເປັນການປະຕິບັດຕາມດ້ວຍຄວາມນອບນ້ອມຍອມຟັງ.

ກ. ຖ້າຫາເຮົາບໍ່ຍອມແບກໄມ້ກາງແຂນຂອງຕົນ, ເຮົາຈະເຮັດບາບອັນໃດໃນຂ້າງລຸ່ມນີ້ ຂີດວົງມົນອ້ອມພຽງຖ້ອຍຄຳດຽວ ໃນຖ້ອຍຄຳຕໍ່ໄປນີ້:

ບໍ່ຍອມເຊື່ອຟັງ ບໍ່ຈົ່ງຮັກພັກດີ ບໍ່ມີຄວາມເຊື່ອ

ຂ. ແມ່ນຫຍັງເປັນສາຍເຫດໃຫ້ທ່ານແບກໄມ້ກາງແຂນຂອງຕົນ?

"<u>ການຕິດຕາມພຣະເຢຊູ</u>" ຄືການຕັດສິນໃຈຂັ້ນທີສາມຂອງສາວົກ: ອົງພຣະເຢຊູຊົງເຮັດຕາມນ້ຳພຣະທັຍພຣະບິດາພຣະອົງຊົງສະຖິດຢູ່ກັບພຣະບິດາກ່ອນສ້າງໂລກ ( ໂຢຮັນ 1:1 ) ໃນຂະນະທີ່ພຣະອົງຈະເຣີນເຕີບໃຫຍ່ຂຶ້ນ ພຣະອົງຊົງຮຽນຮູ້ຈາກພຣະບິດາ ຄືຄວາມຈິງທຸກປະການທີ່ພຣະບິດາຊົງສັ່ງສອນ. ພຣະອົງຊົງກະທຳພາຣະກິດທຸກຢ່າງດ້ວຍຣິດອຳນາດຂອງພຣະບິດາ. ພຣະບິດາຊົງເປີດເຜີຍພຣະປະສົງຂອງພຣະອົງຕໍ່ພຣະເຢຊູຄຣິດ. ອົງພຣະເຢຊູຄຣິດຊົງເປັນຜູ້ຮັບອະນຸຍາແລະເປັນຜູ້ຕາງໜ້າພຣະບິດາ ( ໂຢຮັນ 5:19-43 )

1. ເມື່ອອົງພຣະເຢຊູຊົງກະທຳຕາມນ້ຳພຣະທັຍຂອງພຣະເຈົ້າ, ຜູ້ເປັນສາວົກຂອງພຣະເຢຊູກໍຕ້ອງເຮັດຕາມນ້ຳພຣະທັຍພຣະອົງເໝືອນກັນ. ຂໍ້ຄວາມຂ້າງລຸ່ມນີ້ໄດ້ເວົ້າເຖິງຄຳສອນຂອງພຣະເຢຊູ ກ່ຽວກັບການຕິດຕາມພຣະອົງ. ຈົ່ງເລືອກເອົາ 1, 2, 3, 4 ຈາກຂໍ້ຄວາມທາງຂວາໄປໃສ __ ຊ່ອງຫວ່າງຂ້າງໜ້າຂໍ້ພຣະຄັມພີທາງຊ້າຍ ທີ່ທ່ານເຫັນວ່າສອດຄ່ອງກັນ.

__ ກ. ມັດທາຍ 11:28 ( 1 ) ຜູ້ເປັນສາວົກໄດ້ຮັບຣິດ ແລະມີອຳນາດ.

__ ຂ. ມາຣະໂກ 1:17 ( 2 ) ຜູ້ເປັນສາວົກຈະກາຍເປັນຜູ້ຫາຄົນ.

__ ຄ. ລູກາ 9:1-2 ( 3 ) ຜູ້ເປັນວາສາວົກ ໄດ້ພັກຜ່ອນເຊົາເມື່ອຍໃນພຣະອົງ.

__ ງ. ໂຢຮັນ 12:26 ( 4 ) ຜູ້ເປັນສາວົກໄດ້ຮັບໃຊ້ພຣະເຢຊູ ເມື່ອຕິດຕາມພຣະອົງ.

2. ຂໍ້ພຣະຄັມພີຂ້າງເທິງນີ້ ໄດ້ຮວບຮວມຜົນທີ່ໄດ້ຮັບຈາກການຕິດຕາມອົງພຣະເຢຊູດັ່ງນີ້: (ກ) ຮອບຮູ້ເຖິງຄວາມຈິງ, ( ຂ ) ເຂົ້າໃຈນ້ຳພຣະທັຍພຣະເຈົ້າ. ( ຄ ) ຈິດວິນຍານໄດ້ເຊົາເມື່ອຍ. ( ງ ) ໄດ້ຮັບຣິດແລະມີອຳນາດ. ແລະ

( ຈ ) ມີຣິດອຳນາດ ເປັນຜູ້ຕາງໜ້າອົງພຣະເຢຊູ.

ໃນເວລານີ້, ດຽວນີ້ທ່ານຕ້ອງການຜົນຮັບອັນໃດຫຼາຍກວ່າໝູ່ທີ່ສຸດ? ເປັນຫຍັງທ່ານຈຶ່ງຕ້ອງການຜົນຮັບອັນນີ້

---

3. ເປັນຫຍັງຄຣິສຕຽນຈຶ່ງຄວນຕິດຕາມອົງພຣະເຢຊູຄຣິດ? ຄຳຕອບທີ່ແຈ່ມແຈ້ງກໍຄື ເຂົາເຈົ້າຢາກຢູ່ກັບພຣະອົງ. ການຕິດຕາມອົງພຣະເຢຊູຕ້ອງມີສ່ວນຮ່ວມໃນການປະກອບສ່ວນເພື່ອນຳວິນຍານທີ່ຫຼົງຫາຍມາເຖິງພຣະອົງ ແລະ ສ້າງສາວົກໃໝ່ຕ່າງ ໄປ.

ອີງຕາມຂໍ້ຄວາມທີ່ກ່າວມາຂ້າງເທິງນີ້ ຈົ່ງຂີດວົງມົນອ້ອມຄຳໃດຄຳນຶ່ງຂ້າງລຸ່ມນີ້ ເພື່ອສະແດງໃຫ້ເຫັນເຖິງເຫດຜົນ ( ແຮງບັນດານໃຈ ) ທີ່ດີທີ່ສຸດໃນການຕິດຕາມອົງພຣະເຢຊູ:

ຢາກຮ່ວມສາມັກຄີທັມກັບພຣະອົງ ມີຄວາມຕື່ນເຕັ້ນ ມີຄວາມໂຄຣົບ

4. ຈົ່ງຕື່ມຂໍ້ຄວາມໃສ່ຊ່ອງຫວ່າງໃນຕາຕະລາງຕໍ່ໄປນີ້ໃຫ້ສຳເຣັດ ຊຶ່ງເປັນພື້ນຖານຂັ້ນຕົ້ນໃນການຕັດສິນໃຈເປັນສາວົກ, ເປັນເຫດຜົນ ແລະແຮງບັນດານໃຈໃນການຕັດສິນໃຈແຕ່ລະຢ່າງ.

| ຫົວຂໍ້ | ການຕັດສິນໃຈ | ເຫດຜົນ ( ແຮງບັນດານໃຈ ) |
|---|---|---|
| ກ. | | |
| ຂ. | | |
| ຄ. | | |

5. ຖ້ອຍຄຳທີ່ແປຈາກ Life ວ່າ "ຊີວິດ" ໃນພຣະທັມລູກາ 9:24 ແລະພຣະທັມໂຢຮັນ 12:25 ແລະຖ້ອຍຄຳທີ່ແປຈາກ Soul ວ່າ "ຈິດໃຈ" ໃນພຣະທັມມັດທາຍ 11:29 ຊຶ່ງມາຈາກຮາກຄຳສັບ Psuche. ຄຳວ່າ Psychology ໝາຍເຖິງຈິຕະວິທຍາ, ຫຼັກວິຊາວ່າດ້ວຍທາງຈິດໃຈ. ຄຳວ່າ Psuche ມີຄວາມໝາຍທັງສອງຢ່າງດັ່ງຕໍ່ໄປນີ້ຄື:

( ກ ) ໝາຍເຖິງ ຄວາມຕັ້ງໃຈ, ຄວາມຕ້ອງການ, ຄວາມເຫັນຊອບ ຊຶ່ງບາງຄັ້ງເອີ້ນວ່າ "ຈິດໃຈ"

( ຂ ) ໝາຍເຖິງ ຕົນເອງ ຫຼືບຸກຄົນໃດບຸກຄົນນຶ່ງ.

ຈົ່ງອ່ານພຣະທັມລູກາ 9:24 ແລະພຣະທັມໂຢຮັນ 12:25 ແລ້ວໝາຍຕົນກາໃສ່ຂ້າງໜ້າຂໍ້ຄວາມຂ້າງລຸ່ມນີ້ທີ່ອະທິບາຍວ່າ ແມ່ນຫຍັງຈະເກີດຂຶ້ນຕໍ່ "ຊີວິດ" ຂອງສາວົກອັນແທ້ຈິງຂອງອົງພຣະເຢຊູ. ( ໝາຍພຽງຂໍ້ດຽວ )

[ ] ກ. ຊີວິດຈະບໍຣິສຸດ, ສະອາດ.

[ ] ຂ. ຊີວິດຈະຖືກແຍກອອກຈາກຮ່າງກາຍ.

[ ] ຄ. ຊີວິດຈະໄດ້ຮັບຄວາມລອດພົ້ນ.

6. ຄວາມໝາຍຂອງຄຳວ່າ "ຄວາມລອດພົ້ນ" ໃນພຣະຄັມພີໃໝ່ຄື "ການເປັນອິສລະ" ຫຼື "ການຫລຸດພົ້ນ". ເມື່ອວິນຍານຫຼືຊີວິດຂອງຜູ້ເປັນສາວົກ "ຫຼົງຫາຍໄປ" ກໍຄືຄວາມລົ້ມເຫຼວ. ເມື່ອລາວຕັດສິດຂອງຕົນ, ຮັບແບກໄມ້

ກາງແຂນ, ແລະຕິດຕາມອົງພຣະເຢຊູ ລາວກໍໄດ້ຮັບຄວາມລອດພົ້ນ ຫຼືມີອິສລະພາບ.   ຄວາມໝາຍອີກຢ່າງນຶ່ງ ນັ້ນຄື   "ຍອມໃຫ້ອົງພຣະເຢຊູເປັນທີ່ນຶ່ງໃນຊີວິດ"   ແລ້ວຄວາມປອງດອງສາມັກຄີ ແລະອິສລະພາບ ຈະເກີດຂຶ້ນ ໃນຊີວິດ.

ຈົ່ງອະທິບາຍໂດຍໃຊ້ຖ້ອຍຄຳຂອງທ່ານເອງວ່າ ເມື່ອທ່ານຍອມເສັຽຊີວິດຂອງຕົນ ແລ້ວທ່ານຈະມີຊີວິດໄດ້ຢ່າງດ?

______________________________________________________________________________

______________________________________________________________________________

7. ການຈະເຣີນເຕີບໃຫຍ່ຂຶ້ນໃນຊີວິດຂອງສາວົກ ອາດຈະພິຈາຣະນາເຖິງຄວາມເຂັ້ມແຂງຫຼືອ່ອນແອ ຊຶ່ງທ່ານມີປະສົບການກັບ <u>ຄວາມສາມັກຄີປອງດອງ</u>, ຫຼືຄວາມລອດພົ້ນ ຕໍ່ຄວາມສັມພັນຂອງທ່ານກັບພຣະເຈົ້າແລະກັບຄົນອື່ນ.

ຈົ່ງປະເມີນເບິ່ງຄວາມຈະເຣີນເຕີບໃຫຍ່ຂອງການຕັດສິນໃຈແຕ່ລະຢ່າງທີ່ຜ່ານມາ ໂດຍຂີດວົງມົນອ້ອມໂຕເລກຕໍ່ໄປນີ້: 4= ເປັນປະຈຳບໍ່ຂາດ, 3= ເປັນສ່ວນຫຼາຍ, 2= ເລື້ອຍໆ, 1=ບາງຄັ້ງຄາວ.

ກ. ຂ້າພະເຈົ້າຮັກອົງພຣະເຢຊູ ຫຼາຍກວ່າຮັກຕົນເອງ, ຫຼືຄົນອື່ນ, ຫຼື ສິ່ງອື່ນ 4   3   2   1

ຂ. ອົງພຣະເຢຊູຄຣິດເປັນສູນກາງ( ເປັນນຶ່ງ ) ໃນຊີວິດຂອງຂ້າພະເຈົ້າ 4   3   2   1

ຄ. ຂ້າພະເຈົ້າຍອມເຊື່ອຟັງ ເຮັດຕາມນ້ຳພຣະທັຍພຣະເຈົ້າ 4   3   2   1

ງ. ຊີວິດຂອງຂ້າພະເຈົ້າສາມາດເຫັນໄດ້ຈາກການບົວລະບັດຮັບໃຊ້ 4   3   2   1

ຈ. ຂ້າພະເຈົ້າຮູ້ແນ່ວ່າອົງພຣະເຢຊູຊົງສະຖິດຢູ່ໃນຊີວິດຂອງຂ້າພະເຈົ້າ 4   3   2   1

ສ. ຂ້າພະເຈົ້າໄດ້ປະກອບສ່ວນ ຄືພ້ອມແລ້ວທີ່ຈະນຳວິນຍານແລະສ້າງສາວົກ 4   3   2   1

ຈົ່ງລວມເບິ່ງຄະແນນຂອງທ່ານ ໂດຍການວັດແທກດັ່ງນີ້: ຄະແນນ 18-24= ເປັນສາວົກທີ່ຈະເຣີນຂຶ້ນ, ຄະແນນ 12-18= ກຳລັງຈະເຣີນຂຶ້ນ, ຄະແນນ 6-11= ຕ້ອງການຕັດສິນໃຈອັນແນ່ວແນ່ຂຶ້ນອີກ.

( ຈົບບົດຮຽນທີ 8 )

# **ຄໍາຕອບບົດຮຽນທີ 8**

1. ຕັດສິດຂອງຕົນ, ແບກໄມ້ກາງແຂນ, ຕິດຕາມ

## ການຕັດສິນໃຈປະການທໍາອິດ:

1. ຂ
2. ຖືກທັງສອງ
4. ພຣະຄຣິດເປັນສູນກາງ (ເປັນນື່ງ )ໃນຊີວິດ.

## ການຕັດສິນໃຈປະການທີສອງ:

1. ກ
2. ລາວເປັນສາວົກຂອງພຣະເຢຊູບໍ່ໄດ້.
3. ຮັກສັດຕຣູ, ອະພັຍໃຫ້ຄົນອື່ນ, ຊ່ວຍເຫຼືອຄົນຂາດເຂີນ, ເປັນເພື່ອນຄົນປ່ຽວພອຍ, ເປັນພະຍານ, ອົດທົນຕໍ່ຄວາມຍາກລໍາບາກ.

## ການຕັດສິນໃຈປະການທີສາມ:

1. ກ= 3, ຂ= 2, ຄ= 1, ງ= 4
2. ຄໍາຕອບຂອງທ່ານເອງ
3. ການຮ່ວມສາມັກຄີທັມ
4. ກ= ຕັດສິດຂອງຕົນ, ຂ= ຄວາມຈິງຮັກພັກດີໃຫມ່, ຄ= ແບກໄມ້ກາງແຂນ, ເຕັມໃຈນອບນ້ອມຍອມຟັງ ງ= ຕິດຕາມອົງພຣະເຢຊູ, ຮ່ວມສາມັກຄີທັມ.
5. ຄ
6. ໂດຍການຕັດສິດຂອງຕົນ ຂ້າພະເຈົ້າໄດ້ຮັບອິສລະພາບ ແລະມີຄວາມປອງດອງສາມັກຄີ
7. ຄໍາຕອບຂອງທ່ານເອງ

ຫຼັງຈາກສຶກສາບົດຮຽນນີ້ແລ້ວ ຈົ່ງກັບຮັກສາໄວ້ກັບບົດຮຽນ "ໃຊ້ເວລາກັບພຣະຄຣິດ"

# ຊີວິດຂອງສາວົກ

## ບົດຮຽນທີ 9

## ວິທີໃຊ້ຄໍາຊີ້ນໍາໃນການໂອ້ລົມກັບພຣະເຈົ້າປະຈໍາວັນ

ຮູບວົງມົນຢູ່ທາງກາງໄມ້ກາງແຂນຂອງສາວົກ ເປັນເຄື່ອງຫມາຍຂອງການຕັດສິດຕົນເອງ ແລະໃຫ້ພຣະເຢຊູຊົງເປັນເຈົ້າຊີວິດປະທັບເທິງບັນລັງໃນຊີວິດຂອງທ່ານ. ຖ້າຢາກເຮັດໄດ້ເຊັ່ນນັ້ນ ທ່ານຕ້ອງໃຊ້ເວລາກັບພຣະອົງທຸກວັນ ການກະທໍາເຊັ່ນນີ້ເອີ້ນວ່າ "ການເຂົ້າເຝົ້າພຣະເຈົ້າສ່ວນຕົວ". ການປະຕິບັດດັ່ງກ່າວນີ້ ທ່ານຈະໄດ້ໂອ້ລົມກັບພຣະເຈົ້າ ໄດ້ຮັບຄໍາສັ່ງສອນ, ແລະໄດ້ເພີ້ມເຫື່ອແຮງຈາກພຣະອົງແຕ່ລະວັນ. ຖ້າທ່ານຫາກຈັດເວລາເຂົ້າເຝົ້າພຣະເຈົ້າໄວ້ແຕ່ລະວັນທ່ານຈະໄດ້ຮັບພຣະພອນເພີ້ມເຕີມຈາກພຣະອົງຫຼາຍຢ່າງດ້ວຍກັນ.

"ຂ້າພະເຈົ້າຈະໂອ້ລົມກັບພຣະເຈົ້າ ຜ່ານການເຂົ້າເຝົ້າພຣະອົງທາງສ່ວນຕົວຢ່າງໃດ?" ນີ້ແມ່ນຄໍາຖາມຂອງທ່ານ. ຄໍາຄອບກໍຄື ທ່ານສາມາດໂອ້ລົມກັບພຣະເຈົ້າໄດ້ໂດຍ ເຂົ້າສນິດໃນພຣະຄຣິດ, ດໍາເນີນຊີວິດໃນພຣະຄໍາ, ແລະອະທິຖານດ້ວຍຄວາມເຊື່ອ. ໄມ້ກາງແຂນທາງຕັ້ງໄດ້ຊີ້ໃຫ້ທ່ານເຫັນຢູ່ແລ້ວ.

ຄໍາແນະນໍາດັ່ງຕໍ່ໄປນີ້ ເປັນຄໍາແນະນໍາເພື່ອໃຫ້ທ່ານໄດ້ຮັບຜົນປໂຍດແລະມີຄວາມຫມັ້ນໃຈວ່າ ທ່ານໄດ້ເຂົ້າສນິດໃນພຣະຄຣິດ, ດໍາເນີນຊີວິດໃນພຣະຄໍາ, ແລະອະທິຖານດ້ວຍຄວາມເຊື່ອ.

### ຕຽມຕົວເພື່ອຈະໂອ້ລົມກັບພຣະເຈົ້າ:

1. ສັຣເສີນພຣະເຈົ້າ ທີ່ພຣະອົງຊົງເປັນອົງພຣະຜູ້ເປັນເຈົ້າຂອງທ່ານ.

2. ຕັດສິດຂອງທ່ານ (ເອົາຊະນະຕົນເອງ) ດ້ວຍການສາລະພາບບາບ ແລະມອບຄວາມຕັ້ງໃຈ, ຄວາມຄິດ, ແລະຄວາມຮູ້ສຶກຂອງທ່ານໃຫ້ແກ່ພຣະເຈົ້າ.

3. ແບກໄມ້ກາງແຂນຂອງທ່ານທຸກວັນດ້ວຍການຕຽມພ້ອມທຸກເວລາທີ່ຈະໃຫ້ພຣະເຈົ້າຊົງໃຊ້ທ່ານ.

4. ຈົດທຸກຄໍາຖາມທີ່ທ່ານຢາກຮູ້ຄໍາຕອບ, ທຸກເຣື່ອງທີ່ທ່ານຕ້ອງການໃຫ້ພຣະອົງຊົງນໍາພາ, ຄວາມອ່ອນແອທີ່ທ່ານຕ້ອງການເພີ້ມເຫື່ອແຮງ, ຫຼືເຣື່ອງອື່ນໆ ທີ່ທ່ານຢາກນໍາໄປໂອ້ລົມກັບພຣະເຈົ້າ.

5. ຈົ່ງຕັ້ງຄວາມຫວັງໄວ້ວ່າພຣະເຈົ້າຈະຊົງໂອ້ລົມກັບທ່ານໃນເຣື່ອງທີ່ພຣະອົງຊົງເຫັນວ່າສໍາຄັນເປັນທີ່ນຶ່ງ ແລະເຣື່ອງທີ່ພຣະອົງຊົງຈະເປີດເຜີຍຕາມນໍ້າພຣະທັຍຂອງພຣະອົງ.

### ຟັງພຣະເຈົ້າໂອ້ລົມກັບທ່ານໃນຂະນະທີ່ອ່ານພຣະຄໍາຂອງພຣະອົງ:

1. ອ່ານພຣະຄັມພີເປັນປະຈໍາ ຕາມທີ່ທ່ານໄດ້ວາງແຜນ, ຈັດຕຽມໄວ້. ການອ່ານພຣະຄັມພີທີ່ດີທີ່ສຸດ ຄືອ່ານຕາມລໍາດັບປື້ມ ອ່ານເຫຼັ້ມນຶ່ງສຸດແລ້ວຈຶ່ງອ່ານເຫຼັ້ມຕໍ່ໆ ໄປ. ຫຼືທ່ານອາກຈະໃຊ້ປື້ມ "ອ່ານພຣະຄັມພີປະຈໍາວັນ" ຊ່ອຍທ່ານກໍໄດ້ ເປັນຕົ້ນວ່າປື້ມ " ໂອເພີນ ວິນໂດວສ໌ ", ປື້ມຝຶກອົບຮົມ, ຫຼືບົດຮຽນໂຮງຮຽນວັນອາທິດ.

໒. ຈົ່ງໃຊ້ພຣະຄັມພີຫຼາຍເຫຼັ້ມ ( ຊຶ່ງແປຕ່າງກັນໃນພາສາອັງກິດ ) ເພື່ອຈະຊ່ອຍໃຫ້ທ່ານເຂົ້າໃຈຫຼາຍຂື້ນ

3. ຈົ່ງອ່ານພຣະຄໍາໃຫ້ດຸ່ນດ່ຽງກັນ ຄືອ່ານພຣະຄໍາປະເພດທີ່ຕ່າງກັນເປັນຕົ້ນວ່າ ການເຂົ້າເຝົ້າພຣະເຈົ້າ ( ພຣະທັມເພງສັຣເສີນ), ດ້ານສະຕິປັນຍາ ( ພຣະທັມສຸພາສິດ ), ດ້ານປະຫວັດສາດ ແລະພູມີສາດ ( ຄໍາທໍານວາຍ, ກິຈການ, ພຣະທັມຂ່າວປະເສີດ ຫຼືພຣະກິດຕິຄຸນ ), ແລະດ້ານຄໍາສອນ ( ຈົດໝາຍອາຈານໂປໂລ ).

4. ຟັງເບິ່ງຖ້ອຍຄໍາທີ່ພຣະເຈົ້າຊົງກ່າວໄວ້ ນຶ່ງໃນຈໍານວນສີ່ຢ່າງ ທີ່ອາຈານໂປໂລກ່າວໄວ້ໃນພຣະຄັມພີຊຶ່ງມີຜົນປໂຍດ; ໃນການສອນ, ການຕັກເຕືອນວ່າກ່າວ, ການປັບປຸງແກ້ໄຂໃຫ້ຖືກຕ້ອງ, ແລະການອົບຮົມໃນທາງຊອບທັມ ( ໒ ຕິໂມທຽວ 3:16-17 )
   - ການສອນ= ການສັ່ງສອນເຣື່ອງຄວາມເຊື່ອ
   - ການຕັກເຕືອນວ່າກ່າວ= ຕັກເຕືອນໃນການເຮັດຜິດ
   - ປັບປຸງແກ້ໄຂໃຫ້ຖືກຕ້ອງ= ເພື່ອປ່ຽນແປງທິດທາງໃນການການດໍາເນີນຊີວິດໃຫມ່
   - ການອົງຮົມໃນທາງຊອບທັມ= ການຝຶກອົບຮົມໃຫ້ດໍາເນີນຊີວິດໃນທາງທີ່ດີ

ໃນຂະນະທີ່ທ່ານອ່ານພຣະຄໍາຂໍ້ນີ້ ໃຫ້ທ່ານລົ້ມຄືນຫຼັກຄໍາສອນ 4 ຢ່າງນີ້ແຕ່ລະຢ່າງຕໍ່ກັນໄປ ຈາກຄໍາສອນທໍາອິດ ໄປຫາຄໍາສອນໃຫມ່ຕໍ່ໄປຄື ( ໃຫມ່ສໍາລັບທ່ານ) ການຕັກເຕືອນເມື່ອທ່ານເຮັດຜິດ, ທິດທາງໃຫມ່ເພື່ອເລີ້ມຕົ້ນຊີວິດຂອງທ່ານໃຫມ່, ແລະການອົບຮົມໃຫ້ດໍາເນີນຊີວິດໃນທາງຊອບທັມ.

5. ຫມາຍຂໍ້ພຣະຄໍາ, ເປັນຖ້ອຍຄໍາ, ເປັນຂໍ້ຄວາມ ທີ່ພຣະເຈົ້າຊົງກ່າວກັບທ່ານ. ຖ້າທ່ານໃຊ້ປາກາທີ່ເປັນນໍ້າມຶກສີ ນໍ້າມຶກອາດຈະຊຶມຊອດເຈັ້ຽໄປອີກດ້ານນຶ່ງ ຖ້າພຣະຄັມພີເປັນເຈັ້ຽຊະນິດບາງ. ທ່ານອາດຈະຫມາຍຂໍ້ພຣະຄັມພີດັ່ງຕໍ່ໄປນີ້ ຊຶ່ງອາດຈະມີຄວາມຫມາຍສໍາລັບທ່ານເອງ.

   _____ ກ. ຂີດເສັ້ນກ້ອງ ຫມາຍເຖິງຖ້ອຍຄໍາທີ່ເນັ້ນຫນັກ

   ~~~ ຂ. ຂີດເສັ້ນກ້ອງເປັນຮູບຟອງນໍ້າ ຫມາຍເຖິງຖ້ອຍຄໍາທີ່ທ່ານຕ້ອງເອົາໃຈໃສ່ເປັນພິເສດ.

   ( ) ຄ. ວົງເລັບອ້ອມ ຫມາຍເຖິງຖ້ອຍຄໍາທີ່ມີຄວາມຫມາຍພິເສດ

   " " ງ. ເຄື່ອງຫມາຍຖອດຄໍາເວົ້າ ຫມາຍເຖິງຖ້ອຍຄໍາ ຄໍາເທສນາ ຫຼືການເຂົ້າເຝົ້າພຣະເຈົ້າ

   | | ຈ. ສອງເສັ້ນທາງຂ້າງ ຫມາຍເຖິງ ຂໍ້ພຣະຄັມພີທີ່ທ່ານໄດ້ທ່ອງຈໍາ

6. ສລູບໃນສິ່ງທີ່ທ່ານເຊື່ອວ່າພຣະເຈົ້າໄດ້ໂອ້ລົມກັບທ່ານໃນວັນນີ້ ຜ່ານທາງຂໍ້ພຣະຄັມພີ.
   ກ. ເບິ່ງຄືນອີກເທື່ອນຶ່ງໃນຖ້ອຍຄໍາທີ່ທ່ານໄດ້ຫມາຍໄວ້
   ຂ. ເບິ່ງເຄື່ອງຫມາຍ ໃນແຕ່ລະຖ້ອຍຄໍາ ຫຼືຂໍ້ຄວາມ ທີ່ເຫັນວ່າພຣະເຈົ້າຊົງກ່າວກັບທ່ານ
   ຄ. ຂຽນຖ້ອຍຄໍາທີ່ພຣະເຈົ້າຊົງກ່າວກັບທ່ານ ລົງໃສ່ເຈັ້ຽ "ການໂອ້ລົມກັບພຣະເຈົ້າປະຈໍາວັນ". ທີ່ທ່າຈັດຕຽມໄວ້ແລ້ວ. ສ່ວນຫຼາຍຖ້ອຍຄໍາທີ່ພຣະເຈົ້າໄດ້ກ່າວກັບທ່ານຈະແຈ່ມແຈ້ງຂື້ນ ຖ້າທ່ານຫາກຈົດລົງໃສ່ເຈັ້ຽ.

## ອະທິຖານເຖິງເຣື່ອງທີ່ພຣະເຈົ້າໄດ້ກ່າວກັບທ່ານ:

1. ຖ້າຫາກເປັນການສັ່ງສອນ, ໃຫ້ທ່ານລົ້ມການສັ່ງສອນຕໍ່ພຣະເຈົ້າໃນຂະນະທີ່ທ່ານອະທິຖານ ແລະທູນຖາມພຣະອົງວ່າມີຫຽັງອີກແດ່ທີ່ພຣະອົງໄດ້ກ່າວກັບທ່ານ, ຂອບພຣະຄຸນພຣະອົງ ແລະ ສັຣເສີນພຣະອົງ.
   ~~~

2. ຖ້າເປັນການຕັກເຕືອນໃນການເຮັດຜິດ, ໃຫ້ທ່ານສາລະພາບບາບແລະຄວາມຜິດ, ແລ້ວກັບໃຈໃໝ່.

3. ຖ້າເປັນການປັບປຸງແກ້ໄຂໃຫ້ຖືກຕ້ອງ, ໃນທ່ານທູນຕໍ່ພຣະເຈົ້າວ່າທ່ານຍອມຮັບການຊົງນຳຈາກພຣະອົງ ທູນຂໍໃຫ້ພຣະອົງຊ່ອຍປ່ຽນແປງກິຣິຍາທ່າທີ ແລະນິສັຍຂອງທ່ານໃໝ່.

4. ຖ້າເປັນການອົບຮົມໃນທາງຊອບທັມ, ຈົ່ງສັນຍາຕໍ່ພຣະເຈົ້າວ່າທ່ານຈະກະທຳຕາມຄຳສັ່ງສອນໂດຍການຊ່ອຍເຫຼືອຈາກພຣະອົງ.

5. ຂຽນຖ້ອຍຄຳຂອງທ່ານໃສ່ເຈັ້ຽ "ການໂອ້ລົມກັບພຣະເຈົ້າປະຈຳວັນ" ວ່າທ່ານທູນຕໍ່ພຣະເຈົ້າຢ່າງໃດແດ່.

ຂໍໃຫ້ທ່ານປະຕິບັດຕາມຄຳແນະນຳໃນບົດຮຽນນີ້ປະມານ 2-3 ອາທິດ ແລະຈະກາຍເປັນນິສັຍໃໝ່ຂອງທ່ານ. ທັງທ່ານແລະພຣະເຈົ້າຈະໂອ້ລົມກັນ "ຢູ່ໃນຄົ້ນດຽວກັນ". ຄຣິສຕຽນຫຼາຍຄົນໄດ້ເວົ້າຕໍ່ພຣະເຈົ້າ ແຕ່ບໍ່ເຄີຍຟັງຄຳຕອບຈາກພຣະເຈົ້າ. ຫຼືບາງຄັ້ງທ່ານອາດຈະເວົ້າກັບພຣະເຈົ້າໃນຄົ້ນນຶ່ງ ແລະພຣະເຈົ້າຊົງກ່າວກັບທ່ານໃນອີກຄົ້ນນຶ່ງ. ການປະຕິບັດຕາມຄຳແນະນຳນີ້ຈະຊ່ອຍໃຫ້ທ່ານໂອ້ລົມກັບພຣະເຈົ້າໃນເຣື່ອງດຽວກັນ. ການປະຕິບັດດັ່ງກ່າວນີ້ ຈະເປັນພື້ນຖານສຳລັບທ່ານໃນການແບ່ງປັນກັບຄົນອື່ນວ່າພຣະເຈົ້າຊົງກ່າວຕໍ່ທ່ານຢ່າງໃດແດ່. ຫຼັງຈາກນັ້ນໃຫ້ທ່ານເບິ່ງເຈັ້ຽ "ການໂອ້ລົມກັບພຣະເຈົ້າປະຈຳວັນ" ຄືນອີກ ທ່ານຈະເຫັນແບບຢ່າງທີ່ພຣະເຈົ້າໄດ້ໂອ້ລົມກັບທ່ານກັບສິ່ງຕ່າງໆ ທີ່ທ່ານໄດ້ທູນຕໍ່ພຣະເຈົ້າແຕ່ກ່ອນ.

------------ ຈົບບົດຮຽນທີ 9 ------------

# ຊີວິດຂອງສາວົກ

## ບົດຮຽນທີ 10

## ຂັບຕາມນ້ຳພຣະທັຍ

ພຣະເຢຊູຊົງເລືອກທ່ານແລະເອີ້ນທ່ານໃຫ້ຂັບຕາມ (ປະຕິບັດຕາມ) ນ້ຳພຣະທັຍຂອງພຣະອົງ. ເພາະວ່າໄດ້ເລືອກແລ້ວໃນການຕັດສິດຕົນເອງ, ແບກໄມ້ກາງແຂນຂອງຕົນ, ແລະຕິດຕາມພຣະອົງ ດັ່ງນັ້ນເວລານີ້ພຣະອົງຈຶ່ງເປັນພຣະຜູ້ໂຜດໃຫ້ພົ້ນຂອງທ່ານແລະເປັນນາຍຂອງທ່ານ. ພຣະອົງເປັນນາຍ ຄວາມຕັ້ງໃຈ ຂອງທ່ານດ້ວຍແມ່ນບໍ່? ໃນການສຶກສາບົດຮຽນນີ້ ທ່ານຈະໄດ້ພົບຄຳແນະນຳເພື່ອຈະຂັບຕາມນ້ຳພຣະທັຍຂອງພຣະເຈົ້າ. ເມື່ອທ່ານສຶກສາບົດຮຽນນີ້ຈົບລົງ ທ່ານຈະມີຄວາມສາມາດ.....

- ແຍກຄວາມແຕກຕ່າງໃຫ້ເຫັນໄດ້ ລະຫວ່າງນ້ຳພຣະທັຍຂອງພຣະເຈົ້າ ແລະຄວາມຕັ້ງໃຈຂອງມະນຸດ,
- ເລົ່າເຖິງພຣະປະສົງຂອງພຣະເຈົ້າໃນການຂັບຕາມນ້ຳພຣະທັຍຂອງພຣະອົງ.
- ອະທິບາຍຂັ້ນຕອນ ແລະການຊົງຈັດຕຽມຂອງພຣະເຈົ້າ ວ່ານ້ຳພຣະທັຍຂອງພຣະເຈົ້າຈະຊົງສຳເຣັດຢ່າງໃດ
- ນຳເອົາຄຳສັ່ງສອນກ່ຽວກັບນ້ຳພຣະທັຍພຣະເຈົ້າໄປໃຊ້ໃນຊີວິດຂອງທ່ານ.

ຈົ່ງເຮັດບົດຝຶກຫັດດັ່ງຕໍ່ໄປນີ້ໃຫ້ສຳເຣັດ. ເມື່ອທ່ານຕອບຄຳຖາມແຕ່ລະຄຳແລ້ວໆ ໃຫ້ທ່ານກວດໃສ່ກັບຄຳຕອບທີ່ຢູ່ຕອນທ້າຍຂອງບົດຮຽນນີ້.

1. ພຣະຄັມພີສອນວ່າ ພຣະເຈົ້າຊົງປະທານຄວາມສາມາດໃຫ້ທ່ານວາງເປົ້າໝາຍ ແລະໃຫ້ທ່ານສາມາດເລືອກໄດ້. ຄວາມສາມາດດັ່ງກ່າວນີ້ເອີ້ນວ່າ "ຄວາມຕັ້ງໃຈ" ຂອງທ່ານ. ພຣະຄັມພີອ້າງອີງເຖິງຄວາມຕັ້ງໃຈວ່າ ຕ້ອງການ, ຕັ້ງໃຈໄວ້, ມີຈຸດປະສົງ ຫຼືມີເປົ້າໝາຍທີ່ຈະເຮັດສິ່ງໃດສິ່ງນຶ່ງ.

ອ່ານຂໍ້ພຣະຄັມພີດັ່ງຕໍ່ໄປນີ້ ຊຶ່ງອ້າງເຖິງ "ຄວາມຕັ້ງໃຈຂອງຄົນໃດຄົນນຶ່ງ" ພຣະບັນຍັດຄັ້ງທີສອງ 30:19-20; ໂຣມ 7:18; 1 ຕີໂມທຽວ 2:3-4.

ອີງຕາມຂໍ້ພຣະຄັມພີຂ້າງເທິງນີ້ ໃຫ້ທ່ານຂີດວົງມົນອ້ອມຄຳວ່າ "ແມ່ນ" ຫຼື "ບໍ່ແມ່ນ" ຕາມຄຳຖາມຂ້າງລຸ່ມນີ້

ກ. ຄວາມຕັ້ງໃຈຂອງຄົນ ສາມາດໃຊ້ໄດ້ທັງການດີ ແລະການຊົ່ວ ແມ່ນ ບໍ່ແມ່ນ
ຂ. ພຣະເຈົ້າຊົງຄວບຄຸມຄວາມຕັ້ງໃຈຂອງຄົນ ຢູ່ສເມີ ແມ່ນ ບໍ່ແມ່ນ
ຄ. ຄົນໃດຄົນນຶ່ງຈະສາມາດເຮັດໃນສິ່ງທີ່ລາວຕັ້ງໃຈວ່າຈະເຮັດໄດ້ສເມີ ແມ່ນ ບໍ່ແມ່ນ

2. ທຸກໆ ຄົນຕົກຢູ່ໃນວົງຣັສມີແຫ່ງນ້ຳພຣະທັຍຂອງພຣະເຈົ້າ. ອ່ານພຣະທັມ 2 ເປໂຕ 3:9. ເມື່ອຄົນໃດຄົນນຶ່ງເປັນຄຣິສຕຽນ ພຣະວິນຍານບໍຣິສຸດໄດ້ເລີ້ມເປີດເຜີຍ ນ້ຳພຣະທັຍຂອງພຣະເຈົ້າ ໃນຊີວິດຂອງຜູ້ນັ້ນ.

ຈົ່ງອ່ານຂໍ້ພຣະຄັມພີດັ່ງຕໍ່ໄປນີ້ ທີ່ກ່າວເຖິງນ້ຳພຣະທັຍຂອງພຣະເຈົ້າ: ມັດທາຍ 12:50; ໂຢຮັນ 4:3-4; ໂຣມ 12:2 ໂກໂລຊາຍ 1:9. ຈົ່ງຕອບຄຳຖາມວ່າ "ຜິດ" ຫຼື "ຖືກ" ໃສ່ຂ້າງໜ້າຄຳຖາມຂ້າງລຸ່ມນີ້.

___ ກ. ພຣະເຢຊູຊົງຮຽກຮ້ອງຄວາມສັມພັນອັນພິເສດກັບບັນດາຜູ້ທີ່ຂັບຕາມນ້ຳພຣະທັຍພຣະເຈົ້າ.
___ ຂ. ພຣະເຢຊູຊົງກ່າວວ່າ ຄວາມຕັ້ງໃຈຂອງພຣະອົງຄືເຮັດຕາມນ້ຳພຣະທັຍພຣະເຈົ້າ
___ ຄ. ເຮົາບໍ່ສາມາດຈະສແວງຫານ້ຳພຣະທັຍຂອງພຣະເຈົ້າໄດ້
___ ງ. ເຮົາສາມາດສແວງຫານ້ຳພຣະທັຍພຣະເຈົ້າໄດ້.

3. ນ້ຳພຣະທັຍຂອງພຣະເຈົ້າ ແລະຄວາມຕັ້ງໃຈຂອງມະນຸດ ມີຄວາມແຕກຕ່າງກັນທັງຄວາມສາມາດ ແລະເປົ້າໝາຍ. ຄວາມສາມາດຂອງເຮົາທີ່ຈະເຮັດຕາມຄວາມຕັ້ງໃຈຂອງເຮົານັ້ນມີຂອບເຂດຈຳກັດ. ຄວາມຕັ້ງໃຈຂອງມະນຸດມີການປ່ຽນແປງ ແລະລົ້ມເຫຼວໄດ້. ຄວາມສາມາດຂອງພຣະເຈົ້າໃນການຊົງກະທຳຕາມນ້ຳພຣະທັຍຂອງພຣະອົງນັ້ນບໍ່ມີຂອບເຂດຈຳກັດ. ພຣະປະສົງຂອງບໍ່ປ່ຽນແປງແລະບໍຣິສຸດ.

ຈົ່ງຂຽນໂຕ "ພ" ຖ້າແມ່ນນ້ຳພຣະທັຍຂອງພຣະເຈົ້າ, ຂຽນໂຕ "ທ" ຖ້າເປັນຄວາມຕັ້ງໃຈຂອງທ່ານ ແລະຂຽນໂຕ "ສ" ຖ້າແມ່ນທັງສອງຢ່າງ ໃສ່ຂ້າງໜ້າຂໍ້ຄວາມຂ້າງລຸ່ມນີ້.

___ ກ. ບໍ່ປ່ຽນແປງແລະບໍຣິສຸດ
___ ຂ. ມີຂອບເຂດຈຳກັດໃນການກະທຳສິ່ງຕ່າງໆ
___ ຄ. ບໍ່ມີຂອບເຂດຈຳກັດ ກະທຳໄດ້ທຸກຢ່າງ
___ ງ. ມີການປ່ຽນແປງ ແລະລົ້ມເຫຼວໄດ້.
___ ຈ. ມີຄວາມສາມາດວາງເປົ້າໝາຍ ແລະສາມາດເລືອກ

4. ພຣະເຢຊູຢາກສັ່ງສອນທ່ານວ່າພຣະເຈົ້າຊົງເປີດເຜີຍນ້ຳພຣະທັຍຂອງພຣະອົງຢ່າງໃດ ແລະທ່ານຈະຂັບຕາມນ້ຳພຣະທັຍຂອງພຣະອົງຢ່າງໃດ. ການຂັບຕາມນ້ຳພຣະທັຍຂອງພຣະເຈົ້າຈະເລີ່ມຕົ້ນດ້ວຍນິມິດຕາມພຣະປະສົງຂອງພຣະເຈົ້າໃນຊີວິດຂອງທ່ານ.

ອ່ານພຣະທັມ ເອເຟໂຊ 1:5-6, 12, 14 ແລະກວດເບິ່ງພຣະປະສົງອັນສູງສຸດຂອງພຣະເຈົ້າຕໍ່ຊີວິດຂອງທ່ານໃນອົງພຣະເຢຊູຄຣິດ ຕາມທີ່ໄດ້ເນັ້ນໜັກໃນຂໍ້ຄວາມດັ່ງລຸ່ມນີ້.

( ) ກ. ເພື່ອຖວາຍພຣະສງ່າຣາສີແດ່ພຣະເຈົ້າ
( ) ຂ. ເພື່ອນຳຜູ້ຫຼົງຫາຍກັບມາຫາພຣະເຈົ້າ
( ) ຄ. ເພື່ອເປັນແບບຢ່າງທີ່ດີແກ່ຄົນອື່ນ

5. ເປົ້າໝາຍສ່ວນໃຫຍ່ໃນການດຳເນີນຊີວິດຂອງເຮົາແມ່ນເພື່ອຖວາຍພຣະສງ່າຣາສີແດ່ພຣະເຈົ້າ ດັ່ງນັ້ນພຣະນາມຂອງພຣະອົງຈະໄດ້ຮັບການສັຣເສີນ. ເປົ້າໝາຍດັ່ງກ່າວນີ້ເຮົາຈະເຫັນພາບພົດໃນຊີວິດຂອງອົງພຣະເຢຊູ. ຂໍ້ພຣະຄັມພີຕໍ່ໄປນີ້ຈະກ່າວເຖິງຄວາມຮູ້ສຶກຂອງພຣະເຢຊູໃນການກະທຳຕາມນ້ຳພຣະທັຍຂອງພຣະເຈົ້າ. ຈົ່ງເລືອກເອົາຖ້ອຍຄຳທາງຂວາໄປໃສ່ກັບຂໍ້ພຣະຄັມພີທາງຊ້າຍໃຫ້ຖືກຕ້ອງ.

| | | |
|---|---|---|
| ___ ກ. ໂຢຮັນ 5:30 | ( 1 ) | ພຣະເຢຊູຊົງຖວາຍກຽດແດ່ພຣະເຈົ້າໃນເວລາພຣະອົງຢູ່ໃນໂລກນີ້ |
| ___ ຂ. ໂຢຮັນ 6:38 | ( 2 ) | ພຣະເຢຊູບໍ່ໄດ້ສແວງຫານ້ຳພຣະທັຍຂອງພຣະອົງເອງ |
| ___ ຄ. ໂຢຮັນ 17:4 | ( 3 ) | ພຣະເຢຊູຊົງອະທິຖານໃຫ້ເປັນໄປຕາມນ້ຳພຣະທັຍຂອງພຣະເຈົ້າ ບໍ່ແມ່ນນ້ຳພຣະທັຍຂອງພຣະອົງເອງ. |
| ___ ງ. ລູກາ 22:42 | ( 4 ) | ພຣະເຢຊູຊົງສະເດັດມາຈາກສວັນເພື່ອເຮັດຕາມນ້ຳພຣະທັຍຂອງພຣະເຈົ້າ. |

6. ຈົ່ງປັບປຸງພັດທະນາທຸກສ່ວນໃນຊີວິດຄຣິສຕຽນຂອງທ່ານ ແລະບໍວລະບັດຮັບໃຊ້ຕາມພຣະປະສົງຂອງພຣະເຈົ້າທີ່ທ່ານຍອມຮັບ. ຈົ່ງເລົ່າວ່າພຣະປະສົງຂອງພຣະເຈົ້າໃນຊີວິດທ່ານຄືແນວໃດ?

_______________________________________________________________________________

7. ການຂັບຕາມນ້ຳພຣະທັຍພຣະເຈົ້າ ແມ່ນຂື້ນຢູ່ກັບການຖວາຍຕົວທັງຫມົດຂອງທ່ານໃຫ້ແກ່ພຣະເຈົ້າ. ເຖິງແມ່ນວ່າທ່ານໄດ້ຖວາຍຕົວຂອງທ່ານໃຫ້ພຣະເຈົ້າແລ້ວ, ອີກບໍ່ດົນທ່ານຈະພົບວ່າມັນບໍ່ແມ່ນສິ່ງງ່າຍໃນການຂັບຕາມນ້ຳພຣະທັຍຂອງພຣະເຈົ້າ. ມີຄວາມຈິງຫຼາຍຢ່າງທີ່ມີອິດທິພົນຄວບຄຸມທ່ານ. ຈົ່ງອ່ານພຣະທັມ 1 ໂຢຮັນ 2:15-17 ຈົ່ງຫມາຍຂ້າງຫນ້າຂໍ້ຄວາມຂ້າລຸ່ມນີ້ ທີ່ທ່ານເຫັນວ່າຄວາມຈິງຂໍ້ໃດທີ່ຂັດຂວາງທ່ານບໍ່ໃຫ້ຂັບຕາມນ້ຳພຣະທັຍພຣະເຈົ້າ.

( ) ກ. ຄວາມບາບອັນເປັນນິສັຍຂອງທ່ານ

( ) ຂ. ສະພາບແວດລ້ອມຂອງທ່ານ

( ) ຄ. ຍາດຕິພີ່ນ້ອງຂອງທ່ານ ( ເຊື້ອສາຍວົງຕະກູນ )

8. ການຖວາຍຕົວຂອງທ່ານທັງຫມົດໃຫ້ແກ່ພຣະເຈົ້າ ບໍ່ຫມາຍເຖິງວ່າທ່ານຜ່ານພົ້ນໄປແລ້ວໂດຍທີ່ບໍ່ຕ້ອງຕໍ່ສູ້ກັບສິ່ງໃດອີກ. ແມ່ນແຕ່ອົງພຣະເຢຊູກໍຍັງໄດ້ຕໍ່ສູ້ເວລາພຣະອົງຕົກຢູ່ໃນການທົດລອງ ( ພຣະທັມ ເຮັບເຣີ 4:15; ມັດທາຍ 26:38-44 ). ພຣະເຈົ້າຊົງຈັດຕຽມທາງຂອງພຣະອົງທີ່ຈະໃຫ້ນ້ຳພຣະທັຍຂອງພຣະອົງສຳເຣັດຜ່ານທາງພວກເຮົາ ຖ້າຫາກພວກເຮົາຫາກຖວາຍຕົວທັງຫມົດໃຫ້ແກ່ພຣະອົງ. ອ່ານຂໍ້ພຣະຄັມພີດັ່ງຕໍ່ໄປນີ້ ແລ້ວຂຽນເປັນຄຳເວົ້າຂອງທ່ານເອງວ່າພຣະເຈົ້າຊົງຈັດຕຽມແຕ່ລະພາກສ່ວນໃນຊີວິດຂອງທ່ານເພື່ອຖວາຍແກ່ພຣະອົງຢ່າງໃດ.

ກ. ຄວາມຕັ້ງໃຈ ( ຟີລິບປອຍ 2:13 )

_______________________________________________________________________________

ຂ. ຄວາມຄິດ ( ໂຣມ 12:2 )

_______________________________________________________________________________

ຄ. ຮ່າງກາຍ ( ໂຣມ 12:1 )

_______________________________________________________________________________

ງ. ຄວາມຮູ້ສຶກ ( ຄາລາເຕັຽ 5:18-25 )

_______________________________________________________________________________

ຈ. ຊີວິດ ( ຄາລາເຕັຽ 2:20 )

_______________________________________________________________________________

9. ຈົ່ງຂຽນຂໍ້ຄວາມໃສ່ຊ່ອງຫວ່າງໃສ່ແຕ່ລະຂໍ້ຂ້າງລຸ່ມນີ້ ເພື່ອເປັນການສລູບໃນສິ່ງທີ່ພວກເຮົາໄດ້ສຶກສາມາກ່ຽວກັບການຂັບຕາມນ້ຳພຣະທັຍຂອງພຣະເຈົ້າ.

ກ. ການຂັບຕາມນ້ຳພຣະທັຍຂອງພຣະເຈົ້າເລີ້ມຕົ້ນດ້ວຍການມີນິມິດໃນ <u>ພຣະປະສົງ</u> ຂອງພຣະເຈົ້າ ໃນຊີວິດຂອງຂ້າພະເຈົ້າ.

ຂ. ການຂັບຕາມນ້ຳພຣະທັຍຂອງພຣະເຈົ້າຂື້ນຢູ່ກັບການ <u>ຖວາຍຕົວທັງຫມົດ</u> ໃຫ້ແກ່ພຣະເຈົ້າ.

ຄ. ການຂັດຕາມນ້ຳພຣະທັຍຂອງພຣະເຈົ້າຕ້ອງການພາກປະຕິບັດທີ່ຂື້ນຢູ່ກັບ <u>ການຈັດແຈງຫ້າງຫາ</u> ຂອງພຣະເຈົ້າເພື່ອເຮັດຕາມນ້ຳພຣະທັຍຂອງພຣະອົງ.

10. ນ້ຳພຣະທັຍຂອງພຣະເຈົ້າຊົງມອບໃຫ້ຂ້າພະເຈົ້າຢ່າງແນ່ນອນແລ້ວວ່າສິ່ງໃດທີ່ຂ້າພະເຈົ້າຕ້ອງກະທຳໃຫ້ສຳເຣັດຕາມນ້ຳພຣະທັຍຂອງພຣະອົງ. ອ່ານຂໍ້ພຣະຄັມພີຕໍ່ໄປນີ້ ແລ້ວຈົດສິ່ງທີ່ພຣະເຈົ້າຊົງສັນຍາວ່າຈະກະທຳລົງໃສ່ຊ່ອງຫວ່າງແຕ່ລະຂໍ້ຂ້າງລຸ່ມນີ້

ກ. ຟີລິບປອຍ 4:19

______________________________________________________________________

ຂ. ໂຣມ 8:28

______________________________________________________________________

11. ມັນເປັນໄປບໍ່ໄດ້ທີ່ຄຣິສຕຽນຈະຂັບຕາມນ້ຳພຣະທັຍພຣະເຈົ້າດ້ວຍຕົວລາວເອງ. ພຣະເຈົ້າເທົ່ານັ້ນທີ່ສາມາດຈະກະທຳໃນສິ່ງທີ່ພຣະອົງມີພຣະປະສົງແລະມີເປົ້າຫມາຍວ່າຈະຊົງກະທຳ. ການຂັບຕາມນ້ຳພຣະທັຍພຣະເຈົ້າຕ້ອງກະທຳເປັນຂັ້ນຕອນ ຄືພຣະເຈົ້າໄດ້ຊົງໃຊ້ສິ່ງທີ່ພຣະອົງຊົງປະທານໃຫ້ແກ່ເຮົານັ້ນເພື່ອເຮັດວຽກງານຂອງພຣະອົງໃຫ້ປະສົບຜົນສຳເຣັດ. ຂັ້ນຕອນດັ່ງກ່າວນີ້ໄດ້ກ່າວໄວ້ໃນພຣະທັມຟີລິບປອຍ 1:6; 2:13; ແລະ 1 ເທຊະໂລນິເກ 5:24. ຈົ່ງອະທິບາຍຂັ້ນຕອນດັ່ງກ່າວນັ້ນເປັນຄຳເວົ້າຂອງທ່ານເອງໃສ່ຊ່ອງຫວ່າງຕໍ່ໄປນີ້

______________________________________________________________________

12. ຂັ້ນຕອນການຂັບຕາມນ້ຳພຣະທັຍຂອງພຣະເຈົ້າສາມາດສຳເຣັດໄດ້ໂດຍ..... ຈົ່ງຕື່ມຖ້ອຍຄຳໃສ່ຊ່ອງຫວ່າງແຕ່ລະຂໍ້ຂ້າງລຸ່ມນີ້:

ກ. ເຫັນນິມິດ____________________ຂອງພຣະເຈົ້າສຳລັບຊີວິດຂອງທ່ານ.

ຂ. ການ______________________________ ຂອງທ່ານໃຫ້ແກ່ພຣະເຈົ້າ.

ຄ. ປະຕິບັດຕາມໂດຍໃຊ້ __________________________ ເພື່ອຂັບຕາມນ້ຳພຣະທັຍຂອງພຣະອົງ.

ຈົ່ງພິຈາຣະນາເບິ່ງຄຸນນະສົມບັດສາມປະການຕາມຂໍ້ ກ, ຂ, ແລະ ຄ ຂ້າງເທິງນັ້ນ ແລະອ່ານຂໍ້ພຣະຄັມພີທີ່ກ່າວເຖິງແຕ່ລະບຸກຄົນຕໍ່ໄປນີ້ທີ່ຂັບຕາມນ້ຳພຣະທັຍພຣະເຈົ້າ. ຈົ່ງຂີດວົງມົນອ້ອມໂຕ ກ, ຂ, ຫຼື ຄ ຕາມທີ່ທ່ານໄດ້ເຫັນຄຸນນະສົມບັດຂອງແຕ່ລະຄົນ.

1) ທ່ານໂມເຊ ( ພຣະທັມເຮັບເຣີ 11:24-27 ) ກ, ຂ, ຄ

2) ພຣະເຢຊູ ( ພຣະທັມໂຢຮັນ 6:38; ເຮັບເຣີ 10:5-7; 12:1 ) ກ, ຂ, ຄ

ຄ) ອາຈານໂປໂລ ( ຟີລິບປອຍ 3:7-14; 4:13 ) ກ, ຂ, ຄ

13. ຜົນຂອງນ້ຳພຣະທັຍພຣະເຈົ້າທີ່ເຫັນໃນຊີວິດຂອງພວກເຮົາ ໄດ້ກ່າວໄວ້ໃນພຣະທັມໂຣມ 8:29 ພວກເຮົາຕ້ອງກະທຳຕົນໃຫ້ເຫມືອນກັບ ... __________________________________________

14. ອ່ານພຣະທັມ ເຮັບເຣີ 13:21 ນຳເອົາຂໍ້ພຣະຄັມພີທີ່ທ່ານໄດ້ສຶກສາໄປໃຊ້ໃນຊີວິດຂອງທ່ານ ດ້ວຍການຂຽນຄຳຕອບຂອງທ່ານໃສ່ຊ່ອງຫວ່າງແຕ່ລະຂໍ້ຂ້າງລຸ່ມນີ້:

ກ. ນິມິດຂອງຂ້າພຣະເຈົ້າກ່ຽວກັບ ພຣະປະສົງຂອງພຣະເຈົ້າໃນຊີວິດຂອງຂ້າເຈົ້າໄດ້ແກ່...

______________________________________________________________________

ຂ. ການຖວາຍຕົວທັງໝົດຂອງຂ້າພະເຈົ້າໃຫ້ແກ່ພຣະເຈົ້າໝາຍເຖິງ...

______________________________________________________________________________

ຄ. ພາກປະຕິບັດ ທີ່ຂ້າພະເຈົ້າຕ້ອງກະທຳນັ້ນຂຶ້ນຢູ່ກັບສິ່ງທີ່ພຣະເຈົ້າຊົງຈັດຫາໃຫ້ ເພື່ອຂັບຕາມນ້ຳພຣະທັຍຂອງພຣະອົງ ໄດ້ແກ່...

______________________________________________________________________________

## ຄຳຕອບ

1. ກ.= ແມ່ນ,   ຂ= ບໍ່ແມ່ນ,   ຄ= ບໍ່ແມ່ນ

2. ກ= ຖືກ,   ຂ= ຖືກ,   ຄ= ຜິດ,   ງ= ຖືກ

3. ກ= ພ,   ຂ=ທ,   ຄ= ພ,   ງ= ທ,   ຈ= ສ

4. ກ.

5. ກ= 2,   ຂ= 4,   ຄ= 1,   ງ= 3

6. ເພື່ອຖວາຍພຣະກຽດແດ່ພຣະເຈົ້າ ເພື່ອພຣະອົງຈະໄດ້ຮັບການສັຣເສີນ

7. ຄຳຕອບຂອງທ່ານເອງ; ທ່ານອາດຈະໝາຍຫຼາຍກວ່ານີ້ງຢ່າງກໍໄດ້.

8. ກ= ເພາະວ່າແມ່ນພຣະເຈົ້າເປັນຜູ້ຊົງກະທຳການຢູ່ພາຍໃນເຈົ້າທັງຫຼາຍ ໃຫ້ມີໃຈປາຖນາແລະໃຫ້ເຮັດໄປເພື່ອຊອບພຣະທັຍຂອງພຣະອົງ.
   ຂ= ພຣະເຈົ້າຊົງປຸ່ນຈິດໃຈເຮົາໃໝ່ ດັ່ງນັ້ນພວກເຮົາຈຶ່ງຮູ້ວ່ານ້ຳພຣະທັຍຂອງພຣະເຈົ້ານັ້ນດີ.
   ຄ= ພຣະເຈົ້າຊົງສັ່ງໃຫ້ພວກເຮົາຖວາຍຕົວແກ່ພຣະອົງ ເປັນເຄື່ອງບູຊາອັນມີຊີວິດ ຊຶ່ງເປັນການນະມັສການທີ່ເໝາະສົມ. ພຣະເຢຊູຊົງໜູນໃຈໃຫ້ພວກເຮົາອະທິຖານເພາະວ່າຮ່າງກາຍເຮົາມີຄວາມອ່ອນແອ.
   ງ. ພຣະວິນຍານບໍຣິສຸດຈະຊົງໃຫ້ເກີດໝາກຜົນທາງພຣະວິນຍານໃນຊີວິດເຮົາ ເພື່ອແທນຄວາມຄິດແລະການກະທຳທີ່ຊົ່ວຮ້າຍ.
   ຈ. ພຣະເຢຊູຊົງສະຖິດຢູ່ໃນເຮົາ ເຮົາຖືກຄືງແລ້ວກັບພຣະອົງ ແລະໄດ້ຮັບຣິດອຳນາດທີ່ຈະຂັບຕາມນ້ຳພຣະທັຍ.

9. ພຣະປະສົງ,   ຖວາຍຕົວທັງໝົດ,   ການຈັດແຈ່ງຫ້າງຫາໃຫ້

10. ກ= ຊົງປະທານສິ່ງທີ່ເຮົາຂາດເຂີນ   ຂ= ເພື່ອກະທຳການດີທຸກສິ່ງດ້ວຍກັນ

11. ພຣະເຈົ້າຊົງທຳງານໃນທານ ເພື່ອໃຫ້ທ່ານມີໃຈປາຖນາ ແລະກະທຳໃນສິ່ງທີ່ຊອບພຣະທັຍພຣະອົງ

12. ເປົ້າໝາຍ,   ການຖວາຍຕົວທັງໝົດ,   ການຈັດຫາໃຫ້

13. ພຣະລັກສະນະຂອງພຣະຄຣິດ ( ພຣະບຸດຂອງພຣະເຈົ້າ )

14. ຄຳຕອບຂອງທ່ານເອງ

# ຊີວິດຂອງສາວົກ

## ບົດຮຽນທີ 11

## ຄຳແນະນຳ ການສັຣເສີນພຣະເຈົ້າ

ການສັຣເສີນ ແລະການຂອບພຣະຄຸນ ສອງປະການນີ້ຄືການຖວາຍພຣະກຽດແດ່ພຣະເຈົ້າ ແຕ່ວ່າແຕ່ລະຢ່າງນັ້ນມີເປົ້າຫມາຍທີ່ແຕກຕ່າງກັນ. ການສັຣເສີນຄືການໂຄຣົບນັບຖືພຣະເຈົ້າວ່າພຣະອົງແມ່ນຜູ້ໃດ ຄວາມເປັນພຣະເຈົ້າຂອງພຣະອົງ, ພຣະລັກສະນະຂອງພຣະອົງ, ແລະຄຸນນະທັມຂອງພຣະອົງ. ການຂອບພຣະຄຸນແມ່ນການສະແດງເຖິງຄວາມກະຕັນຍູຕໍ່ພຣະເຈົ້າ ວ່າພຣະອົງຊົງກຳທຳສິ່ງໃດແດ່ແກ່ພວກເຮົາ. ພວກເຮົາຈະເຫັນວ່າການຂອບພຣະຄຸນພຣະເຈົ້ານັ້ນງ່າຍກວ່າການສັຣເສີນພຣະອົງ. ແຕ່ວ່າຖ້າເຮົາສັຣເສີນພຣະອົງໃນເວລານະມັສການວ່າພຣະອົງແມ່ນຜູ້ໃດ ກໍຈະດີຫຼາຍກວ່າການຂອບພຣະຄຸນພຣະອົງວ່າພຣະອົງຊົງໄດ້ກະທຳສິ່ງໃດແດ່ແກ່ເຮົາ. ການຂອບພຣະຄຸນເປັນຜົນໃຫ້ພວກເຮົາສັຣເສີນພຣະອົງ. ພວກເຮົາຄວນຂອບພຣະຄຸນພຣະເຈົ້າໃນທຸກສິ່ງ ແລະສັຣເສີນພຣະອົງຢູ່ສເມີ.

## ເປັນຫຍັງຂ້າພະເຈົ້າຈຶ່ງຕ້ອງສັຣເສີນພຣະຜູ້ເປັນເຈົ້າ?

1. ພຣະເຈົ້າສົມຄວນໄດ້ຮັບການສັຣເສີນຈາກໄພ່ພົນຂອງພຣະອົງ.
   ກ. "ພຣະອົງຊົງບໍຣິສຸດທີ່ປະທັບຢູ່ເທິງພຣະທີ່ນັ່ງ ຊົງເປັນຜູ້ທີ່ພວກອິສຣາເອນພາກັນກ່າວສັຣເສີນ" ( ເພງສັຣເສີນ 22:3 )

2. ການສັຣເສີນເປັນຂອງຖວາຍ ( ເຄື່ອງຖວາຍບູຊາ ) ຂອງເຮົາທີ່ຖວາຍແດ່ພຣະເຈົ້າ.
   ກ. ທ່ານທັງຫຼາຍກໍເປັນເຫມືອນຫີນທີ່ມີຊີວິດຢູ່ ພວກທ່ານຈົ່ງຍອມໃຫ້ພຣະເຈົ້າຊົງກໍ່ຂຶ້ນເປັນພຣະວິຫານຝ່າຍວິນຍານ, ເປັນປະໂຣຫິດບໍຣິສຸດເພື່ອຖວາຍເຄື່ອງບູຊາຝ່າຍວິນຍານ ຊຶ່ງຊອບພຣະທັຍຂອງພຣະເຈົ້າໂດຍທາງພຣະເຢຊູຄຣິດ" ( 1 ເປໂຕ 2:5 )
   ຂ. ເຫດສັນນັ້ນໃຫ້ເຮົາທັງຫຼາຍຖວາຍຄຳສັຣເສີນ ເປັນເຄື່ອງບູຊາແດ່ພຣະເຈົ້າໂດຍຕລອດໄປໃນທາງພຣະອົງນັ້ນຄືຜົນແຫ່ງຣິບສີບປາກທີ່ຍອມຮັບຮູ້ພຣະນາມຂອງພຣະອົງ" ( ເຮັບເຣີ 13:15 )

3. ພຣະເຈົ້າຊົງໂຜດພວກເຮົາ ເພື່ອໃຫ້ເຮົາຖວາຍພຣະກຽດແດ່ພຣະອົງ
   ກ. ພວກເຂົາເປັນໄພ່ພົນທີ່ເຮົາສ້າງດ້ວຍເຮົາເອງ ພວກເຂົາຈະຮ້ອງເພງສັຣເສີນເຮົາ" ( ເອຊາຢາ 43:21 )
   ຂ. ຜູ້ທີ່ຖວາຍບູຊາຂອບພຣະຄຸນ ເປັນຜູ້ທີ່ໃຫ້ກຽດແກ່ເຮົາ ແລະເຮົາຈະຊ່ອຍຄົນທັງປວງທີ່ຟັງຄວາມເຮົາໃຫ້ພົ້ນຢ່າງແນ່ນອນ" ( ເພງສັຣເສີນ 50:23 )

4. ການສັຣເສີນເປັນພຣະບັນຊາຂອງພຣະເຈົ້າ
   ກ. "... ຈົ່ງຖວາຍພຣະກຽດແລະເຫື່ອແຮງແດ່ພຣະເຈົ້າ, ຈົ່ງຖວາຍພຣະກຽດອັນສົມຄວນແກ່ພຣະນາມຂອງພຣະອົງ..." ( 1 ຂ່າວຄາວ 16:28-29 ແລະ ອ່ານ ພຣະທັມເພງສັຣເສີ 147-150 )

5. ການສັຣເສີນ ເປັນການຈັດຕຽມໃນສິ່ງທີ່ພວກເຮົາຈະໄດ້ກະທຳໃນສວັນ ( ພຣະນິມິດ 5:9-14; 7:9-17 )

## ຂ້າພະເຈົ້າຈະສັຣເສີນພຣະເຈົ້າຢ່າງໃດ?

1. ໃຊ້ຄຳເວົ້າຂອງທ່ານເອງໃນການ ຖວາຍກຽດ, ສັຣເສີນ, ໂຄຣົບ ພຣະເຈົ້າ.
2. ໃຊ້ຂໍ້ຄວາມພຣະຄັມພີໃນການອະທິຖານເພື່ອຖວາຍພຣະກຽດແດ່ພຣະເຈົ້າ.

3. ໃຊ້ເນື້ອເພງໃນພຣະຄັມພີ, ເພງນະມັສການ, ຮ້ອງເພງສັຣເສີນ ( ເອເຟໂຊ 5:18-19 )

4. ໃຊ້ເຄື່ອງດົນຕຣີສັຣເສີນພຣະເຈົ້າເປັນຕົ້ນວ່າ ເປັຽໂນ, ກີຕ້າ, ກອງ, ແກ, ແລະພີນ.

5. ເລົ່າເຣື່ອງຄວາມບໍຣິສຸດຂອງພຣະເຈົ້າ ( ສິ່ງນີ້ຈະແຕກຕ່າງກັນກັບການຂອບພຣະຄຸນ ຄືເວົ້າເຖິງການກະທຳຂອງພຣະເຈົ້າໃນອະດີດ ຊຶ່ງເປັນການປະກາດເຖິງຄວາມບໍຣິສຸດສັກສິດຂອງພຣະເຈົ້າ. )

<u>ຂ້າພະເຈົ້າຈະເວົ້າຢ່າງໃດ ເມື່ອຂ້າພະເຈົ້າສັຣເສີນພຣະເຈົ້າ?</u>

1. ອ່ານອອກສຽງ ແລະອະທິຖານຕາມການອະທິຖານໃນການສັຣເສີນແລະໂຄຣົບພຣະເຈົ້າ.
   ກ. ຊຶ່ງຖວາຍພຣະກຽດພຣະເຈົ້າ, ພຣະລັກສະນະຂອງພຣະເຈົ້າ, ຄຸນນະທັມຂອງພຣະເຈົ້າ. ( ເພງສັຣເສີນ 8; 19; 24; 65; 92; 139 )
   ຂ. ຊຶ່ງສັຣເສີນຄວາມດີຂອງພຣະເຈົ້າ ( ເພງສັຣເສີນ 9; 30; 108; 138; ອົບພະຍົບ 15:1-19; 1 ຊາມູເອນ 2:1-10; 1 ຂ່າວຄາວ 29:10-19; ລູກາ 1:46-55 )
   ຄ. ຊົມຊື່ນຍິນດີກັບຄົນອື່ນເພື່ອຖວາຍກຽດແດ່ພຣະອົງ ( ລູກາ 19:37-38; ເອເຟໂຊ 3:20-21; 1 ຕີໂມທຽວ 1:17; ຢູດາ 25; ພຣະນິມິດ 5:9-14; 7:9-12; 15:3-4; 19:1-7 )

2. ໃຊ້ຄຳເວົ້າທີ່ເປັນຄຳສັຣເສີນດັ່ງຕໍ່ໄປນີ້ "ຂ້ານ້ອຍ.....
   ນະມັສການ..... ຍ້ອງຍໍ..... ເທີດທູນ.... ໂຄຣົບ.....
   ຄວາມຍິ່ງໃຫຍ່..... ຖວາຍພຣະກຽດ..... ຖວາຍພອນ..... ຊົມເຊີຍ.... ໃຫ້ກຽດ....

## <u>ສັຣເສີນດ້ວຍຄຳອຸທານ</u>

ອາເລລູຢາ!! ໂຮຊັນນາ!! ສັຣເສີນພຣະເຈົ້າ!!

### ຂ້າພະເຈົ້າຄວນສັຣເສີນພຣະເຈົ້າຍາມໃດ? ທຸກເວລາ
### ຂ້າພະເຈົ້າຄວນສັຣເສີນພຣະເຈົ້າຢູ່ບ່ອນໃດ? ທຸກໆ ບ່ອນ
### ຜູ້ໃດສົມຄວນທີ່ຈະສັຣເສີນພຣະເຈົ້າ? ທຸກຄົນທີ່ມີລົມຫາຍໃຈ

<u>ໝາຍເຫດ:</u>
ບົດຮຽນນີ້ມີທັງໝົດ 30 ບົດ ຊຶ່ງຮຽບຮຽງຈາກ "ບົດຮຽນຊີວິດຢ່າງພຣະອາຈານ" ຖ້າຫາກທ່ານເຫັນວ່າມີປໂຍດຕໍ່ທ່ານແລະຄຣິສຕະຈັກ ຢາກຈະໄດ້ບົດຮຽນທີ່ຍັງເຫລືອ ກະຣຸນາແຈ້ງຄວາມປະສົງໄປທາງອີນເຕີແນັດໄດ້ທຸກເວລາ.

ຮັກແພງໃນອົງພຣະຄຣິດເຈົ້າ